# ການຈັດບູລິມະສິດ

## ນະໂຍບາຍ, ລະບຽບການ ແລະ ການປະຕິບັດຕົວຈິງ

## ກ່ຽວກັບ

## ວຽກງານກວດກູ້ ລບຕ ຢູ່ ສປປ ລາວ

# ສາລະບານ


i. ສັງລວມ
ii. ຄຳສັບຫຍໍ້
1 ຄຳນຳ
2 ເນື້ອໃນສຳຄັນ
3 ວິທີປະຕິບັດ
4 ຂໍ້ຈຳກັດ
5 ນະໂຍບາຍທີ່ກ່ຽວຂ້ອງກັບບູລິມະສິດການກວດກູ້ ລບຕ
5.1 ບູລິມະສິດການກວດກູ້ ລບຕ
5.2 ບູລິມະສິດຂອງລັດຖະບານ
5.3 ການຈັດສັນພື້ນທີ່ການກວດກູ້, ອົງການປະຕິບັດງານກວດກູ້ ລບຕ ແລະ ແຫຼ່ງທຶນ
6 ລະບຽບການຈັດບູລິມະສິດຂອງອົງການປະຕິບັດງານກວດກູ້ ລບຕ
7 ການປະຕິບັດຕົວຈິງກ່ຽວກັບການຈັດບູລິມະສິດຂອງບັນດາຜູ້ມີສ່ວນຮ່ວມ
8 ສິ່ງພົບເຫັນ
9 ພາກແນະນຳ

<u>ເອກະສານຊ້ອນທ້າຍ</u>
ເອກະສານຊ້ອນທ້າຍ 1: ໂຄງຮ່າງການຈັດຕັ້ງຂອງຂະແໜງການແກ້ໄຂບັນຫາ ລບຕ ຢູ່ ສປປ ລາວ
ເອກະສານຊ້ອນທ້າຍ 2: ບຸກຄະລາກອນ/ອົງການຈັດຕັ້ງທີ່ມີການປຶກສາຫາລື
ເອກະສານຊ້ອນ 3: ເອກະສານສຳຄັນ ແລະ ບາງສ່ວນຂອງເອກະສານກ່ຽວກັບການຈັດບູລິມະສິດທີ່ນຳມາປຶກສາຫາລື
ເອກະສານຊ້ອນທ້າຍ 4: ບັນທັດຖານການປະເມີນການຈັດບູລິມະສິດວຽກງານກວດກູ້ ລບຕ (ອົງການປະຕິບັດງານກວດກູ້ ລບຕ ທັງໝົດ)
ເອກະສານຊ້ອນທ້າຍ 5: ສິດ ແລະ ຂອບເຂດຂອງການສຶກສາຄົ້ນຄວ້າ

**ພາກສັງລວມ**

ການຈັດບູລິມະສິດແມ່ນມາດຕະການສໍາຄັນໃນການປະຕິບັດງານໂຄງການກວດກູ້ ລບຕ ຢູ່ໃນທົ່ວໂລກ, ເພາະວ່າຄຸນຄ່າຂອງໂຄງການກໍານົດເປັນເງິນ. ລະບົບການຈັດບູລິມະສິດທີ່ໂປ່ງກໍຄືການເຮັດໃຫ້ເຈຕະນາຂອງໂຄງການມີຄວາມຈະແຈ້ງ, ແລະ ສ້າງບັນທັດຖານການຕົກລົງຮ່ວມກັນເພື່ອຕັດສິນໃຈວ່າ ໜ້າວຽກໃດຈະຕ້ອງປະຕິບັດກ່ອນ ແລະ ໜ້າວຽກໃດສາມາດລໍຖ້າປະຕິບັດຕາມຫຼັງ.

ບົດລາຍງານນີ້ ກວມເອົາລາຍລະອຽດກ່ຽວກັບລະບົບການຈັດບູລິມະສິດການກວດກູ້ ລບຕ ຂອງ ສປປ ລາວ ໃນປັດຈຸບັນ, ລວມທັງນະໂຍບາຍຕ່າງໆທີ່ກ່ຽວຂ້ອງກັບ ລບຕ ແລະ ບັນດານະໂຍບາຍດ້ານການພັດທະນາຂອງລັດຖະບານ, ລະບຽບມາດຕະຖານການປະຕິບັດງານຂອງ ອົງການປະຕິບັດງານກວດກູ້ລະເບີດບໍ່ທັນແຕກ, ແລະ ການປະຕິບັດຕົວຈິງທີ່ພົວພັນເຖິງການຈັດບູລິມະສິດການກວດກູ້ ລບຕ ຂອງອໍານາດການປົກຄອງຂັ້ນແຂວງ, ເມືອງ, ບ້ານ, ຄອບຄົວ ແລະ ບັນດາອົງການກວດກູ້ ລບຕ. ເຫັນວ່າ ນະໂຍບາຍລະດັບຊາດກ່ຽວກັບການຈັດບູລິມະສິດກວດກູ້ ລບຕ ຂອງ ສປປ ລາວ ໃນປັດຈຸບັນ, ຢູ່ຂັ້ນສູນກາງ ໂດຍທົ່ວໄປແລ້ວມີລັກສະນະກວມລວມ, ຍັງຂາດບັນທັດຖານທີ່ເປັນເອກະພາບກັນສໍາລັບຂະແໜງການ, ແຕ່ລະອົງການປະຕິບັດງານ ຕ່າງກໍນໍາໃຊ້ບັນທັດຖານຂອງຕົນເອງເພື່ອຊ່ວຍໃນການຕັດສິນໃຈ ແລະ ການວາງແຜນວຽກຢູ່ຂັ້ນຮາກຖານ.

ບົດລາຍງານສະບັບນີ້ ຍັງໃຫ້ຂໍ້ສັງເກດວ່າ ບັນດານະໂຍບາຍ (ແລະ ບົດບາດທາງການເມືອງ) ມີບົດບາດສໍາຄັນຕໍ່ການຈັດບູລິມະສິດໃນລະດັບມະຫາພາກ, ໃນຂະນະທີ່ລະບຽບການທີ່ເນັ້ນໜັກທາງດ້ານວິຊາການ ແລະ ພາກປະຕິບັດຕົວຈິງ ແມ່ນມີບົດບາດຫຼາຍກວ່າຢູ່ໃນລະດັບຈຸລະພາກ. ພົບວ່າ ນະໂຍບາຍຫຼ້າສຸດທີ່ແນະນໍາກໍຄື ການສົ່ງເສີມກວດກູ້ ລບຕ ຢູ່ໃນພື້ນທີ່ຢືນຢັນວ່າມີ ລບຕ ຕົກຄ້າງ (CHAs) ເທົ່ານັ້ນ, ນີ້ ເປັນຂັ້ນຕອນສໍາຄັນເພື່ອກ້າວໄປສູ່ການຈັດບູລິມະສິດໜ້າວຽກກວດກູ້ໃນລະດັບມະຫາພາກ. ເຖິງຢ່າງໃດກໍຕາມ, ໃນປັດຈຸບັນເຫັນວ່າ ມີກົນໄກໜ້ອຍຫຼາຍທີ່ນໍາໃຊ້ເພື່ອເຊື່ອມໂຍງນະໂຍບາຍການຈັດບູລິມະສິດວຽກງານກວດກູ້ ລບຕ ຢູ່ລະດັບມະຫາພາກ ເຂົ້າກັບລະບຽບການ ແລະ ການປະຕິບັດຕົວຈິງທີ່ເກີດຂຶ້ນຢູ່ລະດັບຈຸລະພາກ. ຕົວຢ່າງ, ຍັງຂາດລະບົບສັງເກດການທີ່ນໍາໃຊ້ເພື່ອສະໜັບສະໜູນການວາງແຜນ, ການຕິດຕາມກວດກາ ຫຼື ການລາຍງານຄວາມຄືບໜ້າກ່ຽວກັບນະໂຍບາຍຂອງລັດຖະບານໃນການສະໜັບສະໜູນການກວດກູ້ ລບຕ ຢູ່ຕາມຈຸດສຸມພັດທະນາຕ່າງໆ. ນອກຈາກນີ້ຄວາມຫຍຸ້ງຍາກໃນການເບິ່ງສໍາເນົາເອກະສານໂຄງການລົງທຶນຂອງລັດ (PIP) ກໍຖືກຍົກຂຶ້ນມາເປັນຄໍາຖາມກ່ຽວກັບຄວາມມີປະໂຫຍດຂອງເອກະສານເຫຼົ່ານັ້ນໃນຖານະທີ່ເປັນເຄື່ອງມືສໍາຄັນສໍາລັບການຈັດບູລິມະສິດ ແລະ ການວາງແຜນວຽກກວດກູ້ ລບຕ.

ການຕັດສິນໃຈທັງໝົດກ່ຽວກັບການຈັດບູລິມະສິດຢູ່ຂັ້ນຈຸລະພາກ ປາກົດວ່າຕັດສິນໃຈໂດຍອົງການປະຕິບັດງານເອງ ໂດຍມີການປ້ອນຂໍ້ມູນຈາກອໍານາດການປົກຄອງຂັ້ນແຂວງ ແລະ ເມືອງ ໜ້ອຍທີ່ສຸດ. ພະນັກງານແຜນການ ແລະ ການລົງທຶນ ຜູ້ທີ່ຖືກຄາດຫວັງວ່າຈະສາມາດໃຫ້ຂໍ້ມູນໄດ້ຢ່າງສ້າງສັນເພື່ອຊ່ວຍໃນການຕັດສິນໃຈກ່ຽວກັບການຈັດບູລິມະສິດໜ້າວຽກກວດກູ້ ລບຕ, ປາກົດວ່າ ພະນັກງານເຫຼົ່ານັ້ນແມ່ນຢູ່ນອກຂະບວນການຫຼັກຂອງການວາງແຜນ ແລະ ຢູ່ນອກຂະບວນການລາຍງານຂອງຂະແໜງແກ້ໄຂບັນຫາ ລບຕ. ການປະກອບສ່ວນຫຼັກຂອງອໍານາດການປົກຄອງຢູ່ຂັ້ນທ້ອງຖິ່ນ ມີພຽງການພິຈາລະນາ, ອະນຸມັດແຜນ

ວຽກຂອງອົງການປະຕິບັດງານເປັນສ່ວນໃຫຍ່. ຢູ່ໃນລະດັບຮາກຖານລຸ່ມລົງໄປກວ່ານັ້ນ ການປ້ອນຂໍ້ມູນທີ່ເປັນທາງການບາງເລັກນ້ອຍຈາກຂັ້ນບ້ານ ຫຼື ຂັ້ນຄອບຄົວ ແມ່ນມີໃຫ້ເຫັນເປັນຫຼັກຖານຢູ່ໃນແຜນວຽກຂອງບັນດາອົງການປະຕິບັດງານກວດກູ້ ລບຕ.

ການແນະນຳທີ່ສຳຄັນຢູ່ໃນບົດລາຍງານນີ້ ຄື: ຫ້ອງການ ຄຊກລ, ໂດຍປຶກສາຫາລືກັບຜູ້ມີບົດບາດໃນການຕັດສິນໃຈທາງການເມືອງ, ບັນດາກະຊວງທີ່ກ່ຽວຂ້ອງ ແລະ ຄູ່ຮ່ວມງານສາກົນ ຄວນພັດທະນານະໂຍບາຍການຈັດບູລິມະສິດກວດກູ້ ລບຕ ຂຶ້ນ ລວມທັງໃຫ້ນິຍາມຈະແຈ້ງກ່ຽວກັບບູລິມະສິດຂອງຂະແໜງແກ້ໄຂບັນຫາ ລບຕ. ຄວນສ້າງເອກະສານຕິດຕາມບັນທັດຖານ ເພື່ອກຳນົດ (ແລະ ອະທິບາຍ) ບູລິມະສິດຕ່າງໆເຫຼົ່ານັ້ນ, ແລະ ກຳນົດຕົວຊີ້ວັດ ເພື່ອວັດແທກຄວາມຄືບໜ້າຂອງມາດຕະຖານດັ່ງກ່າວໃນແຕ່ລະໄລຍະ.

## ຄໍາສັບຫຍໍ້

| | |
|---|---|
| CCM | ສົນທິສັນຍາວ່າດ້ວຍການເກືອດຫ້າມລະເບີດລູກຫວ່ານ |
| CHA | ພື້ນທີ່ຢືນຢັນວ່າມີລະເບີດບໍ່ທັນແຕກ (ລບຕ) ຕົກຄ້າງ |
| DfID | ກົມພັດທະນາລະຫວ່າງຊາດ |
| FDA | ຈຸດສຸມພັດທະນາ (ຈຸດສຸມ) |
| GICHD | ສູນເກັບກູ້ລະເບີດເພື່ອມະນຸດສະທໍາສາກົນ ເຈນີວາ |
| GOL | ລັດຖະບານແຫ່ງ ສປປ ລາວ |
| IMSMA | ລະບົບຄຸ້ມຄອງຖານຂໍ້ມູນດ້ານລະເບີດບໍ່ທັນແຕກ |
| Lao PDR | ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ |
| MAG | ອົງການເກັບກູ້ລະເບີດ ແມັກ |
| MLSW | ກະຊວງແຮງງານ ແລະ ສະຫວັດດີການສັງຄົມ |
| MOU | ບົດບັນທຶກຄວາມເຂົ້າໃຈ |
| NPA | ອົງການຊ່ວຍເຫຼືອຂອງປະຊາຊົນ ນ໋ອກແວຣ໌ |
| NRA | ຄະນະກໍາມະນຄຸ້ມຄອງແຫ່ງຊາດ ເພື່ອການແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ ສປປ ລາວ (ຄຊກລ) |
| NSEDP | ແຜນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ |
| NS | ມາດຕະຖານແຫ່ງຊາດ |
| PIP | ໂຄງການລົງທຶນຂອງລັດ |
| RD & PE | ຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ |
| SOPs | ລະບຽບມາດຕະຖານການປະຕິບັດງານ |
| TS | ການສໍາຫຼວດດ້ານວິຊາການ |
| UNDP | ອົງການສະຫະປະຊາຊາດເພື່ອການພັດທະນາ |
| UXO | ລະເບີດບໍ່ທັນແຕກ |
| UXO Lao | ໂຄງການເກັບກູ້ລະເບີດແຫ່ງຊາດ |

## 1. ຄຳນຳ

ການຈັດບູລິມະສິດ ເປັນມາດຕະການທີ່ສຳຄັນໃນທາງປະຕິບັດສຳລັບວຽກງານແກ້ໄຂບັນຫາລະເບີດບໍ່ທັນແຕກໃນຂອບເຂດທົ່ວໂລກ, ເພາະວ່າມັນກຳນົດຄຸນຄ່າຂອງໂຄງການເປັນເງິນ.[1] ລະບົບການຈັດບູລິມະສິດທີ່ມີຄວາມໂປ່ງໃສ ເຮັດໃຫ້ເຈຕະນາຂອງໂຄງການມີຄວາມຈະແຈ້ງ, ແລະ ສ້າງບັນທັດຖານການຕົກລົງເຫັນດີເພື່ອຕັດສິນໃຈວ່າ ໜ້າວຽກໃດຈະຕ້ອງເຮັດກ່ອນ ແລະ ໜ້າວຽກໃດສາມາດເຮັດຕາມຫຼັງ. ນະໂຍບາຍຫຼ້າສຸດທີ່ຖືກແນະນຳກໍຄື ສົ່ງເສີມການກວດກູ້ ລບຕ ພຽງແຕ່ຢູ່ໃນພື້ນທີ່ຢືນຢັນວ່າມີ ລບຕ ຕົກຄ້າງ (CHAs) ເທົ່ານ້ັນ ເປັນຂັ້ນຕອນທີ່ສຳຄັນເພື່ອກ້າວໄປເຖິງການຈັດບູລິມະສິດໜ້າວຽກໃນລະດັບມະຫາພາກ. ນອກຈາກນີ້, ບັນດານະໂຍບາຍກ່ຽວກັບການຈັດບູລິມະສິດກວດກູ້ ລບຕ ຂອງ ສປປ ລາວ ແມ່ນມີລັກສະນະກວມລວມ ແລະ ປາສະຈາກເຈຕະນາທີ່ຈະແຈ້ງ, ເຊິ່ງເປັນຜົນຕໍ່ຄວາມເໝາະສົມຂອງລະບຽບການຈັດບູລິມະສິດ ແລະ ການປະຕິບັດຕົວຈິງ.

ບົດລາຍງານນີ້ ສັງລວມເອົາຜົນຂອງການສຶກສາຄົ້ນຄ້ວາບັນດານະໂຍບາຍກ່ຽວກັບການຈັດບູລິມະສິດ, ລະບຽບການ ແລະ ການປະຕິບັດຕົວຈິງຂອງການກວດກູ້ ລບຕ ຢູ່ ສປປ ລາວ ທີ່ດຳເນີນມາເປັນເວລາ 22 ວັນ. ບົດລາຍງານ ຍັງກວມເອົາລາຍລະອຽດ ນະໂຍບາຍ, ລະບຽບການ ແລະ ການປະຕິບັດຕົວຈິງໃນປັດຈຸບັນ ກ່ຽວກັບການຈັດບູລິມະສິດໜ້າວຽກກວດກູ້ ລບຕ, ແລະ ຊີ້ໃຫ້ເຫັນວ່າ ປັດຈຸບັນ ບັນດາລະບຽບການເຫຼົ່ານັ້ນຖືກເຂົ້າໃຈ ແລະ ຖືກຈັດຕັ້ງປະຕິບັດຄືແນວໃດຢູ່ຂັ້ນສູນກາງ, ຂັ້ນແຂວງ, ເມືອງ ແລະ ບ້ານ. ເຈຕະນາ ກໍເພື່ອຊີ້ໃຫ້ເຫັນເຖິງສະພາບການໃນປັດຈຸບັນໃນການຈັດບູລິມະສິດ ຫຼາຍກວ່າເປັນການທົບທວນ ຫຼື ຕີລາຄາ. ມັນໄດ້ນຳສະເໜີສິ່ງທີ່ພົບເຫັນ ແລະ ຂໍ້ແນະນຳທີ່ຈຳເປັນຈຳນວນໜຶ່ງເພື່ອການພິຈາລະນາຂອງ ຄຊກລ ໃນອະນາຄົດ. ການສະຫຼຸບ ແລະ ຂໍ້ແນະນຳຕ່າງໆ ຈະສະໜອງຂໍ້ມູນທີ່ມີແນວໂນ້ມບົ່ງບອກວ່າ ລະບົບການຈັດບູລິມະສິດໃໝ່ກຳລັງຈະຖືກພັດທະນາຂຶ້ນໂດຍ ຄຊກລ ແລະ ອົງການ ສປຊ ເພື່ອການພັດທະນາ.

ການສຶກສາກ່ຽວກັບການຈັດບູລິມະສິດການກວດກູ້ ລບຕ ຢູ່ ສປປ ລາວ ໃນຄັ້ງນີ້, ແມ່ນຢູ່ໃນຊ່ວງເວລາທີ່ ເໝາະສົມດ້ວຍເຫດຜົນສອງຢ່າງ ຄື: ທຳອິດ, ການຈັດບູລິມະສິດກວດກູ້ ລບຕ ກຳລັງມີຄວາມສຳຄັນເພີ່ມຂຶ້ນເລື້ອຍໆ ເນື່ອງຈາກວ່າຈຳນວນພື້ນທີ່ຢືນຢັນວ່າມີ ລບຕ ຕົກຄ້າງໄດ້ເພີ່ມຂຶ້ນຢ່າງໄວວານັບແຕ່ມີການຮັບຮອງລະບຽບການສຳຫຼວດ ລບຕ ທີ່ອີງໃສ່ຫຼັກຖານໃນຕົ້ນປີ 2015 ເປັນຕົ້ນມາ. ຮອດວັນທີ 30 ມິຖຸນາ 2016 ຈຳນວນພື້ນທີ່ຢືນຢັນວ່າມີ ລບຕ ຕົກຄ້າງມີເຖິງ 4,653 ແຫ່ງ, ກວມເອົາເນື້ອທີ່ 24,708 ເຮັກຕາ ທີ່ບັນທຶກໄວ້ໃນຖານຂໍ້ມູນຄຸ້ມຄອງລະເບີດບໍ່ທັນແຕກ (IMSMA) ຢູ່ໃນ 5 ອົງການປະຕິບັດງານກວດກູ້ ລບຕ ເພື່ອມະນຸດສະທຳ.[2] ຈຳນວນ ພື້ນທີ່ຢືນຢັນວ່າມີ ລບຕ ຕົກຄ້າງ ໃໝ່ ຄາດວ່າຈະສືບຕໍ່ເພີ່ມຂຶ້ນເລື້ອຍໆເນື່ອງຈາກການສຳຫຼວດດ້ານວິຊາການແມ່ນຈະດຳເນີນໄປໃນທົ່ວປະເທດ ໃນໄລຍະ 4 - 5 ປີ ຂ້າງໜ້າ ແລະ ຮູ້ດີວ່າການກວດກູ້ຈະບໍ່ສາມາດຮັກສາຈັງຫວະເດີມຂອງມັນໄວ້. ເພາະສະນັ້ນ, ເພື່ອຮັບມືຢ່າງມີປະສິດທິຜົນກັບຈຳນວນໜ້າວຽກກວດກູ້ທີ່ເພີ່ມຂຶ້ນນັ້ນ, ຂະແໜງແກ້ໄຂບັນຫາ ລບຕ ຈຳເປັນຕ້ອງຈັດບູລິມະສິດໜ້າວຽກກວດກູ້ ໂດຍຈັດເປັນປະເພດ ແລະ ເປັນສະຖານທີ່ ແລະ

---

[1] ສູນກາງເກັບກູ້ລະເບີດເພື່ອມະນຸດສະທຳສາກົນ ເຈນີວາ, ການຈັດບູລິມະສິດຂອງຂະແໜງແກ້ໄຂບັນຫາ ລບຕ. ນະໂຍບາຍຫຍໍ້ ເລກທີ.1, ພະຈິກ 2011, ໜ້າ.1.

[2] ຖານຂໍ້ມູນ ອິມສະມາ, ສະໜອງໃຫ້ໂດຍໜ່ວຍງານຄຸ້ມຄອງຖານຂໍ້ມູນຂອງ ຄຊກລ ຄັ້ງວັນທີ 10 ສິງຫາ 2016. ມີຂໍ້ມູນເພີ້ມຕື່ມຈາກຖານຂໍ້ມູນດັ່ງກ່າວຊີ້ ບອກວ່າ ພື້ນທີ່ທີ່ຢືນຢັນວ່າມີ ລບຕ ຈຳນວນ 75 ພື້ນທີ ໄດ້ຮັບການກວດກູ້ໃນກາງປີ 2016 (ໜ້ອຍກວ່າພື້ນທີ່ທີ່ຢືນຢັນວ່າມີ ລບຕ ທີ່ກຳນົດໄດ້ທັງໝົດ 1.6 ສ່ວນຮ້ອຍ). ທີ່ປຶກສາດ້ານວິຊາການຂອງ ກຸ່ມບໍລິສັດສະເຕີລິງສາກົນ ແນະນຳວ່າ ຈຳນວນ CHAs ຕົວຈິງອາດຈະຕ່ຳກວ່ານີ້, ເນື່ອງຈາກຄວາມເຂົ້າໃຈຜິດຂອງ ບາງອົງການປະຕິບັດງານກ່ຽວກັບຄວາມໝາຍຂອງຄຳວ່າ “ **ປິດ** ” ພື້ນທີ່ງຢືນຢັນວ່າມີ ລບຕ. ບາງອົງການບັນທຶກວ່າ “ **ການປິດ** ພື້ນທີ່ງຢືນຢັນວ່າມີ ລບຕ ແມ່ນຫຼັງຈາກສຳເລັດການສຳຫຼວດດ້ານວິຊາການ, ຂະນະທີ່ບາງອົງການກໍບັນທຶກຢ່າງຖືກຕ້ອງວ່າ " ການປິດ " ພື້ນທີ່ງຢືນຢັນວ່າມີ ລບຕ ແມ່ນພາຍຫຼັງທີ່ກວດ ກູ້ແລ້ວເທົ່າ ນັ້ນ. ຄຊກລ ແລະ ສະເຕີລິງ ກຳລັງດຳເນີນການເພື່ອແກ້ໄຂຂໍ້ມູນທີ່ຜິດພາດນີ້.

ຕ້ອງຮັບປະກັນວ່າ ແຕ່ລະໜ້າວຽກເຫຼົ່ານັ້ນໄດ້ຖືກຈັດບູລິມະສິດເຂົ້າໃນແຜນວຽກປະຈຳປີຂອງແຕ່ລະອົງການປະຕິບັດງານ.

ເຫດຜົນທີສອງ, ຄະນະກຳມະການຄຸ້ມຄອງແຫ່ງຊາດ (ຄຊກລ) ແລະ ອົງການ ສປຊ ເພື່ອການພັດທະນາ (UNDP) ຈະອອກແບບລະບົບການຈັດບູລິມະສິດໃໝ່ສຳລັບໜ້າວຽກກວດກູ້ ລບຕ. ລາຍລະອຽດ ແລະ ຂໍ້ສະຫຼຸບຂອງການສຶກສາຄົ້ນຄວ້າໃນຄັ້ງນີ້ ມີເປົ້າໝາຍເພື່ອແຈ້ງໃຫ້ຮູ້ກ່ຽວກັບການກຳນົດລະບົບໃໝ່ກ່ຽວກັບການຈັດບູລິມະສິດ ໂດຍໃຫ້ທັດສະນະວິໄສເຖິງສະພາບແວດລ້ອມໃນການຈັດບູລິມະສິດໃນປັດຈຸບັນ, ລວມທັງຈຸດດີ ແລະ ຈຸດອ່ອນ. ເປັນໄປໄດ້ວ່າ ຊ່ອງຫວ່າງຕ່າງໆທີ່ມີໃນລະບົບປັດຈຸບັນຈະຖືກປ່ຽນໂອນໄປສູ່ລະບົບໃໝ່, ນອກຈາກວ່າພວກມັນຫາກໄດ້ຮັບການພິສູດ, ປຶກສາຫາລື ແລະ ເຫັນດີຮ່ວມກັນສຳລັບການແກ້ໄຂ.

ພາລະກິດສຶກສາຄົ້ນຄວ້າໃນຄັ້ງນີ້ ຖືກມອບໝາຍໂດຍສູນກາງເກັບກູ້ລະເບີດເພື່ອມະນຸດສະທຳສາກົນ ເຈນີວາ (GICHD) ໃນຖານະເປັນສ່ວນໜຶ່ງຂອງໂຄງການສ້າງຄວາມອາດສາມາດໃຫ້ແກ່ຂະແໜງແກ້ໄຂບັນຫາ ລບຕ ທີ່ໃຫ້ທຶນໂດຍກົມພັດທະນາລະຫວ່າງຊາດ (DfiD), ຈັດຕັ້ງປະຕິບັດໂດຍອົງການຊ່ວຍເຫຼືອຂອງປະຊາຊົນ ນ້ອກແວຣ໌ ແລະ GICHD. ການຄົ້ນຄວ້າສ່ວນໃຫຍ່ ປະຕິບັດໃນລະຫວ່າງເດືອນກໍລະກົດ ຫາເດືອນກັນຍາ 2016.

## 2. ເນື້ໃນສຳຄັນ

ສູນກາງເກັບກູ້ລະເບີດເພື່ອມະນຸດສະທຳສາກົນ ເຈນີວາ ອະທິບາຍການຈັດບູລິມະສິດວ່າ ເປັນລະບົບໜຶ່ງຂອງຂະບວນການຕັດສິນໃຈ ທີ່ຮຽກຮ້ອງການມີສ່ວນຮ່ວມທາງພາກວິຊາການ ແລະ ພາກການເມືອງ.[3] ບົດລາຍງານນີ້ນຳສະເໜີການຈັດບູລິມະສິດຢູ່ໃນສອງລະດັບ ຄື:

- **ການຈັດບູລິມະສິດ (ໃຫຍ່) ລະດັບມະຫາພາກ**: ໄດ້ແກ່ການຈັດສັນ:
  - ພື້ນທີ່ທົ່ວໄປທີ່ຈະຖືກກວດກູ້, ຕົວຢ່າງ: ຂັ້ນແຂວງ, ເມືອງ, ຊຸມຊົນ, ພື້ນທີ່ຢືນຢັນວ່າມີ ລບຕ ຕົກຄ້າງ;
  - ແຫຼ່ງທຶນ; ແລະ
  - ອົງການກວດກູ້ ລບຕ.
- **ການຈັດບູລິມະສິດ (ນ້ອຍ) ລະດັບຈຸນລະພາກ**:
  - ການຈັດປະເພດໜ້າວຽກເປັນປະເພດ, ເປັນສະຖານທີ່, ເປັນບູລິມະສິດ ສູງ, ກາງ, ຕ່ຳ; ແລະ
  - ການລວມເອົາບັນດາໜ້າວຽກບູລິມະສິດເຫຼົ່ານັ້ນເຂົ້າໃນແຜນວຽກຫຼາຍປີ, ແຜນວຽກປະຈຳປີ ແລະ ແຜນວຽກປະຈຳເດືອນ.

ບົດລາຍງານໃຫ້ຄວາມໝາຍຄວາມສຳຄັນຕໍ່ບັນດານະໂຍບາຍຕ່າງໆ ເຊັ່ນ: ສົນທິສັນຍາສາກົນທີ່ກ່ຽວຂ້ອງ, ແລະ ຍຸດທະສາດລະດັບຊາດ, ມາດຕະຖານ ແລະ ແຜນການ. ມັນໄດ້ໃຫ້ນິຍາມລະບຽບການຕ່າງໆເຫຼົ່ານັ້ນວ່າ ເປັນພຽງແຕ່ທິດສະດີທີ່ມີຢູ່ໃນລະບຽບມາດຕະຖານການປະຕິບັດງານ (SOPs) ຂອງແຕ່ລະອົງການປະຕິບັດງານກວດກູ້ ລບຕ ເທົ່ານັ້ນ, ການປະຕິບັດຕົວຈິງເທົ່ານັ້ນຄືຄວາມເປັນຈິງທີ່ໄດ້ຈັດຕັ້ງປະຕິບັດຢູ່ຂັ້ນແຂວງ, ເມືອງ, ບ້ານ ແລະ ຂັ້ນຄອບຄົວ. ໂດຍທົ່ວໄປແລ້ວ ບັນດານະໂຍບາຍ (ແລະ ບົດບາດທາງການເມືອງ) ແມ່ນມີບົດບາດສຳຄັນໃນການຈັດບູລິມະສິດຢູ່ລະດັບມະຫາພາກ, ຂະນະທີ່ບັນດາລະບຽບການທີ່ເນັ້ນໜັກທາງດ້ານວິຊາການ ແລະ ພາກປະຕິບັດຕົວຈິງ ແມ່ນມີອິດທິພົນແຂງແຮງຢູ່ໃນລະດັບຈຸລະພາກ.

---

[3] ສູນກາງເກັບກູ້ລະເບີດເພື່ອມະນຸດສະທຳສາກົນ ເຈນີວາ, ການຈັດບູລິມະສິດຢູ່ຂະແໜງແກ້ໄຂບັນຫາ ລບຕ. ຄວາມຄິດພື້ນຖານ ແລະ ຄຳນຳ, ນະໂຍ
ບາຍຫຍໍ້ ເລກທີ. 1, ພະຈິກ 2011 ໜ້າ 1.

## 3. ວິທີປະຕິບັດ

ການສຶກສາຄົ້ນຄວ້າດໍາເນີນໄປເປັນເວລາ 22 ວັນ ໂດຍທີ່ປຶກສາຂອງສູນກາງເກັບກູ້ລະເບີດເພື່ອມະນຸດສະທໍາສາກົນ ເຈນີວາ ແລະ ນັກວິຊາການໜຶ່ງທ່ານຈາກໜ່ວຍງານກຸ່ມວິຊາການເກັບກູ້ ລບຕ ຫ້ອງການ ຄຊກລ. ປະກອບດ້ວຍ 3 ຂັ້ນຕອນ ຄື: ຂັ້ນຕອນທີໜຶ່ງ: ປະກອບດ້ວຍການເກັບກໍາຂໍ້ມູນຢູ່ຂັ້ນສູນກາງ. ການອະທິບາຍກ່ຽວກັບສະພາບແວດລ້ອມຂອງນະໂຍບາຍ, ພ້ອມດ້ວຍນະໂຍບາຍ ແລະ ເອກະສານລະບຽບການທີ່ສໍາຄັນຕ່າງໆກ່ຽວກັບການພັດທະນາເສດຖະກິດ-ສັງຄົມ, ການພັດທະນາຊົນນະບົດ ແລະ ຂະແໜງແກ້ໄຂບັນຫາ ລບຕ. ບັນລຸການວິເຄາະຂໍ້ມູນທີ່ເກັບກໍາໄດ້ຈາກຫ້ອງການທີ່ກ່ຽວຂ້ອງຂອງລັດຖະບານ ແລະ ອົງການປະຕິບັດງານກວດກູ້ ລບຕ ເພື່ອມະນຸດສະທໍາ. ບັນດາອົງການທີ່ກ່ຽວຂ້ອງຂອງລັດຖະບານ ລວມມີຫ້ອງການ ຄຊກລ, ກະຊວງແຜນການ ແລະ ການລົງທຶນ, ແລະ ຄະນະກໍາມະການແຫ່ງຊາດເພື່ອການພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ.

ຂັ້ນຕອນທີສອງ ກ່ຽວກັບການຢ້ຽມຢາມສະໜາມຢູ່ແຂວງທີ່ກ່ຽວຂ້ອງ. ທີມງານໄດ້ລົງຢ້ຽມຢາມແຂວງຊຽງຂວາງ ແລະ ແຂວງສະຫວັນນະເຂດ ເພື່ອເກັບກໍາຂໍ້ມູນກ່ຽວກັບລະບຽບການຈັດບູລິມະສິດກວດກູ້ ລບຕ ແລະ ການປະຕິບັດຕົວຈິງໃນຂັ້ນແຂວງ ແລະ/ຫຼື ຂັ້ນເມືອງ, ບ້ານ ແລະ ລະດັບຄອບຄົວ. ສອງແຂວງເຫຼົ່ານີ້ເປັນແຂວງທີ່ມີລະເບີດຕົກຄ້າງຫຼາຍທີ່ສຸດ ຢູ່ພາກເໜືອ ແລະ ພາກໃຕ້ຂອງ ສປປ ລາວ. ຢ່າງໜ້ອຍມີສອງອົງການປະຕິບັດງານກວດກູ້ ລບຕ ເພື່ອມະນຸດສະທໍາທີ່ເຮັດວຽກຢູ່ແຕ່ລະແຂວງເຫຼົ່ານີ້, ເຊິ່ງເປັນໂອກາດດີສໍາລັບທີມງານໃນການເກັບຂໍ້ມູນທີ່ຫຼາກຫຼາຍຢູ່ຂັ້ນແຂວງພາຍໃນເວລາອັນສັ້ນ. ທີມງານ ໄດ້ພົບປະກັບພະນັກງານແຂວງ ແລະ ເມືອງ ຈາກຫ້ອງການປົກຄອງເມືອງ, ຫ້ອງການພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ, ແລະ ຫ້ອງການແຜນການ ແລະ ການລົງທຶນ. ການຄັດເລືອກເມືອງ ແລະ ບ້ານທີ່ລົງຢ້ຽມຢາມ ແມ່ນຄັດເລືອກບົນພື້ນຖານຄວາມເປັນໄປໄດ້ສໍາລັບການເດີນທາງໃນລະດູຝົນ.ບັນດາບ້ານທັງໝົດ (ນອກຈາກບ້ານໜຶ່ງ) □□□ມີປະສົບການກ່ຽວກັບການກວດກູ້ ລບຕ ໃນບາງລະດັບພາຍໃນເວລາ 18 ເດືອນຜ່ານມາ (ເດືອນມັງກອນ 2015 - ເດືອນມິຖຸນາ 2016). ບ້ານເຫຼົ່ານີ້ ເປັນບ້ານທີ່ນອນຢູ່ໃນ ແລະ ຢູ່ນອກຈຸດສຸມພັດທະນາ (FDAs) ຂອງລັດຖະບານ. ຢູ່ແຂວງຊຽງຂວາງ ທີມງານໄດ້ລົງຢ້ຽມຢາມ 4 ບ້ານ ຢູ່ເມືອງຄູນ ຮ່ວມກັບພະນັກງານຂອງອົງການ ແມັກ, ແລະ 2 ບ້ານ ຢູ່ເມືອງຄໍາ ຮ່ວມກັບທີມງານຂອງ ຄກລ. ຢູ່ແຂວງສະຫວັນນະເຂດ ທີມງານໄດ້ລົງຢ້ຽມຢາມ 2 ບ້ານ ຢູ່ເມືອງເຊໂປນ ຮ່ວມກັບທີມງານຂອງອົງການ ເຮໂລ ທຣາສ໌ ແລະ 2 ບ້ານຢູ່ເມືອງພິນ ຮ່ວມກັບທີມງານ ຄກລ. ທີມງານ ໄດ້ພົບປະກັບອໍານາດການປົກຄອງບ້ານ ແລະ ເຈົ້າຂອງດິນ ເພື່ອຖາມຄວາມຮູ້ສຶກຕໍ່ການມີສ່ວນຮ່ວມຂອງພວກເຂົາເຈົ້າໃນການຈັດບູລິມະສິດການກວດກູ້ ລບຕ.

ຂັ້ນຕອນທີສາມ ກ່ຽວຂ້ອງກັບການວິເຄາະຂໍ້ມູນທີ່ເກັບກໍາໄດ້ ແລະ ຂຽນບົດລາຍງານ. ຂໍ້ມູນເພີ້ມຕື່ມ ແລະ/ຫຼື ການໃຫ້ຄວາມກະຈ່າງແຈ້ງແມ່ນໄດ້ຮັບການສະເໜີຈາກຫ້ອງການ ຄຊກລ ແລະ ຄກລ. ບົດລາຍງານສຸດທ້າຍຈະຖືກແປເປັນພາສາລາວ. ລາຍຊື່ບຸກຄົນ ແລະ ອົງການຈັດຕັ້ງທີ່ທີມງານໄດ້ປຶກສາຫາລື ມີຢູ່ໃນເອກະສານຊ້ອນທ້າຍ 2.

## 4. ຂໍ້ຈໍາກັດ

ການສຶກສາຄົ້ນຄວ້າພົບພໍ້ກັບຂໍ້ຈໍາກັດບາງຢ່າງ ເນື່ອງຈາກວ່າ: 1) ໄລຍະສັ້ນ; 2) ສາມາດກວດສອບໜ້າວຽກກວດກູ້ໃນອັດຕາສ່ວນໜ້ອຍ; 3) ໃຊ້ເວລາດົນໃນການໄດ້ຮັບຂໍ້ມູນກ່ຽວຂ້ອງຈາກຫ້ອງການຕ່າງໆຂອງລັດຖະບານ; 4) ບັນດາຜູ້ມີສ່ວນຮ່ວມລະດັບຊາດ ແລະ ສາ

ກົນ ມັກສົນທະນາກ່ຽວກັບແຜນການໃນອະນາຄົດຫຼາຍກວ່າທີ່ຈະລົມກັນກ່ຽວກັບລະບົບປັດຈຸບັນ ແລະ ການຈັດຕັ້ງປະຕິບັດຜ່ານມາ; ແລະ 5) ການຂ້າມຜ່ານຂອງຂະແໜງແກ້ໄຂບັນຫາ ລບຕ ຕາມການຈັດສັນຂອງລັດຖະບານ.[4]

ເນື່ອງຈາກຂໍ້ຈຳກັດທາງດ້ານເວລາ,ທີມງານ ໄດ້ໃຊ້ເວລາຈຳກັດທີ່ສຸດພົບປະກັບອຳນາດການປົກຄອງແຂວງ ແລະ ເມືອງ. ເຖິງວ່າມີເວລາຈຳກັດກໍ່ຕາມ, ທີມງານຂອງພວກຂ້າພະເຈົ້າໄດ້ຮັບການແຈ້ງວ່າ ການຕັດສິນໃຈກ່ຽວກັບການຈັດບູລິມະສິດຢູ່ໃນລະດັບຈຸລະພາກ ສ່ວນໃຫຍ່ແມ່ນຕັດສິນໃຈໂດຍພະນັກງານຢູ່ໃນລະດັບເມືອງ ແລະ ແຂວງ. ນອກນີ້, ແມ່ນມີເປີເຊັນໜ້ອຍທີ່ທີມງານພວກຂ້າພະເຈົ້າ ສາມາດກວດສອບລາຍລະອຽດຂອງໜ້າວຽກກວດກູ້ໄດ້ ຄື: ມີ 11 ສະໜາມໃນຈຳນວນ 1,965 ສະໜາມທີ່ກວດກູ້ແລ້ວແຕ່ເດືອນມັງກອນ 2015 ເປັນຕົ້ນມາ (0.6%), 10 ບ້ານໃນຈຳນວນ 656 ບ້ານ (1.5%), 4 ເມືອງໃນຈຳນວນ 52 ເມືອງ (8%), ແລະ 2 ໃນ 10 ແຂວງ (20%). ຂະໜາດຂອງຕົວຢ່າງນີ້ ຊີ້ໃຫ້ເຫັນວ່າລາຍລະອຽດຂອງການປະຕິບັດຕົວຈິງໃນການຈັດບູລິມະສິດແມ່ນມີຄຸນນະພາບທີ່ສຸດ.

ມີເອກະສານພາສາລາວ ແລະ ພາສາອັງກິດພຽງຈຳນວນໜ້ອຍເທົ່ານັ້ນທີ່ໄດ້ຮັບທີ່ສະແດງໃຫ້ເຫັນເຖິງນະໂຍບາຍ ແລະ ລະບົບ, ລະບຽບການທາງການ. ຂະບວນການຄຸ້ມຄອງຖານຂໍ້ມູນ (ການສະເໜີ, ຂໍ້ກຳນົດ ແລະ ການໄດ້ຮັບຂໍ້ມູນ) ປາກົດວ່າຍັງບໍ່ສະດວກໃນທາງປະຕິບັດຕົວຈິງຢູ່ໃນຫຼາຍອົງການ. ມີໂອກາດຫຼາຍກວ່າໜຶ່ງຄັ້ງ ທີ່ທີມງານຂອງພວກຂ້າພະເຈົ້າໄດ້ຢຸດເຊົາຕິດຕາມເອົາຂໍ້ມູນ ຫຼື ເອກະສານນະໂຍບາຍທີ່ໄດ້ສະເໜີຂໍຫຼາຍຄັ້ງແຕ່ບໍ່ສຳເລັດ. ສິ່ງທີ່ມັກລົມກັນສ່ວນຫຼາຍແມ່ນລົມກ່ຽວກັບແຜນໃນອະນາຄົດຫຼາຍກວ່າການລົມກັນກ່ຽວກັບຜົນສຳເລັດທີ່ຜ່ານມາ ບາງທີມັນອາດສະທ້ອນໃຫ້ເຫັນເຖິງຄວາມສຳພັນທີ່ບໍ່ສະດວກຕໍ່ກັບຖານຂໍ້ມູນ, ແລະ ຄວາມຈິງກໍ່ຄື ການນຳໃຊ້ຂໍ້ມູນເພື່ອເປັນຫຼັກຖານສຳລັບນະໂຍບາຍ ແລະ/ຫຼື ແຜນວຽກນັ້ນແມ່ນຍັງບໍ່ຖືກຄວບຄຸມຢ່າງຮັດກຸມ.

ສຸດທ້າຍ, ການສຶກສາຄົ້ນຄວ້າກ່ຽວກັບການຈັດບູລິມະສິດການກວດກູ້ ລບຕ ໃນຄັ້ງນີ້ແມ່ນດຳເນີນໄປໃນເວລາທີ່ສະຖາບັນພາຍໃນຂອງລັດຖະບານກຳລັງມີການປ່ຽນແປງ. ຂະແໜງແກ້ໄຂບັນຫາ ລບຕ ກຳລັງຢູ່ໃນຂະບວນການຖ່າຍໂອນຈາກຄະນະກຳມະການແຫ່ງຊາດເພື່ອການພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ໄປຂຶ້ນກັບກະຊວງແຮງງານ ແລະ ສະຫວັດດີການສັງຄົມ (ກຮສສ). ຄະນະບໍລິຫານຫ້ອງການ ຄຊກລ ແນະນຳວ່າ ການປະຕິບັດວຽກງານໃນແຕ່ລະວັນຢູ່ຂັ້ນສູນກາງໄດ້ສະທ້ອນໃຫ້ເຫັນເຖິງການປ່ຽນແປງໃໝ່ນີ້ແລ້ວ, ແຕ່ວ່າ ການມອບຮັບຄວາມຮັບຜິດຊອບຢ່າງເປັນທາງການຍັງບໍ່ທັນເກີດຂຶ້ນເທື່ອ. ການປ່ຽນແປງດັ່ງກ່າວ, ຢູ່ຂັ້ນແຂວງ ແລະ ເມືອງ ມີຄວາມຈະແຈ້ງໜ້ອຍ. ຄະນະບໍລິຫານຫ້ອງການ ຄຊກລ ຍັງໄດ້ແນະນຳອີກວ່າ ບາງແຂວງແມ່ນໄດ້ໂອນໄປຂຶ້ນກັບ ພະແນກແຮງງານ ແລະ ສະຫວັດດີການສັງຄົມແລ້ວ ແຕ່ເຖິງຢ່າງໃດກໍ່ຕາມ ຍັງບໍ່ມີການໂອນເກີດຂຶ້ນຢູ່ແຂວງ ແລະ ເມືອງທີ່ທີມງານພວກຂ້າພະເຈົ້າລົງຢ້ຽມຢາມ. ໃນເວລາມີການຖ່າຍໂອນຈະເຮັດໃຫ້ມີໂຄງຮ່າງການຈັດຕັ້ງໃໝ່ເກີດຂຶ້ນສຳລັບຂະແໜງແກ້ໄຂບັນຫາ ລບຕ ຊຶ່ງໃນບໍ່ຊ້ານີ້ໂຄງຮ່າງການຈັດຕັ້ງປັດຈຸບັນກໍ່ຈະລ້າສະໄໝ ຫຼັງຈາກການຖ່າຍໂອນຢ່າງເປັນທາງການຈາກກະຊວງໜຶ່ງໄປອີກກະຊວງໜຶ່ງເກີດຂຶ້ນ, ເພາະວ່າ ອີງຕາມຮອງຫົວໜ້າຫ້ອງການ ຄຊກລ ທ່ານໜຶ່ງກ່າວວ່າ, ມີແຜນຈະ

[4] ຄຊກລ ແລະ ຄກລ ຖືກຖ່າຍໂອນຢ່າງເປັນທາງການຈາກຄະນະກຳມະການແຫ່ງຊາດ ເພື່ອການພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ໄປຂຶ້ນກັບກະຊວງແຮງງານ ແລະ ສະຫວັດດີການສັງຄົມ (ກຮສສ) ໃນວັນທີ 11 ພະຈິກ 2016, ຫຼັງຈາກຄອງຄອຍມາຫຼາຍເດືອນ. ທີມງານໄດ້ເບິ່ງແຈ້ງການຂອງພັກ ແລະ ຂໍ້ຕົກລົງຂອງນາຍົກລັດຖະມົນຕີ ແຈ້ງການກ່ຽວກັບການໂອນ ຄຊກລ ມາຂຶ້ນກັບກະຊວງແຮງງານ ແລະ ສະຫວັດດີການສັງຄົມ. ບໍ່ມີການກ່າວເຖິງ ຄກລ ຢູ່ໃນ ເອກະສານທັງສອງສະບັບນີ້. ເບິ່ງຕາມແຈ້ງການຂອງພັກ ເລກທີ 232/232/CCO, ທິດຊີ້ນຳຈາກກຳມະການສູນກາງພັກກ່ຽວກັບການປັບປຸງ ແລະ ສັບຊ້ອນ ວຽກງານຂອງລັດຄືນໃໝ່, ລົງວັນທີ 18 ກໍລະກົດ 2016; ແລະ ຂໍ້ຕົກລົງຂອງນາຍົກລັດຖະມົນຕີ ເລກທີ. 57/PM ກ່ຽວກັບການສືບຕໍ່ສັບຊ້ອນຄືນໃໝ່ບາງ ວຽກງານຂອງລັດຖະບານ, ລົງວັນທີ 22 ກໍລະກົດ 2016.

ດັດແປງແກ້ໄຂດຳລັດຂອງນາຍົກລັດຖະມົນຕີກ່ຽວກັບອົງການຈັດຕັ້ງ ແລະ ສະມາຊິກຂອງຄະນະຊີ້ນຳ ຄຊກລ ໃນອະນາຄົດອັນໃກ້ນີ້.[5]

## 5. ນະໂຍບາຍທີ່ກ່ຽວຂ້ອງກັບການຈັດບູລິມະສິດການກວດກູ້ ລບຕ

ການປະຕິບັດຕົວຈິງທີ່ສົມບູນທີ່ສຸດຂອງນະໂຍບາຍກ່ຽວກັບການແກ້ໄຂບັນຫາ ລບຕ ແມ່ນພົບເຫັນຢູ່ໃນແຜນ ຍຸດທະສາດແຫ່ງຊາດຂອງຂະແໜງແກ້ໄຂບັນຫາ ລບຕ ຂອງ ສປປ ລາວ 2011-2020 (ທີ່ຮັບຮູ້ກັນໃນນາມ ເສັ້ນທາງກ້າວສູ່ຄວາມປອດໄພ II), ແລະ ແຜນວຽກຂອງຂະແໜງແກ້ໄຂບັນຫາ ລບຕ ຂອງ ສປປ ລາວ 2016-2020 (ມີພຽງສະບັບພາສາລາວ, ແລະ ທີ່ຖືກອ້າງອີງເປັນພາສາອັງກິດກໍ່ຄືແຜນວຽກຫຼາຍປີ). ທັງສອງເອກະສານນີ້ ບໍ່ມີສະບັບໃດສັງລວມເອົາລາຍລະອຽດຂອງນະໂຍບາຍການຈັດບູລິມະສິດໄວ້ຢ່າງຈະແຈ້ງ. ເພາະສະນັ້ນ ທີມງານຂອງພວກຂ້າພະເຈົ້າຈຶ່ງໄດ້ກວດສອບບັນດາເອກະສານທາງການຕ່າງໆທີ່ກ່ຽວຂ້ອງກັບການສ້າງສະພາບແວດລ້ອມທາງດ້ານນະໂຍບາຍ ທີ່ລະບຽບການ ແລະ ການປະຕິບັດຕົວຈິງໃນການຈັດບູລິມະສິດກວດກູ້ ລບຕ ໄດ້ຖືກພັດທະນາ ແລະ ຈັດຕັ້ງປະຕິບັດ. ໂດຍທົ່ວໄປແລ້ວ, ບັນດາເອກະສານເຫຼົ່ານີ້ ແມ່ນສຸມໃສ່ການຈັດບູລິມະສິດຢູ່ໃນລະດັບຈຸລະພາກ, ແລະ ບໍ່ມີສ່ວນຮ່ວມກັບການຈັດບູລິສິດຢູ່ຂັ້ນມະຫາພາກສຳລັບການຈັດສັນເນື້ອທີ່ດິນເພື່ອການກວດກູ້ (ຂັ້ນແຂວງ ຫຼື ຂັ້ນເມືອງ), ອົງການກວດກູ້ ລບຕ ຫຼື ດ້ານການເງິນ.

### 5.1 ບູລິມະສິດການກວດກູ້ ລບຕ

ມາດຕາ 4 ຂອງສົນທິສັນຍາວ່າດ້ວຍການເກືອດຫ້າມລະເບີດລູກຫວ່ານ ທີ່ ສປປ ລາວ ເປັນສະມາຊິກລັດພາຄີຂອງສົນທິສັນຍາດັ່ງກ່າວ, ຮຽກຮ້ອງໃຫ້ບັນດາປະເທດທີ່ລົງນາມໃນສົນທິສັນຍາ "**ປະເມີນ ແລະ ຈັດບູລິມະສິດຄວາມຈຳເປັນສຳລັບການກວດກູ້.**[6] ອະນຸຍາດໃຫ້ແຕ່ລະປະເທດສະມາຊິກກຳນົດລາຍລະອຽດກ່ຽວກັບ ຄວາມຈຳເປັນຫຍັງແດ່ທີ່ຄວນປະເມີນ ແລະ ຈັດບູລິມະສິດ. ເອກະສານສຳຄັນຫຼາຍສະບັບກ່ຽວຂ້ອງກັບການແກ້ໄຂບັນຫາ ລບຕ ຢູ່ ສປປ ລາວ ໄດ້ອ້າງເຖິງບັນດາບູລິມະສິດໃນການພັດທະນາຂອງລັດຖະບານລາວ ແລະ/ຫຼື ດິນບູລິມະສິດ, ຕາມທີ່ອະທິບາຍຢູ່ຂ້າງລຸ່ມນີ້.

ຍຸດທະສາດແຫ່ງຊາດຂອງຂະແໜງແກ້ໄຂບັນຫາ ລບຕ ທີ່ສັງລວມໄວ້ຢູ່ໃນແຜນຍຸດທະສາດແຫ່ງຊາດຂອງຂະແໜງແກ້ໄຂບັນຫາ ລບຕ ຂອງ ສປປ ລາວ 2011-2020, ທີ່ຮູ້ກັນໃນນາມ **ເສັ້ນທາງກ້າວສູ່ຄວາມປອດໄພ** II (SPF2). ໄດ້ຈັດບັນຊີກ່ຽວກັບການກຳນົດ ແລະ ເງື່ອນໄຂໃນການປົດປ່ອຍດິນ [ຜ່ານການສຳຫຼວດ ແລະ ການກວດກູ້] "**ດິນບູລິມະສິດບົນພື້ນຖານມາດຕະຖານການກວດກູ້...**" ໂດຍພິຈາລະນາຕາມແຜນພັດທະນາລະດັບຊາດ, ລະດັບແຂວງ, ເມືອງ ແລະ ບ້ານ ທີ່ມີໃນປັດຈຸບັນ ຊຶ່ງເປັນໜຶ່ງໃນບັນດາມາດຕະການສຳຄັນ.[7] ເຖິງຢ່າງໃດກໍ່ຕາມ, ແຜນຍຸດທະສາດດັ່ງກ່າວ ກໍ່ບໍ່ໄດ້ສັງລວມເອົາລາຍລະອຽດຂອງບັນທັດຖານ ຫຼື ແນະນຳກ່ຽວກັບວ່າ ບັນທັດຖານນັ້ນຖືກກຳນົດຂຶ້ນມາດ້ວຍວິທີໃດ. ເປົ້າໝາຍພັດທະນາສະຫັດສະວັດອັນດັບ 9 (MDG 9) ຕົວຊີ້ວັດ 9 ກ, ໄດ້ວາງເປົ້າໝາຍ ຄື "**ສຳເລັດການກວດກູ້ ລບຕ ຢູ່ໃນດິນກະສິກຳທີ່ມີມູນຄ່າສູງ/ດິນບູລິມະສິດ**" ໃນປີ 2020,[8] ຂະນະທີ່ໃນປັດຈຸບັນກາຍມາເປັນ, **ເປົ້າໝາຍພັດທະນາແບບຍືນຍົງອັນດັບທີ 18** ຢູ່ໃນຄາດໝາຍ 18.2 ສຳລັບການກວດກູ້ ລບຕ ທີ່ຮູ້ຈັກທັງ

---

[5] ສຳພາດ ທ່ານ ບຸນພະມິດ ໂສມວິຈິດ, ຮອງຫົວໜ້າຫ້ອງການ ຄຊກລ, ວັນທີ 22 ພະຈິກ 2016.

[6] ສົນທິສັນຍາວ່າດ້ວຍການເກືອດຫ້າມລະເບີດລູກຫວ່ານ, ມາດຕາ 4.2.ກ),ໜ້າ.12 (ພາສາລາວ) ແລະ ໜ້າ.40 (ພາສາອັງກິດ).

[7] ຄຊກລ, ເສັ້ນທາງກ້າວສູ່ຄວາມປອດໄພ II (2011-2020), ໜ້າ.7.

[8] ອົງການສະຫະປະຊາຊາດເພື່ອການພັດທະນາ/ລັດຖະບານລາວ, ເປົ້າໝາຍພັດທະນາສະຫັດສະວັດອັນດັບ 9: ຫຼຸດຜ່ອນຜົນກະທົບຂອງ ລບຕ, ຕົວຊີ້ວັດ 9 ກ, 2011.

ໝົດອອກຈາກພື້ນທີ່ດິນບູລິມະສິດສູງ ແລະ ບ້ານທັງໝົດທີ່ຖືກກຳນົດວ່າເປັນບ້ານທຸກຍາກໃຫ້ແລ້ວໃນປີ 2030.[9]
ຢູ່ໃນມາດຕະຖານແຫ່ງຊາດຂອງຂະແໜງແກ້ໄຂບັນຫາ ລບຕ ຂອງ ສປປ ລາວ ກໍໄດ້ເວົ້າຄືກັນກັບບັນດາເອກະສານທີ່ກ່າວມາຂ້າງເທິງນັ້ນ. ມາດຕະຖານແຫ່ງຊາດເວົ້າວ່າ: "ນອກຈາກການກວດກູ້ເພື່ອທຸລະກິດແລ້ວ, ອົງການປະຕິບັດງານກວດກູ້ ລບຕ ທັງໝົດຈະຕ້ອງຂຶ້ນແຜນ ແລະຈັດຕັ້ງປະຕິບັດເພື່ອໃຫ້ບັນລຸບູລິມະສິດຂອງລັດຖະບານທີ່ມີໃນປັດຈຸບັນ. **ສັງເກດ:** ເນື້ອທີ່ດິນທີ່ກຳນົດ ເພື່ອການກວດກູ້ທັງໝົດ ຄວນເປັນດິນທີ່ມີ **ຄຸນຄ່າສູງ/ບູລິມະສິດສູງ** ເຊັ່ນດຽວກັນ ເພື່ອ ໃຫ້ສອດຄ່ອງກັບເປົ້າໝາຍພັດທະນາສະຫັດສະວັດອັນດັບທີ 9 ຂອງລັດຖະບານແຫ່ງ ສປປ ລາວ; ບູລິມະສິດທີ່ສອດຄ່ອງກັບແຜນຍຸດທະສາດຂອງຂະແໜງແກ້ໄຂບັນຫາ ລບຕ ໃນປັດຈຸບັນ [ຕົວຢ່າງ: ເສັ້ນທາງກ້າວສູ່ຄວາມປອດໄພ 2]; ຫຼື ບູລິມະສິດອື່ນໆທີ່ກຳນົດໂດຍ ຄຊກລ.[10] ຢູ່ໃນບົດໜຶ່ງຂອງມາດຕະຖານແຫ່ງຊາດກ່ຽວກັບການສຳຫຼວດ ກໍໃຊ້ຄຳເວົ້າເຊັ່ນດຽວກັນນີ້.[11]

**ລະບຽບການສຳຫຼວດ ລບຕ ຂອງ ສປປ ລາວ**, ອະນຸມັດໂດຍລັດຖະມົນຕີ ໃນເດືອນມັງກອນ 2015, ຮຽກຮ້ອງວ່າ ການກວດກູ້ "ໂດຍທົ່ວໄປແລ້ວ" ແມ່ນເກີດຂຶ້ນຢູ່ໃນພື້ນທີ່ຢືນຢັນວ່າມີ ລບຕ ຕົກຄ້າງເທົ່ານັ້ນ, ຊຶ່ງເປັນນະໂຍບາຍທາງການທີ່ເກືອບວ່າປະສົບຜົນສຳເລັດໃນການດຳເນີນການກວດກູ້ຢູ່ໃນພື້ນທີ່ຢືນຢັນວ່າມີ ລບຕ ຕົກຄ້າງ ໂດຍສະເພາະ. ເຖິງຢ່າງໃດກໍຕາມ, ລະບຽບການຍັງລະບຸອີກວ່າ: "ສາມາດອະນຸຍາດໃຫ້ດຳເນີນການກວດກູ້ໂດຍກົງໄດ້ໃນພື້ນທີ່ ທີ່ມີຫຼັກຖານລະເບີດລູກຫວ່ານທີ່ກຳນົດໂດຍການສຳຫຼວດດ້ານວິຊາການ ຄື: **ກ) ດິນທີ່ມີສະຖານະພາບເປັນດິນບູລິມະສິດ** ທີ່ຮັບປະກັນການສຳຫຼວດໃນເວລານັ້ນ.[12] ບັນຫາໜຶ່ງທີ່ເວົ້າເຖິງເລື້ອຍໆກ່ຽວກັບບູລິມະສິດແຫ່ງຊາດ, ບູລິມະສິດໃນການພັດທະນາ, ສະຖານະພາບຂອງບູລິມະສິດ ຫຼື ດິນບູລິມະສິດທີ່ຂຶ້ນບັນຊີໄວ້ຢູ່ຂ້າງເທິງນັ້ນແມ່ນຍັງຂາດຄຳນິຍາມກຳກັບກ່ຽວກັບວ່າປົກກະຕິແລ້ວ ຄຳວ່າ "ບູລິມະສິດ" ມີຄວາມໝາຍຢ່າງໃດ.

ແຜນວຽກແກ້ໄຂບັນຫາ ລບຕ ຂອງ ສປປ ລາວ 2016-2020 (ແຜນວຽກຫຼາຍປີ), ທີ່ອະນຸມັດໃນເດືອນ ມີນາ 2016, ບາງທີມັນໄດ້ໃຫ້ນິຍາມຈະແຈ້ງທີ່ສຸດກ່ຽວກັບບູລິມະສິດຂອງການກວດກູ້ ລບຕ (ເຖິງວ່າແຜນວຽກດັ່ງກ່າວບໍ່ຖືກກ່າວເຖິງຕໍ່ທີມງານຂອງພວກຂ້າພະເຈົ້າໃນຄັ້ງນີ້ວ່າເປັນເອກະສານນະໂຍບາຍທີ່ສຳຄັນກໍຕາມ). ມັນໄດ້ລະບຸວ່າ ການສຳຫຼວດ ແລະ ກວດກູ້ ລບຕ ຄວນຈະຖືກປະຕິບັດຢູ່ໃນ **ພື້ນທີ່ຈຸດສຸມພັດທະນາຂອງລັດຖະບານ (FDAs), ສຳລັບສະໜາມໂຄງການຂອງລັດຖະບານ ແລະ ດິນຜະລິດກະສິກຳ.**[13] ການຈັດລຳດັບປະເພດດິນທີ່ກ່າວເຖິງນັ້ນ ແມ່ນມີຄວາມສຳຄັນ, ຂຶ້ນຢູ່ກັບການປະຕິບັດຕົວຈິງຂອງລັດຖະບານໃນການກຳນົດລະດັບຄວາມສຳຄັນຂອງລາຍການຕ່າງໆ ຄື: (ພະນັກງານ, ປະເທດ, ນະໂຍບາຍ). ເພາະສະນັ້ນ, ຈຶ່ງສາມາດສັນນິຖານໄດ້ວ່າ ການກວດກູ້ຈຸດສຸມພັດທະນາ ເປັນບູລິມະສິດສູງກວ່າການກວດກູ້ສະໜາມຂອງໂຄງການພັດທະນາ, ແລະ ການກວດກູ້ສະໜາມໂຄງການພັດທະນາ ເປັນບູລິມະສິດສູງກວ່າການກວດກູ້ດິນກະສິກຳ. ເຖິງຢ່າງໃດກໍຕາມ, ແຜນວຽກຫຼາຍປີ ບໍ່ໄດ້ໃຫ້

---

[9] ລັດຖະບານລາວ/ອົງການ ສປຊ ເພື່ອການພັດທະນາ, ເປົ້າໝາຍພັດທະນາແບບຍືນຍົງອັນດັບ 18: ທຳລາຍ ລບຕ ທີ່ເປັນອຸປະສັກຕໍ່ການພັດທະນາຂອງຊາດ, ຄາດໝາຍ 18.2, 2016.

[10] ຄຊກລ, ມາດຕະຖານແຫ່ງຊາດຂອງຂະແໜງແກ້ໄຂບັນຫາ ລບຕ (NS), ບົດທີ 7: ການກວດກູ້ ລບຕ, ວັກ 7.1, ຂໍ້ກຳນົດທົ່ວໄປ, ວັນທີ 15 ຕຸລາ 2012, ໜ້າ 7-7.

[11] ຄຊກລ, ມາດຕະຖານແຫ່ງຊາດຂອງຂະແໜງແກ້ໄຂບັນຫາ ລບຕ (NS), ບົດທີ 6: ການສຳຫຼວດ, ວັກ 8.1, ການໝູນໃຊ້ການສຳຫຼວດ ແລະ ການປົດປ່ອຍດິນ, ວັນທີ 15 ຕຸລາ 2012, ໜ້າ 6-8.

[12] ຄຊກລ, ລະບຽບການສຳຫຼວດ ລບຕ ຂອງ ສປປ ລາວ, ວັນທີ 15 ມັງກອນ 2015, ວັກ 13. ການກວດກູ້ເນື້ອທີ່, ໜ້າ 19.

[13] ຄຊກລ, ແຜນວຽກແກ້ໄຂບັນຫາ ລບຕ ຂອງ ສປປ ລາວ ປີ 2016-2020, ເລກທີ: 110/ຄຊກລ, 01 ມີນາ 2016, ໜ້າ 12 ແລະ 18.

ທິດຊີ້ນຳກ່ຽວກັບບັນດາໜ້າວຽກທີ່ນອນຢູ່ໃນດິນສາມປະເພດນີ້ວ່າຄວນຈະຈັດບູລິມະສິດແນວໃດ.

## 5.2 ບູລິມະສິດທີ່ສຳຄັນຂອງລັດຖະບານ

ພະນັກງານລະດັບຜູ້ບໍລິຫານຂອງລັດຖະບານ ກ່າວເຖິງເລື້ອຍໆວ່າ ບູລິມະສິດການກວດກູ້ ລບຕ ແມ່ນສອດຄ່ອງກັບແຜນພັດທະນາຂອງລັດຖະບານ. ເສັ້ນທາງກ້າວສູ່ຄວາມປອດໄພ 2 ແລະ ແຜນວຽກຫຼາຍປີ ກໍລະບຸເຊັ່ນດຽວກັນວ່າ ພວກມັນສອດຄ່ອງກັບ**ແຜນພັດທະນາເສດຖະທິດ-ສັງຄົມ 5 ປີ** (ຕົວຢ່າງ: ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ 7 ແລະ ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ 8), ແຕ່ບໍ່ໄດ້ສັງລວມເອົາກົນໄກຕ່າງໆທີ່ສາມາດເຮັດໃຫ້ການຖ່າຍໂອນຄວາມສອດຄ່ອງທາງດ້ານທິດສະດີໄປສູ່ພາກປະຕິບັດຕົວຈິງ. ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ 7 (2011-2015) ເວົ້າເຖິງຂະແໜງກວດກູ້ ລບຕ ພຽງຜ່ານໆໄປ, ລວມທັງບັນດາຄາດໝາຍ ແລະ ຕົວຊີ້ວັດຄວາມສຳເລັດ ຂອງເປົ້າໝາຍພັດທະນາສະຫັດສະວັດອັນດັບ 9 ຕາມທີ່ລະບຸຢູ່ໃນເອກະສານຊ້ອນທ້າຍ.[14] ເນື້ອໃນຮ່າງແຜນພັດທະນາ ເສດຖະກິດ-ສັງຄົມ 5 ປີ ຄັ້ງທີ 8 (2016-2020) ບໍ່ໄດ້ກ່າວເຖິງຂະແໜງແກ້ໄຂບັນຫາ ລບຕ ແລະ ບໍ່ມີຄາດ ໝາຍ ການກວດກູ້ ລບຕ ສັງລວມໄວ້ເພື່ອຮູ້ຈັກກັນໂດຍທົ່ວໄປ.[15]

ຜູ້ບໍລິຫານຂອງລັດຖະບານຫຼາຍທ່ານ ໄດ້ແຈ້ງໃຫ້ທີມງານຄົ້ນຄວ້າຂອງພວກຂ້າພະເຈົ້າວ່າ ບັນດາບູລິມະສິດຂອງຂະແໜງແກ້ໄຂບັນຫາ ລບຕ ຖືກມີອິດທິພົນໂດຍໂຄງການລົງທຶນຂອງລັດ (PIP), ເປັນການປະກອບສ່ວນເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ. ທີມງານພວກຂ້າພະເຈົ້າ ບໍ່ສຳເລັດຄວາມພະຍາຍາມກ່ຽວກັບການຂໍເບິ່ງເອກະສານໂຄງການລົງທຶນຂອງລັດ (PIP) ເຖິງວ່າທີມງານໄດ້ພະຍາຍາມດ້ວຍຫຼາຍວິທີ ກັບກະຊວງແຜນການ ແລະ ການລົງທຶນ ກໍຕາມ.[16] ກ່າວກັນວ່າ, ໂຄງການລົງທຶນຂອງລັດໄດ້ບັນຈຸລາຍລະອຽດກ່ຽວກັບແຜນການລົງທຶນຂອງລັດທັງໝົດ, ລວມທັງການກໍ່ສ້າງໂຮງຮຽນ, ສູນປິ່ນປົວສຸຂະພາບ, ຖະໜົນຫົນທາງ ແລະ ໂຄງລ່າງອື່ນໆທີ່ນຳໃຊ້ທຶນພາຍໃນ, ທຶນຊ່ວຍເຫຼືອດ້ານການພັດທະນາເປັນທາງການ (ODA) ແລະ ທຶນຊ່ວຍເຫຼືອລ້າ. ທີມງານພວກຂ້າພະເຈົ້າເຂົ້າໃຈວ່າ ຂໍ້ມູນຈະໄດ້ຖືກຈັດຕັ້ງປະຕິບັດໂດຍຂະແໜງການ ແລະ ແຂວງ. ພະນັກງານຂອງກະຊວງໄດ້ແລກປ່ຽນບາງສ່ວນຂອງເອກະສານທີ່ສະແດງໃຫ້ເຫັນການລົງທຶນຂອງລັດຖະບານເຂົ້າໃນວຽກງານແກ້ໄຂບັນຫາ ລບຕ ທີ່ໄດ້ຂຶ້ນແຜນໄວ້, ໂດຍສະເພາະແມ່ນ (ການກໍ່ສ້າງຫໍພັກພະນັກງານ ຄກລ ແຂວງ ແລະ ການໃຫ້ທຶນທີມກວດກູ້ ລບຕ ຂອງກອງທັບ). ເອກະສານດັ່ງກ່າວ ບໍ່ໄດ້ໃຫ້ຄວາມຊັດເຈນກ່ຽວກັບການລົງທຶນຂອງລັດຖະບານເຂົ້າໃນຂະແໜງການອື່ນໆທີ່ອາດຕ້ອງການກວດກູ້ ລບຕ (ຕົວຢ່າງ: ສາທາ, ສຶກສາ ແລະ ໂຍທາ). ກະຊວງຍັງໄດ້ຊີ້ແຈງວ່າ ພະນັກງານບໍ່ເຂົ້າໃຈວ່າຂະແໜງແກ້ໄຂບັນຫາ ລບຕ ເປັນຂະແໜງທີ່ໃຫ້ບໍລິການຕໍ່ໂຄງການລົງທຶນຂອງລັດໃນຂະແໜງການອື່ນໆ, ເຂົ້າໃຈວ່າ ເປັນຂະແໜງການໜຶ່ງຕ່າງຫາກ ແລະກ່ຽວຂ້ອງກັບວຽກຂອງຕົນເອງ ແລະ ບູລິມະສິດຂອງຕົນເອງ. ດັ່ງນັ້ນ, ຈຶ່ງເປັນໄປບໍ່ໄດ້ສຳລັບທີມງານຂອງພວກຂ້າພະເຈົ້າທີ່ຈະກວດສອບເບິ່ງຈຸດສຸມພັດທະນາຕ່າງໆທີ່ມີຢູ່ໃນໂຄງການລົງທຶນຂອງລັດຖະບານ.

ເນື້ອໃນຂອງການແຜນລຶບລ້າງຄວາມທຸກຍາກແຫ່ງຊາດ 2006-2010, ແລະ ແຜນພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ 2011-2015 ແລະ 2016-2020 ຖືກອ້າງວ່າເປັນ

---

[14] ກະຊວງແຜນການ ແລະ ການລົງທຶນ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດຄັ້ງທີ 7, 2011,ໜ້າ 120 ແລະ 211.

[15] ຄຊກລ, ກະຊວງແຜນການ ແລະ ການລົງທຶນ ແລະ ອົງການ ສປຊ ເພື່ອການພັດທະນາ ບໍ່ມີແຜນ 8 ສະບັບສຸດທ້າຍທີ່ອະນຸມັດໂດຍສະພາແຫ່ງຊາດ. ກະຊວງແຜນການ ແລະ ການລົງທຶນ ສາມາດສະໜອງແຜນ 8 ສະບັບຮ່າງພາສາລາວ (ສະບັບສຸດທ້າຍສົ່ງໃຫ້ສະພາແຫ່ງຊາດ) ໃນເດືອນເມສາ 2016.

[16] ກະຊວງແຜນການ ແລະ ການລົງທຶນ ແນະນຳວ່າ ເອກະສານໂຄງການລົງທຶນຂອງລັດບໍ່ໄດ້ແຈກຢາຍໃຫ້ຫ້ອງການອື່ນຍ້ອນມີຈຳນວນຈຳກັດ ແຕ່ວ່າຜູ້ທີ່ສົນໃຈ ສາມາດເຂົ້າມາປຶກສາໄດ້ຢູ່ກະຊວງແຜນການ ແລະ ການລົງທຶນ. ທີມງານພວກຂ້າພະເຈົ້າໄດ້ພະຍາຍາມສະເໜີ ແລະ ຕິດຕາມການສະເໜີຫຼາຍຄັ້ງ ເພື່ອນັດເວລາ ພົບປະເພື່ອຂໍເບິ່ງເອກະສານແຜນການລົງທຶນຂອງລັດຖະບານແຕ່ບໍ່ສຳເລັດ.

ເອກະສານສຳຄັນ ປະກອບສ່ວນເຂົ້າໃນແຜນພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກແຫ່ງຊາດ ແລະ ມີອິດທິພົນຕໍ່ບູລິມະສິດຂອງຂະແໜງແກ້ໄຂບັນຫາ ລບຕ. ເຊັ່ນດຽວກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຕ່ເອກະສານເຫຼົ່ານີ້ ບໍ່ໄດ້ກ່າວເຖິງການກວດກູ້ ລບຕ ຢ່າງຊັດເຈນ. ແຜນລຶບລ້າງຄວາມທຸກຍາກແຫ່ງຊາດ ປີ 2006 ໄດ້ກຳນົດ 47 ເມືອງບູລິມະສິດທຸກຍາກ ແລະ 72 ເມືອງທຸກຍາກ ສຳລັບລັດຖະບານລາວ ແລະ ຜູ້ໃຫ້ທຶນສາກົນ ເພື່ອສຸມໃສ່ໃຫ້ການຊ່ວຍເຫຼືອພັດທະນາບັນດາເມືອງດັ່ງກ່າວ. ເຖິງວ່າ ບັນດາເມືອງບູລິມະສິດສູງສຸດຢູ່ໃນແຜນລຶບລ້າງຄວາມທຸກຍາກ ມີ ລບຕ ຕົກຄ້າງສູງກໍຕາມ, ແຕ່ວ່າບໍ່ມີນະໂຍບາຍເຊື່ອມໂຍງຢ່າງຈະແຈ້ງລະຫວ່າງແຜນພັດທະນາ ກັບເສັ້ນທາງກ້າວສູ່ຄວາມປອດໄພ I, ຊຶ່ງເປັນເອກະສານນະໂຍບາຍທີ່ສຳຄັນຂອງຂະແໜງແກ້ໄຂບັນຫາ ລບຕ ໃນເວລານັ້ນ.[17]

ຈຸດສຸມການພັດທະນາຢູ່ໃນແຜນພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ປີ 2011 ກຳນົດຈຸດສຸມພັດທະນາຢູ່ຂັ້ນຮາກຖານເມືອງ (FDAs) ເປັນຈຸດສຸມບູລິມະສິດສຳລັບການຊ່ວຍເຫຼືອຂອງລັດຖະບານ ແລະ ຜູ້ໃຫ້ທຶນ. ມັນໄດ້ກຳນົດວ່າ ທົ່ວປະເທດມີ 231 ຈຸດສຸມ: 10 ຈຸດສຸມຄຸ້ມຄອງໂດຍສູນກາງ, 54 ຈຸດສຸມຄຸ້ມຄອງໂດຍອຳນາດການປົກຄອງທ້ອງຖິ່ນ (ແຂວງ), ແລະ 167 ຈຸດສຸມຕັ້ງຖິ່ນຖານພູມລຳເນົາຖາວອນຂອງປະຊາຊົນ. ການກໍ່ສ້າງພື້ນຖານໂຄງລ່າງແມ່ນມີອັດຕາສ່ວນໜ້ອຍ (ຕົວຢ່າງ: ໂຮງຮຽນ, ສຸກສຸຂະພາບ, ເສັ້ນທາງ, ຕະຫຼາດ, ແລະ ອື່ນໆ). ນຶກພາບເຫັນວ່າໂຄງການພັດທະນາດັ່ງກ່າວແມ່ນມີຈຳນວນຫຼາຍຢູ່ໃນຈຸດສຸມພັດທະນາ, ໂດຍສ່ວນໃຫຍ່ແມ່ນໄດ້ຮັບທຶນຊ່ວຍເຫຼືອລ້າຈາກ**ກອງທຶນລຶບລ້າງຄວາມທຸກຍາກ**. ແຜນພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກທີ່ອອກມາໃໝ່ ໃນປີ 2016 ໄດ້ເພີ່ມຈຸດສຸມພັດທະນາຫຼາຍຂຶ້ນຕື່ມ ທີ່ອະນຸມັດໂດຍນາຍົກລັດຖະມົນຕີ ໃນເດືອນສິງຫາ 2016 ເຖິງວ່າລັດຖະບານລາວກຳລັງປະເຊີນໜ້າກັບບັນຫາທາງການເງິນນັບແຕ່ປີ 2013 ເປັນຕົ້ນມາກໍຕາມ.[18] ເບິ່ງຕາຕະລາງລຸ່ມນີ້.

**ຕາຕະລາງ 1: ຈຸດສຸມພັດທະນາ ໂດຍຈັດເປັນປະເພດ ຢູ່ໃນແຜນພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ, 2011-2015 ແລະ 2016-2020**

| | 2011-2015 | 2016-2020 |
|---|---|---|
| ລວມຈຸດສຸມພັດທະນາ: | 231 | 449 |
| ຈຸດສຸມທີ່ຄຸ້ມຄອງໂດຍສູນກາງ | 10 | 20 |
| ຈຸດສຸມທີ່ຄຸ້ມຄອງໂດຍແຂວງ | 54 | 71 |
| ຈຸດສຸມຈັດສັນພູມລຳເນົາຖາວອນ | 167 | 145 |
| ຄຸ້ມຄອງໂດຍສູນກາງ | - | 4 |
| ຄຸ້ມຄອງໂດຍຂັ້ນທ້ອງຖິ່ນ | - | 141 |
| ຈຸດສຸມລວມບ້ານໃຫຍ່ເປັນເມືອງນ້ອຍ | - | 213 |

ທັງ ຄຊກລ ແລະ ຄະນະກຳມະການແຫ່ງຊາດເພື່ອການພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ກ່າວຢ້ຳຕະຫຼອດວ່າ ການສຳຫຼວດ ແລະ ກວດກູ້ ລບຕ ແມ່ນສຸມໃສ່ຈຸດສຸມພັດທະນາ ຕາມບັນຊີແຜນພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ແລະ ຕາມທີ່ລະບຸໃນແຜນວຽກຫຼາຍປີຂອງຂະແໜງແກ້ໄຂບັນຫາ ລບຕ. ເຖິງຢ່າງໃດກໍຕາມ ທີມງານພວກຂ້າພະເຈົ້າສັງເກດເຫັນວ່າ ບໍ່ມີກົນໄກປະສານງານໂດຍກົງລະຫວ່າງ ຄຊກລ ແລະ ຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ, ຫຼື ກອງທຶນຫຼຸດຜ່ອນຄວາມທຸກຍາກ, ທີ່ອາດຈະຊ່ວຍ

[17] ຄຊກລ, ເສັ້ນທາງກ້າວສູ່ຄວາມປອດໄພ II (2016-2020).

[18] ຄະນະກຳມະການແຫ່ງຊາດ ເພື່ອການພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ, ແຜນ 5 ປີ ການພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ 2016-2020) ສະບັບພາສາລາວ.

ໃນການຈັດບູລິມະສິດ ແລະ ວາງແຜນວຽກກວດກູ້ ລບຕ ຢູ່ໃນຈຸດສຸມພັດທະນາ. ໜ່ວຍງານຄຸ້ມຄອງຖານຂໍ້ມູນຂອງ ຄຊກລ ໄດ້ບອກທີມງານພວກຂ້າພະເຈົ້າວ່າ ໜ່ວຍງານມີບັນຊີຈຸດສຸມພັດທະນາທົ່ວປະເທດ, ແຕ່ວ່າບໍ່ຖືກຮ້ອງຂໍໃຫ້ສ້າງບົດລາຍງານຄວາມຄືບໜ້າກ່ຽວກັບການສໍາຫຼວດ ແລະ ກວດກູ້ ລບຕ ຢູ່ໃນຈຸດສຸມດັ່ງກ່າວ. ສະພາບການເຊັ່ນນີ້ ຢາກແນະນໍາວ່າ ຄວາມຄືບໜ້າຂອງນະໂຍບາຍຈຸດສຸມພັດທະນາ ແມ່ນບໍ່ໄດ້ຖືກວາງແຜນ ຫຼື ບໍ່ຖືກວັດແທກບົນພື້ນຖານຂອງຫຼັກຖານຕົວຈິງໃນການຈັດຕັ້ງປະຕິບັດຕາມທີ່ໄດ້ບັນທຶກໄວ້ໃນຖານຂໍ້ມູນ ອິມສະມາ. ນອກຈາກນີ້ມັນຍັງຊີ້ໃຫ້ເຫັນວ່າ ອົງການຈັດຕັ້ງລະດັບສູງຂອງລັດກໍບໍ່ໄດ້ສະເໜີໃຫ້ລາຍງານຄວາມຄືບໜ້າຂອງນະໂຍບາຍຈຸດສຸມພັດທະນາກ່ຽວຂ້ອງກັບວຽກງານກວດກູ້ ລບຕ.

## <u>5.3 ການຈັດສັນພື້ນທີ່, ອົງການຈັດຕັ້ງ ແລະ ການເງິນ</u>

ໃນລະດັບມະຫາພາກ, ພື້ນທີ່ (ແຂວງ) ສໍາລັບການສໍາຫຼວດ ແລະ ກວດກູ້ ລບຕ ປາກົດວ່າຖືກຈັດສັນໂດຍອີງໃສ່ **ການໃຊ້ຊີວິດຢູ່ກັບ ລບຕ: ການສໍາຫຼວດແຫ່ງຊາດກ່ຽວກັບຜົນກະທົບຂອງລະເບີດບໍ່ທັນແຕກ ຕໍ່ກັບເສດຖະກິດ-ສັງຄົມ** ປີ 1996-1997, ຊຶ່ງຈັດລໍາດັບ 18 ແຂວງທີ່ໄດ້ຮັບຜົນກະທົບຈາກ ລບຕ. ພົບວ່າ 10 ແຂວງ ມີຜົນກະທົບຮ້າຍແຮງ ແລະ ອີກ 5 ແຂວງແມ່ນມີຜົນກະທົບສູງ.[19] ເກືອບວ່າການກວດກູ້ ລບຕ ທັງໝົດນັບແຕ່ປີ 1996 ເປັນຕົ້ນມາແມ່ນປະຕິບັດຢູ່ໃນ 9 ແຂວງທີ່ມີຜົນກະທົບຈາກ ລບຕ ສູງທີ່ສຸດ ຕາມທີ່ລະບຸໃນບັນຊີຂອງການສໍາຫຼວດຜົນກະທົບ. ແຂວງໄຊສົມບູນ, ຈັດຢູ່ໃນອັນດັບ 7 ຂອງລາວທີ່ມີຜົນກະທົບຈາກ ລບຕ, ແລະ ຍັງບໍ່ໄດ້ຈັດສັນອົງການປະຕິບັດງານກວດກູ້ ລບຕ ເຂົ້າໃນແຂວງດັ່ງກ່າວ. ສັນນິຖານວ່າ ອາດກ່ຽວຂ້ອງກັບຄວາມໝັ້ນຄົງ. ຄຊກລ ລາຍງານວ່າ ໜ່ວຍງານກວດກູ້ ລບຕ ເພື່ອມະນຸດສະທໍາຂອງກອງທັບປະຊາຊົນລາວ ໄດ້ເລີ່ມຕົ້ນວຽກກວດກູ້ ລບຕ ຢູ່ແຂວງໄຊສົມບູນ ແລະ ແຂວງວຽງຈັນ ໃນປີ 2015-16, ແລະ ມີແຜນຂະຫຍາຍເຂົ້າໄປແຂວງບໍລິຄໍາໄຊຕື່ມອີກທີ່ເປັນແຂວງທີ່ມີຜົນກະທົບສູງອັນດັບ 13. ເຖິງຢ່າງໃດກໍຕາມ, ນະໂຍບາຍຂອງລັດຖະບານລາວ ແມ່ນຍັງງຽບຢູ່ກ່ຽວກັບການຈັດສັນອົງການປະຕິບັດງານກວດກູ້ ລບຕ ເຂົ້າໃສ່ບັນດາແຂວງທີ່ມີ ລບຕ ຕົກຄ້າງທີ່ຍັງເຫຼືອ ເຊັ່ນ: ແຂວງຫຼວງນໍ້າທາ ແລະ ຜົ້ງສາລີ ແລະ ນະຄອນຫຼວງວຽງຈັນ. ຄວາມຈິງກໍຄື ບໍ່ມີໃຜອ້າງເຖິງຄວາມສໍາຄັນຂອງເອກະສານການສໍາຫຼວດຜົນກະທົບຕໍ່ທີມງານຂອງພວກຂ້າພະເຈົ້າ, ສັນນິຖານວ່າ ອາດເປັນເພາະສະພາບຂອງຄວາມຮັບຮູ້ທົ່ວໄປ, ແລະ ອາດເປັນໄປໄດ້ວ່າຈະບໍ່ພິຈາລະນາຕໍ່ໄປອີກວ່າມັນເປັນເອກະສານທີ່ກ່ຽວຂ້ອງກັບນະໂຍບາຍເຊິ່ງຮຽກຮ້ອງການຮັບຮູ້.

ຂະບວນການຕັດສິນໃຈ ໃນການຈັດສັນແຂວງໃດແຂວງໜຶ່ງ ແລະ ອົງການປະຕິບັດງານ ກວດກູ້ ລບຕ ສະເພາະໃດໜຶ່ງ ແມ່ນຍັງບໍ່ຈະແຈ້ງ. ເວລາດຽວກັນ, 4 ອົງການປະຕິບັດງານກວດກູ້ ລບຕ ເພື່ອມະນຸດສະທໍາ ຄື: ອົງການ ເຮໂລທຣາສ໌, ອົງການ ແຮັນດີແຄັບສາກົນ, ອົງການ ແມັກ ແລະ ອົງການຊ່ວຍເຫຼືອຂອງປະຊາຊົນ ນ໋ອກແວຣ໌ ທີ່ບໍ່ແມ່ນອົງການປະຕິບັດງານກວດກູ້ ລບຕ ແຫ່ງຊາດ, ໂຄງການເກັບກູ້ລະເບີດແຫ່ງຊາດ (ຄກລ). ຄກລ ເຮັດວຽກຢູ່ 9 ແຂວງ ນັບແຕ່ປີ 1996-1999. ອົງການປະຕິບັດງານສາກົນ ກໍເຮັດວຽກຢູ່ໃນແຂວງດຽວກັນກັບ ຄກລ, ຍົກເວັ້ນອົງການ ໂຊດີ/ອາໂປໂປ ຊຶ່ງເຮັດວຽກຢູ່ແຂວງບໍລິຄໍາໄຊ ນັບແຕ່ປີ 2009-2014. ຢູ່ບາງແຂວງທີ່ມີອົງການປະຕິບັດງານເກັບກູ້ ລບຕ ຫຼາຍກວ່າໜຶ່ງອົງການ ບາງຄັ້ງກໍໄດ້ຈັດສັນເມືອງ ຫຼື ພື້ນທີ່ຢູ່ພາຍໃນເມືອງຕ່າງໆໃຫ້ອົງການປະຕິບັດງານເຫຼົ່ານັ້ນໂດຍສະເພາະ. ຕົວຢ່າງ:ເຈົ້າແຂວງ ແຂວງຊຽງຂວາງໄດ້ກໍານົດ 4 ເມືອງໃຫ້ ຄກລ ແລະ 4 ເມືອງໃຫ້ອົງການແມັກ ຕາມຂໍ້ຕົກລົງປີ 2010, ການແບ່ງປັນພື້ນທີ່ ແລະ ເຮັດວຽກໄດ້ດີຄືແນວນີ້ ແມ່ນຍັງນໍາໃຊ້ຢູ່.[20] ອີກໜຶ່ງຕົວຢ່າງ, ຢູ່ເຂດເໜືອຂອງເມືອງບົວລະພາ ແຂວງຄໍາມ່ວນໄດ້ຖືກຈັດສັນໃຫ້ແກ່

[19] ອົງການ ແຮັນດີແຄັບສາກົນ/ຄກລ “ການດໍາລົງຊີວິດ ກັບ ລບຕ” ການສໍາຫຼວດຜົນກະທົບຂອງ ລບຕ ຕໍ່ເສດຖະກິດ-ສັງຄົມແຫ່ງຊາດ.

[20] ຂໍ້ຕົກລົງເລກທີ: 371/ຈຂ.ຊຂ, ວັນທີ 10 ສິງຫາ 2010 ແລະ ວັນທີ 11 ສິງຫາ 2010 (ເອກະສານລະບຸ 2 ວັນທີ).

ອົງການ ແມັກ ແລະ ເຂດໃຕ້ຂອງເມືອງແມ່ນຈັດສັນໃຫ້ ຄກລ. ການຈັດແບ່ງດັ່ງກ່າວ ປາກົດວ່າເຮັດຂຶ້ນເພື່ອຄວາມສະດວກໃນການບໍລິຫານຫຼາຍກວ່າເຫດຜົນທາງດ້ານບູລິມະສິດ. ເມືອງອື່ນໆອີກ, ເຊັ່ນ: ເຊໂປນ, ວິລະບູລີ ແລະ ນອງ ແຂວງສະຫວັນນະເຂດ, ແມ່ນຍັງບໍ່ໄດ້ຮັບການຈັດສັນ ຫຼື ແບ່ງປັນເນື້ອທີ່ສະເພາະລະຫວ່າງສາມອົງການປະຕິບັດງານທີ່ປະຕິບັດງານຢູ່ໃນແຂວງນີ້. ແຕ່ແທນໃຫ້ສິ່ງນີ້, ອຳນາດການປົກຄອງເມືອງໄດ້ກຳນົດລາຍຊື່ບ້ານໃຫ້ແຕ່ລະອົງການປະຕິບັດງານ. ເຖິງຢ່າງໃດກໍຕາມ, ຜູ້ມີສ່ວນຮ່ວມຈຳນວນໜຶ່ງສັງເກດວ່າ ຈຳນວນບ້ານທີ່ຖືກຈັດສັນໃຫ້ແຕ່ລະອົງການປະຕິບັດງານບໍ່ໄດ້ຖືກກຳນົດໂດຍແຫຼ່ງທຶນ ຫຼື ບຸກຄະລາກອນທີ່ມີ, ແລະ ເພາະສະນັ້ນ ຜົນໄດ້ຮັບກໍຄື ເຮັດໃຫ້ການນຳໃຊ້ຊັບພະຍາກອນເຫຼົ່ານັ້ນບໍ່ມີປະສິດທິພາບ.

ໂດຍທົ່ວໄປ, ຢູ່ໃນບົດບັນທຶກຄວາມເຂົ້າໃຈ ແມ່ນໄດ້ລະບຸແຂວງ, ເມືອງ ແລະ ບ້ານຕ່າງໆທີ່ອົງການປະຕິບັດງານຈະຈັດຕັ້ງປະຕິບັດ. ອົງການປະຕິບັດງານອົງການໜຶ່ງ ໄດ້ແລກປ່ຽນບົດບັນທຶກຄວາມເຂົ້າໃຈຂອງອົງການຂອງຕົນໃຫ້ທີມງານຂອງພວກຂ້າພະເຈົ້າສຶກສາເບິ່ງເປັນຕົວຢ່າງ. ອົງການປະຕິບັດງານກວດກູ້ ລບຕ ສາກົນລາຍງານວ່າ ພວກເຂົາໄດ້ພົວພັນກັບອຳນາດການປົກຄອງຂັ້ນສູນກາງ, ແຂວງ ແລະ ເມືອງ ເພື່ອເອົາບັນຊີບ້ານ, ເມືອງ ແລະ ແຂວງລວມເຂົ້າໃນບົດນຳສະເໜີເພື່ອຂໍທຶນ. ອົງການປະຕິບັດງານສາກົນອົງການໜຶ່ງລາຍງານວ່າ ມີບາງຊ່ອງຫວ່າງເພື່ອເຈລະຈາກັບອຳນາດການປົກຄອງທ້ອງຖິ່ນໃນຂັ້ນຕອນກະກຽມໂຄງການ; ຕົວຢ່າງ: ໃນເວລາທີ່ບ້ານຕ່າງໆທີ່ຈັດສັນໃຫ້ໂດຍອຳນາດການປົກຄອງທ້ອງຖິ່ນນັ້ນ ມີ ລບຕ ຕົກຄ້າງໃນລະດັບຕ່ຳ. ຄວາມຈິງ, ມາດຕະຖານແຫ່ງຊາດມອບໝາຍຄວາມຮັບຜິດຊອບໃຫ້ອົງການປະຕິບັດງານກວດກູ້ ລບຕ ເພື່ອ: "ກະຕຸກຊຸກຍູ້ການມີສ່ວນຮ່ວມຂອງຊຸມຊົນທ້ອງຖິ່ນໃນການ **ກຳນົດບູລິມະສິດ ແລະ ຄວາມຕ້ອງການໃນການກວດກູ້**" ແລ້ວນຳເອົາຂໍ້ມູນເຫຼົ່ານີ້ສະເໜີຕໍ່ ຄຊກລ ເມືອງ ແລະ ແຂວງ.[21] ຂະບວນການນີ້ສາມາດເກີດຂຶ້ນໃນຂັ້ນຕອນຂອງການກະກຽມ ແລະ ວາງແຜນໂຄງການ. ໃນສ່ວນນີ້, ຜູ້ບໍລິຫານຂອງ ຄຊກລ ໄດ້ແຈ້ງໃຫ້ທີມງານຮູ້ວ່າ ມັນຮັບປະກັນວ່າບ້ານທີ່ຢູ່ໃນຈຸດສຸມພັດທະນາແມ່ນໄດ້ຖືກລວມເຂົ້າໃນບັນຊີຂອງບ້ານທີ່ບັນຈຸຢູ່ໃນທຸກບົດບັນທຶກຄວາມເຂົ້າໃຈ. ຂໍ້ມູນນີ້ບໍ່ສາມາດກວດສອບໄດ້ໃນໄລຍະເວລາຂອງການດຳເນີນການຄົ້ນຄວ້າໃນຄັ້ງນີ້.

ການຈັດສັນທຶນເຂົ້າໃສ່ການກວດກູ້ ລບຕ ແມ່ນມາຈາກແຫຼ່ງທຶນສາກົນໂດຍສິ້ນເຊີງນັບແຕ່ກາງຊຸມປີ 1990 ເປັນຕົ້ນມາ. ຄະນະບໍລິຫານຫ້ອງການ ຄຊກລ ທ່ານໜຶ່ງໃຫ້ຮູ້ວ່າ ລັດຖະບານມີຮ່ວງງົບປະມານໜຶ່ງ (ຂັ້ນ 2) ສຳລັບວຽກງານແກ້ໄຂບັນຫາ ລບຕ ນັບແຕ່ທ້າຍຂອງຊຸມປີ 1990. ເຖິງຢ່າງໃດກໍຕາມ, ມາຮອດປັດຈຸບັນ ທຶນຈຳນວນໜ້ອຍຈາກງົບປະມານຂອງລັດມີລາຍງານວ່າໄດ້ຖືກຈັດສັນເຂົ້າໃນການເຊົ່າຫ້ອງການ ຄຊກລ ແລະ ຄກລ ແລະ ການກໍ່ສ້າງຢູ່ແຂວງຈຳນວນໜຶ່ງ. ຕາມການລາຍງານ, ພຽງແຕ່ 1-2 ປີຜ່ານມານີ້ ງົບປະມານຂອງລັດໄດ້ຖືກຈັດສັນເຂົ້າໃສ່ການກວດກູ້ ລບຕ. ທຶນຈຳນວນນີ້ແມ່ນຖືກຈັດໃຫ້ແກ່ທີມກວດກູ້ ລບຕ ເພື່ອມະນຸດສະທຳຂອງກອງທັບໂດຍກົງ. (ທີມງານຂອງພວກຂ້າພະເຈົ້າບໍ່ສາມາດເຫັນເອກະສານໃດໆກ່ຽວກັບງົບປະມານຂອງລັດ).

## 6. ລະບຽບການຈັດບູລິມະສິດຂອງອົງການປະຕິບັດງານກວດກູ້ ລບຕ ແລະ ອຳນາດການປົກຄອງທ້ອງຖິ່ນ

ການຈັດບູລິມະສິດໃນລະດັບມະຫາພາກ ແລະ ລະດັບຈຸລະພາກ ສັງເກດເຫັນວ່າມີພຽງການລະບຸຢູ່ໃນລະດັບລະບຽບການເທົ່ານັ້ນ. ແຕ່ລະອົງການປະຕິບັດງານກວດກູ້ ລບຕ ຢູ່ ສປປ ລາວ ໄດ້ພັດທະນາລະບຽບມາດຕະຖານຂອງການປະຕິບັດງານ (SOP) ຂອງຕົນເອງຂຶ້ນ, ຊຶ່ງສອດຄ່ອງກັບມາດຕະຖານແຫ່ງຊາດ (NS). ເຖິງຢ່າງໃດກໍຕາມ ລະບຽບມາດຕະຖານການປະຕິບັດງານຂອງອົງການປະຕິບັດງານກວດກູ້ ລບຕ ທັງໝົດ ແມ່ນເນັ້ນໜັກໃສ່ດ້ານວິຊາການ

[21] ຄຊກລ, ມາດຕະຖານແຫ່ງຊາດ (NS) ຂອງຂະແໜງແກ້ໄຂບັນຫາ ລບຕ, ບົດທີ 7, ການກວດກູ້ ລບຕ, ວັນທີ 15 ຕຸລາ 2012, ໜ້າ 7-6.

ເປັນຕົ້ນຕໍ, ແລະ ໃຫ້ຄວາມສົນໃຈໜ້ອຍຕໍ່ລະບຽບການວາງແຜນ ຫຼື ການຈັດບູລິມະສິດ. ເຊັ່ນດຽວກັນ, ບັນດາອົງການປະຕິບັດງານກວດກູ້ ລບຕ ເກືອບທັງໝົດແມ່ນບໍ່ໄດ້ປັບປຸງ SOP ຂອງຕົນເພື່ອສະທ້ອນໃຫ້ເຫັນເຖິງການປ່ຽນຜ່ານໄປສູ່ການສໍາຫຼວດທີ່ອີງໃສ່ຫຼັກຖານໃນປີ 2015 ທີ່ສົ່ງເສີມການກວດກູ້ສະເພາະ ຫຼື ພິເສດຢູ່ພື້ນທີ່ຢືນຢັນວ່າມີ ລບຕ ຕົກຄ້າງເທົ່ານັ້ນ. ຕົວຢ່າງ: ແນວທາງກ່ຽວກັບການຄັດເລືອກໜ້າວຽກຂອງ
ຄກລ ສໍາລັບ SOP (ສະບັບປີ 2011) ບໍ່ໄດ້ໃຫ້ລາຍລະອຽດກ່ຽວກັບການຈັດບູລິມະສິດໜ້າວຽກ.[22] ແນວທາງດັ່ງກ່າວແມ່ນຍັງສອດຄ່ອງກັບລະບົບເກົ່າ ຄືການກວດກູ້ ທີ່ອີງໃສ່ການສະເໜີ, ແລະ ໃຫ້ການແນະນໍາກ່ຽວກັບການຈັດປະເພດຂອງການສະເໜີທີ່ເໝາະສົມເພື່ອການຈັດຕັ້ງປະຕິບັດໜ້າວຽກຕ່າງໆ ຄື: ການທໍາລາຍເຄື່ອນທີ່, ການສໍາຫຼວດດ້ານວິຊາການ, ການກວດກູ້ ຫຼື ບໍ່ມີການປະຕິບັດ. ເພາະສະນັ້ນ, ໜ້າວຽກຕ່າງໆເຫຼົ່ານັ້ນຈຶ່ງມີການຊໍ້າຊ້ອນກັນຫຼາຍຂຶ້ນນັບແຕ່ມີການປ່ຽນຜ່ານມານໍາໃຊ້ລະບົບສໍາຫຼວດ ແລະ ກວດກູ້ ທີ່ອີງໃສ່ຫຼັກຖານ.

ມີລາຍງານວ່າ ອົງການປະຕິບັດງານກວດກູ້ ລບຕ ທັງໝົດມີການຈັດກອງປະຊຸມເພື່ອວາງແຜນວຽກປະຈໍາປີຮ່ວມກັບອໍານາດການປົກຄອງແຂວງ ແລະ ເມືອງ ເພື່ອປະເມີນບູລິມະສິດຂອງທ້ອງຖິ່ນສໍາລັບການກວດກູ້. ໃນທຸກກໍລະນີ, ປາກົດວ່າ ອົງການປະຕິບັດງານກວດກູ້ ລບຕ ໄດ້ເຊື້ອເຊີນບັນດາກະຊວງກ່ຽວຂ້ອງຂອງລັດຖະບານເຂົ້າຮ່ວມກອງປະຊຸມດັ່ງກ່າວ. ໃນທາງກັບກັນ ບໍ່ມີຕົວຢ່າງໃຫ້ເຫັນ (ເຊັ່ນ: ກະຊວງກ່ຽວຂ້ອງເຊີນອົງການປະຕິບັດງານກວດກູ້ ລບຕ ຫຼື ຫ້ອງການ ຄຊກລ ແຂວງ ເຂົ້າຮ່ວມກອງປະຊຸມວາງແຜນປະຈໍາປີຂອງກະຊວງ).

ສັງເກດເຫັນວ່າ ມີສາມລະດັບການປະສານງານ ແລະ ການຄຸ້ມຄອງຂະແໜງແກ້ໄຂບັນຫາ ລບຕ ຢູ່ຂັ້ນແຂວງ ແລະ ເມືອງ ຄື: ທ່ານ ຮອງເຈົ້າແຂວງ, ພະນັກງານຫ້ອງການພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ (ຄຊກລ ຄາດວ່າຄວາມຮັບຜິດຊອບນີ້ ໃນບໍ່ຊ້າຈະຖືກຖ່າຍໂອນໄປໃຫ້ກະຊວງຕົ້ນສັງກັດໃໝ່ ຄື ກະຊວງແຮງງານ ແລະ ສະຫວັດດີການສັງຄົມ), ແລະ ພະນັກງານ ຄຊກລ ແຂວງ. ເປັນການຍາກສໍາລັບທີມງານຂອງພວກຂ້າພະເຈົ້າ ທີ່ຈະເຫັນຕົວຢ່າງຂໍ້ມູນກ່ຽວກັບການຈັດບູລິມະສິດທີ່ຖືກປ້ອນຈາກສາມລະດັບຂອງການຄຸ້ມຄອງ ແລະ ປະສານງານດັ່ງກ່າວ. ຄວາມຈິງ, ປາກົດວ່າ ການມີສ່ວນຮ່ວມຢ່າງຫ້າວຫັນຂອງອໍານາດການປົກຄອງຂັ້ນເມືອງ ແລະ ແຂວງ ແມ່ນມີໜ້ອຍ, ແລະ ເລື້ອຍໆທີ່ເຫັນວ່າບໍ່ນອກເໜືອຈາກການພິຈາລະນາ ແລະ ອະນຸມັດແຜນວຽກ ແລະ ແຜນບູລິມະສິດທີ່ນໍາສະເໜີໂດຍອົງການປະຕິບັດງານກວດກູ້ ລບຕ. ມີການຕິດຕາມກວດກາ ວຽກງານກວດກູ້ ລບຕ ພຽງເລັກນ້ອຍຈາກອໍານາດການປົກຄອງ ຫຼັງຈາກທີ່ແຜນວຽກໄດ້ຮັບອະນຸມັດ (ແນ່ນອນວ່າ, ມີຂໍ້ຈໍາກັດທາງດ້ານບຸກຄະລາກອນ ແລະ ງົບປະມານ), ແລະ ການລາຍງານຂອງອົງການປະຕິບັດງານກວດກູ້ ລບຕ ບໍ່ຖືກເປັນທີ່ຮູ້ຈັກກ່ຽວກັບຄວາມຄືບໜ້າຂອງບັນດາຈຸດສຸມພັດທະນາ, ສະໜາມໂຄງການພັດທະນາ ແລະ ດິນກະສິກໍາ.

ກົນໄກ ການປະສານງານຈໍານວນໜຶ່ງ ລະຫວ່າງ ຫ້ອງການຂອງຂະແໜງແກ້ໄຂບັນຫາ ລບຕ ກັບ ບັນດາກະຊວງກ່ຽວຂ້ອງປະກົດໃຫ້ເຫັນຢູ່ໃນຂັ້ນແຂວງ ແລະ ເມືອງ. ພະນັກງານແຜນການ ແລະ ການລົງທຶນ ຢູ່ລະຂັ້ນແຂວງ ແລະ ເມືອງລາຍງານວ່າ ພວກເຂົາມີການຕິດຕາມກວດກາພຽງເລັກນ້ອຍຕໍ່ການຈັດບູລິມະສິດກວດກູ້ ຫຼື ວາງແຜນວຽກ ກວດກູ້ ລບຕ. ຫົວໜ້າຫ້ອງການແຜນການ ແລະ ການລົງທຶນ ເມືອງເຊໂປນ ແນະນໍາວ່າ ຫ້ອງການແຜນການ ແລະ ການລົງທຶນເມືອງເຊໂປນ ບໍ່ເຄີຍມີສ່ວນຮ່ວມໃນການຈັດບູລິມະສິດ ຫຼື ການວາງແຜນວຽກກວດກູ້ ຂອງຂະແໜງການແກ້ໄຂບັນຫາ ລບຕ.[23] ທີມຄົ້ນຄວ້າຂອງພວກຂ້າພະເຈົ້າໄດ້ຮັບການລາຍງານວ່າ ຫ້ອງການ ແຜນການ ແລະ ການລົງທຶນໄດ້ເຂົ້າຮ່ວມກອງປະຊຸມວາງແຜນວຽກຂອງຂະແໜງແກ້ໄຂບັນຫາ ລບຕ ເມື່ອໄດ້ຮັບການເຊື້ອເຊີນ, ແຕ່ວ່າບໍ່ໄດ້ເຊີນພະນັກງານ

---

[22] ຄກລ, ລະບຽບມາດຕະຖານການປະຕິບັດງານຂອງ ຄກລ, ເອກະສານຊ້ອນທ້າຍ 2-F, ທິດຊີ້ນໍາກ່ຽວກັບການຄັດເລືອກໜ້າວຽກ; ວັນທີ 1 ກັນຍາ 2011.
[23] ພົບປະກັບທ່ານ ສົມບັດ, ຫົວໜ້າຫ້ອງການແຜນການ ແລະ ການລົງທຶນ ເມືອງເຊໂປນ, 20 ກັນຍາ 2016.

ຄຊກລ ຫຼື ອົງການປະຕິບັດງານກວດກູ້ ລບຕ ເຂົ້າຮ່ວມກອງປະຊຸມວາງແຜນຂອງພວກຕົນຢ່າງເປັນປົກກະຕິ. ພະນັກງານທ່ານໜຶ່ງແນະນຳວ່າ ຫ້ອງການແຜນການ ແລະ ການລົງທຶນ ບໍ່ມີອຳນາດໃນການກວດສອບຂະແໜງແກ້ໄຂບັນຫາ ລບຕ ເພາະວ່າຂະແໜງການດັ່ງກ່າວໄດ້ຮັບທຶນຈາກຜູ້ໃຫ້ທຶນສາກົນ. ໂດຍທົ່ວໄປແລ້ວ, ພະນັກງານຫ້ອງການ ແຜນການ ແລະ ການລົງທຶນ ສະແດງຄວາມສົນໃຈຕໍ່ຄວາມເປັນໄປໄດ້ໃນການສະໜັບສະໜູນການກວດກູ້ ລບຕ ໃຫ້ໂຄງການພັດທະນາຂອງລັດຖະບານ ແລະ ການກໍ່ສ້າງທາງສັງຄົມ, ແລະ ຕ້ອງການຮູ້ຈັກວ່າພວກຕົນສາມາດນຳສະເໜີໜ້າວຽກຕ່າງໆແນວໃດເພື່ອເປັນໄປໄດ້ສຳລັບການກວດກູ້ ລບຕ ແລະ ມີສ່ວນຮ່ວມໃນການຕັດສິນໃນກ່ຽວກັບການຈັດບູລິມະສິດ.

ເນື່ອງຈາກ ບັນດາຂະບວນການທີ່ອະທິບາຍຢູ່ຂ້າງເທິງນັ້ນ, ຂອບເຂດທີ່ລະບຽບການຂອງທາງການກ່ຽວກັບການອຳນວຍຄວາມສະດວກໃນການລວມເອົາຈຸດສຸມພັດທະນາ ຫຼື ບູລິມະສິດຕ່າງໆຂອງລັດຖະບານເຂົ້າໃນແຜນວຽກຂອງບັນດາອົງການປະຕິບັດງານກວດກູ້ ລບຕ ຍັງບໍ່ຈະແຈ້ງ. ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານອົງການໜຶ່ງກ່າວວ່າ ກ່ອນອື່ນໝົດ ອົງການໄດ້ຈັດບູລິມະສິດການສຳຫຼວດ ແລະ ກວດກູ້ ລບຕ ຢູ່ໃນຈຸດສຸມພັດທະນາກ່ອນ ຈາກນັ້ນຈຶ່ງຍ້າຍໄປຫາບ້ານຕ່າງໆທີ່ຢູ່ໃນເຂດຈັດສັນຂອງພວກເຂົາເຈົ້າ.[24] ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານອີກອົງການໜຶ່ງກ່າວວ່າ ພວກເຂົາໄດ້ໃຫ້ບູລິມະສິດສູງສຸດຕໍ່ການສະເໜີຂອງລັດຖະບານ ເພື່ອຂໍກວດກູ້ ລບຕ ຢູ່ໃນຈຸດສຸມ ແລະ ຢູ່ສະໜາມໂຄງການພັດທະນາຕ່າງໆ ໃນເວລາທີ່ພວກເຂົາເຈົ້າໄດ້ຮັບການສະເໜີດັ່ງກ່າວ.[25] ທີມງານຂອງພວກຂ້າພະເຈົ້າຍັງສັງເກດເຫັນວ່າ ບ້ານຕ່າງໆທີ່ຖືກຄັດເລືອກເພື່ອເຮັດທົດລອງນະໂຍບາຍບ້ານສາມສ້າງ, ທີ່ສົ່ງເສີມວົງຈອນໃໝ່ຂອງການກະຈາຍອຳນາດທາງການເມືອງ ແລະ ການບໍລິຫານ, ກຳລັງໄດ້ຮັບຄວາມເອົາໃຈໃສ່ໃນລະດັບສູງຢູ່ຂັ້ນທ້ອງຖິ່ນ ເຊັ່ນດຽວກັບບ້ານທີ່ຢູ່ໃນຈຸດສຸມພັດທະນາ. ຂະນະທີ່ຍັງບໍ່ມີການເຊື່ອມໂຍງໂດຍກົງລະຫວ່າງນະໂຍບາຍ ລບຕ ແລະ ນະໂຍບາຍບ້ານສາມສ້າງ (ຊຶ່ງຖືກຄຸ້ມຄອງໂດຍຄະນະກຳມະການຊີ້ນຳຂັ້ນສູນກາງ), ເປັນໄປໄດ້ທີ່ວ່າບ້ານ 3 ສ້າງ ອາດຈະເພີ່ມບູລິມະສິດການກວດກູ້ ລບຕ ເຂົ້າຕື່ມອີກ.

ບາງອົງການປະຕິບັດງານຍັງໄດ້ລາຍງານການນຳໃຊ້ເຄື່ອງມືທາງດ້ານລະບຽບການ ເພື່ອຊ່ວຍຈັດບູລິມະສິດໜ້າວຽກກວດກູ້ຢູ່ໃນລະດັບຈຸລະພາກກ່ອນຈະລວມເຂົ້າໃນແຜນວຽກ. ບາງລະບຽບການແມ່ນສອດຄ່ອງກັບບັນດາເຄື່ອງມືທີ່ລະບຸຢູ່ໃນລະບຽບມາດຕະຖານການປະຕິບັດງານ (SOPs), ຂະນະທີ່ລະບຽບການອື່ນໆ ແມ່ນໄດ້ຖືກອະທິບາຍໃຫ້ທີມງານຂອງພວກຂ້າພະເຈົ້າວ່າ ພວກມັນບໍ່ແມ່ນເອກະສານທາງການ ແລະ ບໍ່ໄດ້ຖືກບັນທຶກໄວ້. ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານເກືອບທັງໝົດ ໄດ້ແລກປ່ຽນຕົວຢ່າງແບບຟອມການລາຍງານ ແລະ ແບບຟອມການປະເມີນຜົນທີ່ນຳໃຊ້ໃນລະດັບຈຸລະພາກພາຍຫຼັງສຳເລັດການສຳຫຼວດວິຊາການຢູ່ບ້ານໜຶ່ງໆ ຫຼື ພື້ນທີ່ຢືນຢັນວ່າມີ ລບຕ ຕົກຄ້າງໜຶ່ງພື້ນທີ່ໄດ້ມີການສະຫຼຸບ. ອົງການເກັບກູ້ລະເບີດ ແມັກ ລາຍງານວ່າ ການນຳໃຊ້ເຄື່ອງມືດັ່ງກ່າວ ແມ່ນໃຊ້ສະເພາະຢູ່ໃນຈຸດສຸມພັດທະນາ ແລະ ສະໜາມຂອງໂຄງການພັດທະນາເທົ່ານັ້ນ (ຊຶ່ງກວມເອົາປະມານ 10% ຂອງໜ້າວຽກກວດກູ້ທັງໝົດ), ໃນຂະນະທີ່ ອົງການຊ່ວຍເຫຼືອຂອງປະຊາຊົນ ນ໋ອກແວຣ໌ ແລະ ອົງການ ເຮໂລ ທຣາສ໌ ແຈ້ງວ່າ ພວກເຂົາເຈົ້າໄດ້ນຳໃຊ້ເຄື່ອງມືຈຳນວນໜຶ່ງເພື່ອປະເມີນແຕ່ລະພື້ນທີ່ຢືນຢັນວ່າມີ ລບຕ ຕົກຄ້າງທີ່ໄດ້ກຳນົດ. ບໍ່ໄດ້ຮັບຂໍ້ມູນໃດໆຈາກອົງການສາກົນເພື່ອຄົ້ນພົບການ ກ່ຽວກັບລະບຽບການຂອງພວກເຂົາເຈົ້າ.

ອົງການ ເຮໂລ ທຣາສ໌ ໄດ້ສະເໜີການຈັດບູລິມະສິດໜ້າວຽກ ຢູ່ໃນແບບຟອມປະເມີນຜົນເນື້ອທີ່ດິນສຳຫຼວດບໍ່ແມ່ນວິຊາການ ແລະ ແບບຟອມການຈັດບູລິມະສິດ ພື້ນທີ່ຢືນຢັນວ່າມີ ລບຕ ຕົກຄ້າງ. ແບບຟອມໄດ້ກຳນົດການໃຫ້ຄະແນນແຕ່ລະໜ້າວຽກ (ພື້ນທີ່ຢືນຢັນ

[24] ພົບປະກັບທ່ານ ນາງ ສຸຊານນາ ສະແນວ, ຫົວໜ້າອົງການ ເຮໂລ ທຣາສ໌ ປະຈຳລາວ, 20 ກັນຍາ 2016.
[25] ພົບປະກັບທ່ານ ໄຊມອນ ເຣ, ຫົວໜ້າອົງການ ແມັກ ປະຈຳລາວ, 26 ກໍລະກົດ 2016.

ວ່າມີ ລບຕ ຕົກຄ້າງ) ຕາມ 7 ບັນທັດຖານ, ແລະ ກຳນົດແຕ່ລະໜ້າວຽກເປັນບູລິມະສິດ ຕ່ຳ, ກາງ ຫຼື ສູງ ເມື່ອໃດທີ່ຄະແນນແຕ່ລະບັນທັດຖານຫາກຖືກຄິດໄລ່. ໜຶ່ງໃນ 7 ບັນທັດຖານ ກໍ່ຄື ການນຳໃຊ້ດິນຫຼັງຈາກກວດກູ້ ລບຕ ແລ້ວ: ແບບຟອມໄດ້ຈັດໃຫ້ມີ 8 ທາງເລືອກ ເລີ່ມຈາກການພັດທະນາຊຸມຊົນໄປເຖິງການນຳໃຊ້ດິນທີ່ບໍ່ໄດ້ວາງແຜນໄວ້. ບັນທັດຖານອື່ນໆອີກແມ່ນກ່ຽວຂ້ອງກັບອຸປະຕິເຫດທີ່ເກີດຂຶ້ນຢູ່ໃນບ້ານ, ຈຳນວນຜູ້ໄດ້ຮັບຜົນປະໂຫຍດທີ່ພົວພັນເຖິງແຕ່ລະໜ້າວຽກ, ແລະ ສະຖານະພາບທາງເສດຖະກິດຂອງພວກເຂົາເຈົ້າ. ອົງການ ເຮໂລ ຍັງລາຍງານວ່າ, ໂດຍສະເລ່ຍແລ້ວ ການກວດກູ້ພື້ນທີ່ຢືນຢັນວ່າມີ ລບຕ ຕົກຄ້າງສາມາດກວດກູ້ໄດ້ 5 ພື້ນທີ່ຕໍ່ບ້ານ ເຊິ່ງຈະບໍ່ເທົ່າກັບຈຳນວນພື້ນທີ່ຢືນຢັນວ່າມີ ລບຕ ຕົກຄ້າງທັງໝົດທີ່ມີຢູ່ໃນບ້ານ. ນະໂຍບາຍຂອງອົງການ ແມ່ນເພື່ອແລກປ່ຽນການກວດກູ້ ລບຕ ກັບຫຼາຍບ້ານ ແລະ ກັບຫຼາຍຄອບຄົວເທົ່າທີ່ເປັນໄປໄດ້.

ອົງການ ແມັກ ອະທິບາຍວ່າ ລະບຽບມາດຕະຖານການປະຕິບັດງານຂອງອົງການ ແມັກ ໃນປັດຈຸບັນ ເວົ້າເຖິງການຈັດບູລິມະສິດໜ້າວຽກກວດກູ້ ລບຕ ທີ່ສະເໜີໂດຍໂຄງການພັດທະນາ. ເຄື່ອງມືມາດຕະຖານໃນການຄັດເລືອກໜ້າວຽກແມ່ນນຳໃຊ້ໂດຍພະນັກງານສຳຫຼວດດ້ານວິຊາການ (ການພົວພັນຊຸມຊົນ) ເພື່ອປະເມີນວ່າ ບັນດາການສະເໜີເຫຼົ່ານັ້ນຈະຖືກລວມເຂົ້າໃນແຜນວຽກຂອງອົງການ ແມັກ ຫຼື ບໍ່?. ໜ້າວຽກຂອງໂຄງການພັດທະນາ ຈະຕ້ອງຜ່ານ 4 ຄຳຖາມທົດສອບ, ກ່ອນທີ່ຈະຍ້າຍໄປຂັ້ນຕອນທີສອງ ຊຶ່ງໜ້າວຽກຈະຖືກໃຫ້ຄະແນນເພື່ອກວດກູ້ບູລິມະສິດໃນການພັດທະນາ ເພື່ອຮັບປະກັນວ່າໜ້າວຽກກວດກູ້ທັງໝົດໃຫ້ຜົນປະໂຫຍດແກ່ການພັດທະນາ ແລະ ແກ່ທາງດ້ານມະນຸດສະທຳຢ່າງຈະແຈ້ງ. ຊຸດເອກະສານທີ່ປະກອບດ້ວຍ 5 ບັນທັດຖານ ແມ່ນໄດ້ຖືກບັນທຶກໄວ້ ແລະ ອົງການ ແມັກ ກຳນົດບູລິມະສິດຂອງແຕ່ລະໜ້າວຽກເປັນບູລິມະສິດຕ່ຳ, ກາງ ຫຼື ສູງ (ສູງ = 1) ເມື່ອຄະແນນຖືກຄິດໄລ່. ບັນດາໜ້າວຽກກ່ຽວກັບດິນກະສິກຳທີ່ນຳໃຊ້ ແລະ ຈັບຈອງໂດຍຊາວກະສິກອນຂະໜາດນ້ອຍ ບໍ່ຮຽກຮ້ອງແບບຟອມການຈັດບູລິມະສິດ, ແລະ ຖືກຄັດເລືອກໂດຍການປຶກສາຫາລືກັນລະຫວ່າງພະນັກງານອົງການ ແມັກ ແລະ ອຳນາດການປົກຄອງບ້ານ. ຄະນະບໍລິຫານຂອງອົງການ ແມັກ ລາຍງານວ່າ ຂະບວນການນີ້ ແມ່ນບໍ່ເປັນທາງການ ແລະ ບໍ່ໄດ້ຖືກບັນທຶກໄວ້, ແລະ ຈະມີຄວາມສ່ຽງໃນການນຳໃຊ້ ສຳລັບຊາວບ້ານ.

ລະບຽບມາດຕະຖານການປະຕິບັດງານຂອງອົງການຊ່ວຍເຫຼືອຂອງປະຊາຊົນ ນັອກແວຣ໌ ກຳນົດການຈັດບູລິມະສິດການກວດກູ້ເປັນສອງລະດັບ ຄື: ລະດັບບ້ານ ແລະ ລະດັບໜ້າວຽກຂອງບຸກຄົນ.[26] ແບບຟອມປະເມີນຜົນກະທົບ **ບົດລາຍງານບ້ານຂັ້ນ 2 ຂັ້ນຕອນ 1** [**ການປະເມີນຜົນກະທົບ**], ລາຍງານວ່າ ຂໍ້ມູນຈະຕື່ມໂດຍຫົວໜ້າທີມສຳຫຼວດ ໃນເວລາສະຫຼຸບການສຳຫຼວດດ້ານວິຊາການ. ອົງການຊ່ວຍເຫຼືອຂອງປະຊາຊົນ ນັອກແວຣ໌ ກຳນົດແຕ່ລະໜ້າວຽກເປັນບູລິມະສິດ ຕ່ຳ, ກາງ ຫຼື ສູງ ເມື່ອຄິດໄລ່ຄະແນນແລ້ວ. ລະບຽບມາດຕະຖານການປະຕິບັດງານຂອງອົງການຊ່ວຍເຫຼືອຂອງປະຊາຊົນ ນັອກແວຣ໌ ແນະນຳວ່າ ການຈັດບູລິມະສິດໜ້າວຽກມີຄວາມສັບຊ້ອນຂຶ້ນຕື່ມເມື່ອມີພື້ນທີ່ຢືນຢັນວ່າມີ ລບຕ ຕົກຄ້າງຫຼາຍກວ່າ 5 ພື້ນທີ່ຢູ່ໃນບ້ານດຽວກັນ. ເພາະສະນັ້ນ, ຈຶ່ງແນະນຳວ່າ ພະນັກງານສຳຫຼວດທີ່ບໍ່ແມ່ນວິຊາການຄວນຊ່ວຍຫົວໜ້າທີມສຳຫຼວດດ້ານວິຊາການເພື່ອຈັດລະດັບພື້ນທີ່ຢືນຢັນວ່າມີ ລບຕ ຕົກຄ້າງທັງໝົດຢູ່ໃນບ້ານ ເພື່ອຈັດບູລິມະສິດການກວດກູ້. ແນະນຳວ່າ ການຈັດບູລິມະສິດຄວນຈັດເປັນກຸ່ມບ້ານທີ່ມີພື້ນທີ່ຢືນຢັນວ່າມີ ລບຕ ຕົກຄ້າງ (ຈັດກຸ່ມໂດຍປະເພດດິນ, ການນຳໃຊ້ດິນ, ດິນບູລິມະສິດ, ດິນທີ່ມີກຳມະສິດ ແລະ ອື່ນໆ, ຫຼາຍກວ່າທີ່ຈະຈັດພື້ນທີ່ຢືນຢັນວ່າມີ ລບຕ ຕົກຄ້າງຂອງສ່ວນບຸກຄົນ. ບັນທັດຖານຂອງການຈັດບູລິມະສິດພື້ນທີ່ຢືນຢັນວ່າມີ ລບຕ ຕົກຄ້າງບໍ່ວ່າຈະ

---

[26] ອົງການຊ່ວຍເຫຼືອຂອງປະຊາຊົນ ນັອກແວຣ໌ ລະບຽບມາດຕະຖານການປະເມີນຜົນກະທົບ, "ການຈັດບູລິມະສິດພື້ນທີ່ຢືນຢັນວ່າມີ ລບຕ ຕົກຄ້າງ ຂອງບຸກຄົນ ຢູ່ພາຍໃນບ້ານ ໜ້າ 6-7 ແລະ ແບບຟອມ: ປະເມີນຜົນກະທົບ [ການປະເມີນຜົນກະທົບ] ບົດລາຍງານບ້ານຂັ້ນສອງ ຂັ້ນຕອນ 1, ສະບັບ ເດືອນກຸມພາ 2016.

ເປັນຂອງບຸກຄົນ ຫຼື ກຸ່ມຂອງພື້ນທີ່ຢືນຢັນວ່າມີ ລບຕ ຕົກຄ້າງ ຄື: ແຜນພັດທະນາໃນປັດຈຸບັນ; ການປ່ຽນແປງການນໍາໃຊ້ດິນ; [ຈໍານວນ] ຜູ້ໄດ້ຮັບຜົນປະໂຫຍດ; ຂະໜາດ [ຂອງພື້ນທີ່ຢືນຢັນວ່າມີ ລບຕ ຕົກຄ້າງ]; [ລະດັບຂອງ] ການຕົກຄ້າງ; ຄວາມສ່ຽງຕໍ່ການເກີດອຸປະຕິເຫດ, ແລະ ອື່ນໆ. ການນໍາໃຊ້ "ອື່ນໆ" ແນະນໍາໃຫ້ພະນັກງານອົງການຊ່ວຍເຫຼືອຂອງປະຊາຊົນ ນ້ອກແວຣ໌ ອາດຈະພິຈາລະນາບັນທັດຖານອື່ນໆນໍາອີກນອກຈາກທີ່ໄດ້ຈັດເປັນບັນຊີໄວ້ຢູ່ໃນແບບຟອມ. ພ້ອມນີ້, ກໍຄວນສັງເກດວ່າ ອົງການຊ່ວຍເຫຼືອຂອງປະຊາຊົນ ນ້ອກແວຣ໌ ບາງທີອາດຈະມີບັນທັດຖານການຈັດບູລິມະສິດທີ່ຮັດກຸມທີ່ສຸດ, ມີການກວດກູ້ ລບຕ ໜ້ອຍທີ່ສຸດທຽບໃສ່ບັນດາອົງການປະຕິບັດງານກວດກູ້ ລບຕ ເພື່ອມະນຸດສະທໍາອື່ນໆ ຢູ່ ສປປ ລາວ.

ຄກລ ບໍ່ມີເຄື່ອງມືສະເພາະໃນການຈັດບູລິມະສິດໜ້າວຽກກວດກູ້ຢູ່ລະດັບຈຸລະພາກ. ການແບ່ງປັນ ແລະ ຈໍາກັດຈໍານວນໃຫ້ ຈະມີອິດທິພົນຕໍ່ການຈັດບູລິມະສິດຂອງ ຄກລ ສໍາລັບໜ້າວຽກຕ່າງໆຢູ່ລະດັບແຂວງ ແລະ ເມືອງ. ຫ້ອງການໃຫຍ່ ຄກລ ແນະນໍາວ່າມັນໄດ້ກໍານົດຄາດໝາຍໃຫ້ ຄກລ ແຕ່ລະແຂວງ ສໍາລັບຈໍານວນບ້ານ ແລະ ຈໍານວນເຮັກຕາທີ່ຈະຖືກກວດກູ້ໃນແຕ່ລະປີ. ຂໍ້ແນະນໍາທີ່ເປັນລາຍລັກອັກສອນ ໄດ້ແຈ້ງໃຫ້ ຄກລ ແຂວງ ເພື່ອລິເລີ່ມວົງຈອນການວາງແຜນປະຈໍາປີ ແລະ ທົບທວນການຈັດຕັ້ງປະຕິບັດແຜນວຽກກາງສະໄໝ, ແຕ່ວ່າ ບໍ່ມີຕົວຢ່າງໃຫ້ເຫັນເພື່ອແລກປ່ຽນກັບທີມງານພວກຂ້າພະເຈົ້າ. ພະນັກງານ ຄກລ ແຂວງຊຽງຂວາງ ກ່າວວ່າ ຫ້ອງການໃຫຍ່ ຄກລ ວຽງຈັນ ເປັນຜູ້ຈັດສັນສ່ວນແບ່ງການກວດກູ້ໃຫ້ແຕ່ລະເມືອງ, ແຕ່ເບິ່ງແລ້ວບໍ່ໜ້າຈະເປັນໄປໄດ້ ເວັ້ນເສຍແຕ່ວ່າຈະອີງໃສ່ການສະເໜີຈາກຫ້ອງການ ຄກລ ແຂວງ.

ພະນັກງານ ຄກລ ຍັງກ່າວອີກວ່າ ມີຫຼາຍປັດໃຈທີ່ນໍາມາພິຈາລະນາໃນເວລາດໍາເນີນຂະບວນການຈັດບູລິມະສິດໜ້າວຽກກວດກູ້. ເຖິງຢ່າງໃດກໍຕາມ, ເປັນການຍາກສໍາລັບທີມງານຄົ້ນຄວ້າຂອງພວກຂ້າພະເຈົ້າທີ່ຈະຄົ້ນຫາປັດໃຈສໍາຄັນເຫຼົ່ານັ້ນໄດ້. ພະນັກງານ ຄກລ ຍັງກ່າວອີກວ່າ ໜ້າວຽກທີ່ຈໍາເປັນ"ແມ່ນຖືກລວມເຂົ້າໃນແຜນວຽກ, ແຕ່ວ່າພວກເຂົາມີຄວາມຫຍຸ້ງຍາກໃນການອະທິບາຍກ່ຽວກັບວ່າ ສິ່ງໃດທີ່ກໍານົດວ່າໜ້າວຽກນັ້ນ ຈໍາເປັນ, ຫຼື ສໍາຄັນກວ່າ, ແລະ ຈໍາເປັນກວ່າ"ໜ້າວຽກອື່ນໆຊຶ່ງປາກົດວ່າພວກມັນມີລັກສະນະຄ້າຍຄືກັນ.

ຈາກການສົນທະນາກັບພະນັກງານ ຄກລ ແຂວງຊຽງຂວາງ ແລະ ແຂວງສະຫວັນນະເຂດ, ເບິ່ງຄືວ່າ ພະນັກງານເຫຼົ່ານັ້ນແມ່ນເນັ້ນໜັກກ່ຽວກັບປະເພດດິນ (ເຊັ່ນ: ໄຮ່ນາ, ສວນ ແລະ ດິນປຸກສ້າງ) ຫຼາຍກວ່າປັດໃຈທາງສັງຄົມ (ຕົວຢ່າງ: ປະຫວັດການເກີດອຸປະຕິເຫດ, ສະຖານະພາບທາງເສດຖະກິດຂອງເຈົ້າຂອງດິນ).

## 7. ການປະຕິບັດຕົວຈິງກ່ຽວກັບການຈັດບູລິມະສິດຂອງຜູ້ມີສ່ວນຮ່ວມຢູ່ທຸກລະດັບ.

ຜົນໄດ້ຮັບຈາກການປະຕິບັດຕົວຈິງໃນການຈັດບູລິມະສິດ ຖືກບັນທຶກໄວ້ຢູ່ໃນຖານຂໍ້ມູນ ອີມສະມາ ໃນຖານະໜ້າວຽກທີ່ເຮັດສໍາເລັດ. ຖານຂໍ້ມູນ IMSMA ຢືນຢັນວ່າ ແຕ່ລະໜ້າວຽກກວດກູ້ທີ່ສໍາເລັດສ່ວນໃຫຍ່ແມ່ນປະຕິບັດໃນປີ 2015 ແລະ 2016 ຢູ່ແຂວງຊຽງຂວາງ ແລະ ແຂວງສະຫວັນນະເຂດ ແມ່ນເນື້ອທີ່ດິນກະສິກໍາ. ບັນດາໜ້າວຽກສ່ວນໃຫຍ່ແມ່ນເກີດຂຶ້ນຢູ່ນອກພື້ນທີ່ຈຸດສຸມພັດທະນາ, ແລະ ມີຫຼາຍບ້ານໃນຈຸດສຸມພັດທະນາບໍ່ໄດ້ກວດກູ້ ລບຕ. ຕົວເລກລະອຽດກ່ຽວກັບໜ້າວຽກການກວດກູ້ທີ່ເຮັດສໍາເລັດຢູ່ພາຍໃນ ແລະ ນອກຈຸດສຸມພັດທະນາ ບໍ່ສາມາດສະໜອງໃຫ້ໄດ້ໃນທັນທີ, ເນື່ອງຈາກໜ່ວຍງານຄຸ້ມຄອງຂໍ້ມູນຂອງ ຄຊກລ ບໍ່ມີລະບົບການລາຍງານໂດຍອັດຕະໂນມັດກ່ຽວກັບບັນທັດຖານເຫຼົ່ານີ້. ຕາມທີ່ໄດ້ອ້າງເຖິງຢູ່ຂ້າງເທິງນັ້ນ, ການທີ່ບໍ່ມີລະບົບລາຍງານແບບອັດຕະໂນມັດ, ແນະນໍາວ່າຄະນະບໍລິຫານຫ້ອງການ ຄຊກລ ແລະ ຜູ້ບໍລິຫານລະດັບສູງຂອງລັດຖະບານ ບໍ່ສາມາດກວດກາຄວາມຄືບໜ້າກ່ຽວກັບການກວດກູ້ ລບຕ ຢູ່ໃນຈຸດສຸມພັດທະນາໄດ້.

ທີມງານຂອງພວກຂ້າພະເຈົ້າ ໄດ້ສໍາພາດຄະນະບ້ານ ແລະ ເຈົ້າຂອງດິນ, ພວກກ່ຽວຊີ້ແຈງວ່າ ພວກເພິ່ນບໍ່ຮູ້ວ່າ ເປັນຫຍັງອົງການປະຕິບັດງານກວດກູ້ ລບຕ ຈຶ່ງລົງມາບ້ານຂອງພວກເຂົາເຈົ້າຫຼາຍຄັ້ງກວ່າບ້ານອື່ນໆຢູ່ໃນເມືອງຂອງພວກເຂົາ. ພວກເຂົາສັນນິຖານວ່າ, ອາດຈະເປັນເພາະວ່າບ້ານຂອງພວກເຂົາເຈົ້າແມ່ນ "ນອນຢູ່ໃນແຜນ". ພວກເຂົາເຈົ້າຍັງຊີ້ແຈງຕື່ມອີກວ່າ ພວກເຂົາໄດ້ປ້ອນຂໍ້ມູນໜ້ອຍທີ່ສຸດໃນການຕັດສິນໃຈກ່ຽວກັບການກວດກູ້ ແລະ ການວາງແຜນວຽກກວດກູ້ ລບຕ. ເຈົ້າຂອງດິນຫຼາຍທ່ານໃຫ້ຮູ້ວ່າ ດິນຂອງພວກເຂົາເຈົ້າໄດ້ຖືກກວດກູ້ກໍເພາະວ່າ ພວກເຂົາໄດ້ລາຍງານການພົບເຫັນລະເບີດຕົກຄ້າງຢູ່ໃນດິນຂອງພວກເຂົາໃຫ້ນາຍບ້ານ ຫຼື ພະນັກງານຂອງອົງການກວດກູ້ ລບຕ. ຢູ່ແຂວງສະຫວັນນະເຂດ, ຄວາມຈໍາເປັນສໍາລັບການກະຕຸກຊຸກຍູ້ເພື່ອໃຫ້ລາຍງານກ່ຽວກັບ ລບຕ ເປັນປັດໃຈສໍາຄັນສໍາລັບປະຊາຊົນຜູ້ທີ່ບໍ່ແມ່ນມາຈາກຊົນເຜົ່າທີ່ມີອໍານາດ. ເຈົ້າຂອງດິນສ່ວນໃຫຍ່ກ່າວວ່າ ພວກເຂົາເຈົ້າບໍ່ໄດ້ຖືກຂໍຮ້ອງໃຫ້ຕື່ມແບບຟອມສະເໜີຂໍກວດກູ້, ແຕ່ສາມາດລາຍງານໂດຍປາກເປົ່າໃຫ້ນາຍບ້ານ ຫຼື ພະນັກງານອົງການກວດກູ້ ລບຕ ໄດ້.[27]

ຜູ້ທີ່ຖືກສໍາພາດຢູ່ຂັ້ນບ້ານ ບໍ່ມີຜູ້ໃດສາມາດອະທິບາຍໄດ້ວ່າການຈັດບູລິມະສິດຫຼາຍໜ້າວຽກທີ່ດໍາເນີນໄປຢູ່ໃນບ້ານຂອງພວກເຂົາເຈົ້ານັ້ນປະຕິບັດກັນແບບໃດ. ການແນະນໍາແບບທໍາມະດາທີ່ສຸດ ກໍຄື ເນື້ອທີ່ດິນທີ່ມີຄວາມຈໍາເປັນສໍາລັບການກວດກູ້ຈະຕ້ອງໄດ້ຮັບການກວດກູ້ກ່ອນ. ນີ້ເປັນສິ່ງທີ່ຖືກຖົກຖຽງກັນ, ເພາະວ່າ ທີ່ຈິງແລ້ວ ແມ່ນຫຍັງ ຄື "ຄວາມຈໍາເປັນ. ເຖິງຢ່າງໃດກໍຕາມ, ອົງການປະຕິບັດງານກວດກູ້ ລບຕ ບໍ່ໄດ້ປະຕິບັດຕາມຂະບວນການທີ່ອີງໃສ່ການມີສ່ວນຮ່ວມຂອງບ້ານເປັນຫຼັກເພື່ອກໍານົດວ່າ ດິນຕອນໃດ (ຫຼື ດິນຂອງໃຜ) ຈະໄດ້ກວດກ່ອນ. ຕົວແທນຈາກຫ້ອງການ ຄຊກລ ແຂວງສະຫວັນນະເຂດ ໄດ້ໃຫ້ຂໍ້ສັງເກດຢູ່ທີ່ກອງປະຊຸມປະຈໍາປີຂອງຂະແໜງແກ້ໄຂບັນຫາ ລບຕ ເມື່ອບໍ່ດົນຜ່ານມານີ້ວ່າ ຢູ່ແຂວງສະຫວັນນະເຂດ ບັນດາຄອບຄົວທີ່ທຸກຍາກທີ່ສຸດແມ່ນບໍ່ຖືກຈັດບູລິມະສິດເພື່ອສະໜອງການກວດກູ້ ລບຕ ໃຫ້. ທ່ານຍັງກ່າວຕື່ມອີກວ່າ ດິນຂອງ "ຜູ້ມີຖານະ" ກໍຈະໄດ້ຮັບການກວດກູ້ກ່ອນສະເໝີ. ທ່ານດັ່ງກ່າວໄດ້ເນັ້ນວ່າ ນີ້ຄືຄວາມເປັນຈິງ.[28]

ອົງການປະຕິບັດງານກວດກູ້ ລບຕ ພິຈາລະນາເຫັນວ່າ ມີບັນຫາຫຼາຍຢ່າງ ນອກຈາກບັນຫາທາງດ້ານວິຊາການ ສໍາລັບລະບຽບມາດຕະຖານການປະຕິບັດງານຂອງພວກເຂົາເຈົ້າໃນເວລາຈັດຕັ້ງປະຕິບັດການກວດກູ້ ລບຕ. ຄະນະບໍລິຫານຂອງ ຄກລ ກ່າວວ່າ ນະໂຍບາຍກ່ຽວກັບການຈັດບູລິມະສິດຢູ່ຈຸດສຸມພັດທະນາແມ່ນໄດ້ໃຫ້ການແນະນໍາແກ່ອົງການປະຕິບັດງານ, ແຕ່ກໍບໍ່ໄດ້ຮັບການຈັດຕັ້ງປະຕິບັດຢ່າງເຄັ່ງຄັດ, ເພາະວ່າຍັງມີບັນຫາທາງ (ພາກປະຕິບັດຕົວຈິງ) ອື່ນໆອີກທີ່ຍັງຈະຕ້ອງໄດ້ພິຈາລະນາໃນເວລາວາງແຜນວຽກກວດກູ້. ຄກລ ຍັງເວົ້າອີກວ່າ ອົງການຂອງຕົນໄດ້ລວມເອົາການກວດກູ້ຢູ່ຈຸດສຸມພັດທະນາເຂົ້າໃນແຜນວຽກນັບແຕ່ປີ 2014 ເປັນຕົ້ນມາ, ແຕ່ສັງເກດເຫັນວ່າ ຫຼາຍໂຄງການພັດທະນາບໍ່ຖືກຈັດຕັ້ງປະຕິບັດຢູ່ຫຼາຍສະໜາມທີ່ນອນຢູ່ໃນຈຸດສຸມ. ກ່າວວ່າ ໂຄງການບໍ່ຄ່ອຍໃຫ້ຄວາມສົນໃຈຕໍ່ການຈັດບູລິມະສິດການກວດກູ້ດິນທີ່ບໍ່ໄດ້ນໍາໃຊ້.[29] ຍັງຕ້ອງໄດ້ພິຈາລະນາເຖິງລະດັບການຕົກຄ້າງຂອງ ລບຕ ນໍາອີກ, ແລະ ມີຄວາມເປັນໄປໄດ້ວ່າ ດິນອາດຈະໄດ້ນໍາໃຊ້ໃນອະນາຄົດອັນໃກ້ນີ້. ໃນກໍລະນີດິນກະສິກໍາຢູ່ ສປປ ລາວ, ເກືອບວ່າດິນທັງໝົດໄດ້ຖືກນໍາ ໃຊ້ກ່ອນການກວດກູ້ ລບຕ. ບາງອົງການປະຕິບັດງານກວດກູ້ ລບຕ ລາຍງານວ່າ ເຈົ້າຂອງດິນບໍ່ຕ້ອງການທີມກວດກູ້ ເພື່ອມາກວດກູ້ ລບຕ ຢູ່ດິນຂອງພວກເຂົາເຈົ້າໃນເດືອນທີ່ດິນກໍາລັງນໍາໃຊ້ຢູ່ ໃນລະດູປູກ ແລະ ລະດູເກັບກ່ຽວ.

---

[27] ການສະເໜີຂໍກວດກູ້ ລບຕ ເປັນຜະລິດຕະພັນໜຶ່ງຂອງວິທີການກວດກູ້ໃນເມື່ອກ່ອນ ຄື ການກວດກູ້ທີ່ອີງໃສ່ການສະເໜີ. ເຖິງຢ່າງໃດກໍຕາມ, ການຮັບຮອງການສໍາຫຼວດບໍ່ແມ່ນວິຊາການແບບຄ່ອຍເປັນຄ່ອຍໄປ (ມີຫຼາຍຕົວຢ່າງໃຫ້ເຫັນ ບໍ່ທັນຮອດຫົກເດືອນທ້າຍປີ 2016) ໝາຍຄວາມວ່າບາງອົງການປະຕິບັດງານແມ່ນຍັງນໍາໃຊ້ການສະເໜີເກົ່າທີ່ຍັງມີຢູ່ ຫຼື ການສະເໜີໃໝ່ເພື່ອກວດກູ້ດິນທີ່ມີ ລບຕ ຕົກຄ້າງທີ່ລາຍງານຈາກໜ້າວຽກສໍາຫຼວດວິຊາການ, ຕາມດ້ວຍການກວດກູ້.

[28] ຄໍາເຫັນຂອງທ່ານ ພູເຂົາ, ຕາງໜ້າ ຄຊກລ ແຂວງສະຫວັນນະເຂດ ຢູ່ກອງປະຊຸມປະຈໍາປີຂອງຂະແໜງແກ້ໄຂບັນຫາ ລບຕ, ວຽງຈັນ, ວັນທີ 8 ພະຈິກ 2016.

[29] ສໍາພາດ ທ່ານ ທິບພະສອນ ສຸຂະທໍາມະວົງ, ຜູ້ອໍານວຍການ ຄກລ, ວັນທີ 22 ກໍລະກົດ 2016.

ເພາະສະນັ້ນ, ໃນລະຫວ່າງລະດູການທີ່ສຳຄັນຂອງການກະສິກຳ (ປະມານເດືອນພຶດສະພາ-ເດືອນຕຸລາ) ອົງການປະຕິບັດງານກວດກູ້ ລບຕ ແມ່ນມີແນວໂນ້ມກວດກູ້ດິນສຳລັບການກໍ່ສ້າງ ແລະ ດິນທົ່ງຫຍ້າເພື່ອລ້ຽງສັດຫຼາຍກວ່າ. ຕາມປົກກະຕິ, ດິນສຳລັບການກໍ່ສ້າງ ໄດ້ຖືກຈັດເປັນປະເພດດິນບູລິມະສິດສູງໂດຍເຄື່ອງມືປະເມີນຜົນໜ້າວຽກພາຍໃນທີ່ນຳໃຊ້ໂດຍບັນດາອົງການປະຕິບັດງານ, ແຕ່ວ່າ ດິນກໍ່ສ້າງຈຳນວນພຽງເລັກນ້ອຍເທົ່ານັ້ນທີ່ໄດ້ຖືກສະເໜີໃຫ້ມີການກວດກູ້. ອີກດ້ານໜຶ່ງ, ດິນທົ່ງຫຍ້າສຳລັບລ້ຽງສັດ, ປົກກະຕິແລ້ວ ເປັນດິນທີ່ຖືກປະເມີນວ່າເປັນບູລິມະສິດຕ່ຳ ແຕ່ວ່າ ດິນປະເພດນີ້ພັດມີຫຼາຍສະໜາມທີ່ໄດ້ຮັບການກວດກູ້ ລບຕ. ພະນັກງານພາກສະໜາມແນະນຳທີມງານພວກຂ້າພະເຈົ້າຢ່າງເປັນທາງການວ່າ ການພິຈາລະນາພິເສດທີ່ບໍ່ເປັນທາງການຍັງມີອິດທິພົນຕໍ່ການລວມ (ຫຼື ບໍ່ລວມ) ເອົາໜ້າວຽກຕ່າງໆເຂົ້າໃນແຜນວຽກ, ຕົວຢ່າງ ໄລຍະຫ່າງຈາກຖະໜົນໃຫຍ່, ຕະຫຼາດ ແລະ ຄວາມສະດວກອື່ນໆສຳລັບພະນັກງານກວດກູ້ ເປັນຕົ້ນ.

## 8. ສິ່ງທີ່ພົບເຫັນ

8.1 ບັນດານະໂຍບາຍ (ແລະ ການມີສ່ວນຮ່ວມຂອງພາກການເມືອງ) ມີບົດບາດເຂັ້ມແຂງຕໍ່ການຈັດບູລິມະສິດໃນລະດັບມະຫາພາກ, ໃນຂະນະທີ່ລະບຽບການທີ່ເນັ້ນໜັກທາງດ້ານວິຊາການ ແລະ ການປະຕິບັດຕົວຈິງແມ່ນມີບົດບາດແຂງແຮງກວ່າຢູ່ໃນລະດັບຈຸລະພາກ.

8.2 ການຈັດບູລິມະສິດການກວດກູ້ ລບຕ ໄດ້ຮັບການເອົາໃຈໃສ່ທາງດ້ານວິຊາການຫຼາຍກວ່າ ແລະ ການເອົາໃຈໃສ່ທາງດ້ານການເມືອງແມ່ນມີໜ້ອຍຈາກການນຳ ແລະ ຜູ້ບໍລິຫານລະດັບຊາດ, ຜູ້ໃຫ້ທຶນສາກົນ ແລະ ທີ່ປຶກສາທາງດ້ານວິຊາການ.

8.3 ນະໂຍບາຍທີ່ແນະນຳຫຼ້າສຸດທີ່ສົ່ງເສີມການກວດກູ້ ລບຕ ຢູ່ໃນພື້ນທີ່ຢືນຢັນວ່າມີ ລບຕ ຕົກຄ້າງເປັນຂັ້ນຕອນສຳຄັນທີ່ຈະກ້າວໄປສູ່ການຈັດບູລິມະສິດໜ້າວຽກກວດກູ້ ລບຕ ໃນລະດັບມະຫາພາກ.

8.4 ນະໂຍບາຍ ແລະ ລະບຽບການກວດກູ້ ລບຕ ຢູ່ ສປປ ລາວ ຮຽກຮ້ອງໃຫ້ມີການເອົາໃຈໃສ່ຕື່ມຈາກຜູ້ທີ່ມີສິດຕັດສິນໃຈທາງການເມືອງເພື່ອໃຫ້ສົມດູນກັນລະຫວ່າງບັນດາບູລິມະສິດໃນນະໂຍບາຍມະຫາພາກ ແລະ ບູລິມະສິດທາງດ້ານວິຊາການ ແລະ ການຕັດສິນໃຈໃນພາກປະຕິບັດຕົວຈິງຢູ່ຂັ້ນຈຸລະພາກ.

8.5 ນະໂຍບາຍການຈັດບູລິມະສິດຍັງຂາດຄຳນິຍາມ. ເອກະສານນະໂຍບາຍຂອງລັດຖະບານໃນປັດຈຸບັນ ບໍ່ໄດ້ໃຫ້ນິ ຍາມຢ່າງຈະແຈ້ງກ່ຽວກັບຄຳວ່າ ບູລິມະສິດແຫ່ງຊາດ, ສະຖານະພາບຂອງບູລິມະສິດ"ຫຼື ດິນບູລິມະສິດ"ວ່າ ມີຄວາມໝາຍຄືແນວໃດ, ແລະ ບໍ່ໄດ້ສ້າງມາດຕະຖານເພື່ອກຳນົດບູລິມະສິດຕ່າງໆ (ຫຼື ບັນດາເປົ້າໝາຍຕ່າງໆເພື່ອ ວັດແທກຄວາມຄືບໜ້າໃນການກ້າວໄປສູ່ມາດຕະຖານນັ້ນ).

8.6 ຂໍ້ມູນ ແຜນວຽກຫຼາຍປີ 2016-2020 ຂອງ ສປປ ລາວ (ແຜນວຽກຫຼາຍປີ) ແຜນວຽກນີ້ບໍ່ຖືກສົ່ງ ຫຼື ຮັບ ຮອງເອົາຢ່າງກວ້າງຂວາງໃນຖານະເປັນເຄື່ອງມືທາງດ້ານນະໂຍບາຍຂອງລັດຖະບານ ນັບແຕ່ແຜນດັ່ງກ່າວໄດ້ຖືກອະນຸມັດໃນເດືອນມີນາ 2016 ເປັນຕົ້ນມາ.

8.7 ການຈັດບູລິມະສິດການກວດກູ້ໃນລະດັບມະຫາພາກ ເກີດຂຶ້ນໂດຍການຈັດສັນຄວາມຮັບຜິດຊອບໃຫ້ບັນດາແຂວງໂດຍສະເພາະ ແລະ ຈັດໃຫ້ອົງການປະຕິບັດງານຢູ່ໃນ

ແຂວງໂດຍສະເພາະ (ຕົວຢ່າງ: ຄກລ, ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ ແລະ ກອງທັບປະຊາຊົນລາວ). ໂດຍທົ່ວໄປແລ້ວ, ບັນດາແຂວງທີ່ໄດ້ຈັດສັນໃຫ້ນັ້ນ ປາກົດວ່າປະຕິບັດຕາມການຈັດອັນດັບທີ່ລະບຸຢູ່ໃນການສໍາຫຼວດຜົນກະທົບຂອງ ລບຕ ໃນປີ 1996-1997, ຊຶ່ງກໍານົດລາຍຊື່ຂອງບັນດາແຂວງທີ່ມີ ລບຕ ຕົກຄ້າງ ຢູ່ ສປປ ລາວ ໄວ້.

8.8 ຄວາມຫຍຸ້ງຍາກ ແລະ ບໍ່ສໍາເລັດຜົນໃນການເບິ່ງສໍາເນົາເອກະສານໂຄງການລົງທຶນຂອງລັດ (PIP) ແນະນໍາວ່າ ອາດຈະບໍ່ຖືກຕ້ອງກັບຄວາມເປັນຈິງທີ່ຈະສັນນິຖານວ່າ ບູລິມະສິດຂອງການກວດກູ້ ລບຕ ແລະ ແຜນວຽກໃນປັດຈຸບັນ (ຫຼື ໃນອະນາຄົດ, ສາມາດ) ພັດທະນາໂຄງສ້າງທີ່ຖືກຕ້ອງເພື່ອຮັບໃຊ້ບັນດາໂຄງການພັດທະນາຕ່າງໆທີ່ບັນຈຸຢູ່ໃນແຜນການລົງທຶນຂອງລັດ. ພ້ອມນີ້ ກໍອາດຈະບໍ່ຖືກຮັບຮູ້ວ່າຂໍ້ມູນທີ່ບັນຈຸຢູ່ໃນໂຄງການລົງທຶນຂອງລັດນັ້ນ ໄດ້ໃຫ້ລາຍລະອຽດພໍທີ່ຈະເປັນເຄື່ອງມືທີ່ມີປະໂຫຍດສໍາລັບການຈັດໜ້າວຽກການກວດກູ້ ລບຕ ຫຼື ບໍ່. ຍິ່ງໄປກວ່ານັ້ນ, ແຜນພັດທະນາຂອງແຂວງ, ເມືອງ ແລະ ບ້ານ (ໃນເວລາທີ່ຍັງມີແຜນນັ້ນຢູ່) ເລື້ອຍໆທີ່ເຫັນວ່າ ພວກມັນໃຫ້ຂໍ້ມູນທີ່ຈໍາກັດຫຼາຍກ່ຽວກັບຂອບເຂດ, ການຄໍ້າປະກັນທຶນ ແລະ ໄລຍະເວລາຂອງໂຄງການ.

8.9 ພະນັກງານຂອງລັດຫຼາຍຄົນ (ລວມທັງພນັກງານທີ່ຢູ່ໃນ ແລະ ນອກຂະແໜງການແກ້ໄຂບັນຫາ ລບຕ) ໄດ້ຕັ້ງຂໍ້ສັງເກດວ່າ ຂະແໜງແກ້ໄຂບັນຫາ ລບຕ ເປັນຂະແໜງການທີ່ແຍກອອກຈາກວຽກງານ ແລະ ບູລິມະສິດຂອງມັນເອງ. ພວກເຂົາບໍ່ໄດ້ຄິດຢ່າງມີສັນຊາດຕະຍານວ່າ ຂະແໜງແກ້ໄຂບັນຫາ ລບຕ ເປັນຂະແໜງການທີ່ຮັບໃຊ້ຄວາມຕ້ອງການໃນການພັດທະນາຂອງບັນດາຂະແໜງການອື່ນໆ (ເຖິງວ່າການແກ້ໄຂບັນຫາ ລບຕ ຢູ່ ສປປ ລາວ ມີມາຮອດ 20 ປີແລ້ວກໍຕາມ).

8.10 ໜ່ວຍງານຄຸ້ມຄອງຖານຂໍ້ມູນຂອງ ຄຊກລ ມີແຜນທີ່ຈຸດສຸມພັດທະນາຂອງລັດຖະບານ ປີ (2011-2015), ແລະ ກໍໄດ້ຈັດບັນຊີຈຸດສຸມພັດທະນາທີ່ອາດມີ ລບຕ ຕົກຄ້າງ.

8.11 ບໍ່ມີລະບົບສັງເກດການສໍາລັບ ຄຊກລ ເພື່ອນໍາໃຊ້ໃນການວາງແຜນ, ກວດກາ ຫຼື ລາຍງານຄວາມຄືບໜ້າກ່ຽວກັບການກວດກູ້ ລບຕ ຢູ່ຈຸດສຸມພັດທະນາ, ເຊິ່ງຄະນະບໍລິຫານຂອງ ຄຊກລ ກ່າວວ່າ ມັນເປັນນະໂຍບາຍຂອງລັດຖະບານ. ຄຊກລ ບໍ່ມີລາຍຊື່ຈຸດສຸມພັດທະນາທີ່ມີ ລບຕ ຕົກຄ້າງ ແຈກຢາຍໃຫ້ແຕ່ລະອົງການປະຕິບັດງານ. ຍິ່ງໄປກວ່ານັ້ນ ໜ່ວຍງານຄຸ້ມຄອງຖານຂໍ້ມູນກ່າວວ່າ ມັນບໍ່ມີລະບົບການລາຍງານແບບອັດຕະໂນມັດກ່ຽວກັບຈໍານວນພື້ນທີ່ຢືນຢັນວ່າມີ ລບຕ ຕົກຄ້າງ ຫຼື ຈໍານວນ ພື້ນທີ່ຢືນຢັນວ່າມີ ລບຕ ຕົກຄ້າງຢູ່ໃນຈຸດສຸມພັດທະນາ ມີ (ຈັກເຮັກຕາ) ທີ່ກວດກູ້ແລ້ວມາຮອດປັດຈຸບັນ. ການບໍ່ມີນະໂຍບາຍສະເພາະກ່ຽວກັບການວາງແຜນ, ການກວດກາ ແລະ ການລາຍງານກ່ຽວກັບນະໂຍບາຍດັ່ງກ່າວຂອງລັດຖະບານ ມັນໝາຍຄວາມວ່າ ຄຊກລ ບໍ່ຢູ່ໃນຕໍາແໜ່ງທີ່ຈະລາຍງານຄວາມຄືບໜ້າຂອງນະໂຍບາຍນີ້ໃຫ້ແກ່ການຈັດຕັ້ງຂັ້ນສູງກວ່າຂອງລັດຖະບານໄດ້.

8.12 ການຕັດສິນໃຈກ່ຽວກັບການຈັດບູລິມະສິດຢູ່ລະດັບຈຸລະພາກຂອງບັນດາອົງການປະຕິບັດງານ ບໍ່ມີຄວາມໂປ່ງໃສເຕັມສ່ວນ. ມີຜົນຮັບຈະແຈ້ງ (ເພາະວ່າໜ້າວຽກກວດກູ້ທີ່ສໍາເລັດແມ່ນໄດ້ຈັດເປັນບັນຊີໄວ້ຢູ່ໃນຖານຂໍ້ມູນ ອິມສະມາ) ແຕ່ ເຫດຜົນທີ່ວ່າເປັນຫຍັງໜ້າວຽກເຫຼົ່ານັ້ນຈຶ່ງໄດ້ຖືກຄັດເລືອກ ແລະ ເປັນຫຍັງໜ້າວຽກອື່ນທີ່ຄ້າຍຄືກັນ ຈຶ່ງຕ້ອງໄດ້ລໍຖ້າກວດກູ້ໃນປີຕໍ່ໆໄປ ສິ່ງນີ້ຍັງບໍ່ຈະແຈ້ງ. ການຕັດສິນໃຈກ່ຽວກັບການຈັດບູລິມະສິດແມ່ນເລີ່ມຈາກຂໍ້ມູນບາງສ່ວນໄດ້ຖືກບັນທຶກໄວ້ ຈົນເຖິງບໍ່ມີການບັນທຶກ. ລະບົບຂອງ ຄກລ ແມ່ນບັນທຶກຂໍ້ມູນໜ້ອຍທີ່ສຸດ (ຕົວຢ່າງ: ຄວາມໂປ່ງໃສມີໜ້ອຍສຸດ) ໃນ

ບັນດາອົງການປະຕິບັດງານທັງໝົດ (ຂໍ້ສັງເກດ: ບໍ່ໄດ້ສໍາພາດກອງກວດກູ້ ລບຕ ຂອງກອງທັບ). ບາງອົງການປະຕິບັດງານນໍາໃຊ້ຕາລະລາງ ຫຼື ແບບຟອມການລາຍງານ ເພື່ອບັນທຶກການປະເມີນຜົນຂອງແຕ່ລະໜ້າວຽກບູລິມະສິດ, ແລະ ໃນກໍລະນີຂອງອົງການຊ່ວຍເຫຼືອຂອງປະຊາຊົນ ນ້ອກແອຣ໌ ແມ່ນດໍາເນີນໃນທຸກໆບ້ານ. ແຕ່ລະອົງການປະຕິບັດງານຍັງນໍາໃຊ້ວິທີການບໍ່ບັນທຶກຂໍ້ມູນໄວ້ ເພື່ອເຈລະຈາ ແລະ ຕົກລົງກັນກ່ຽວກັບການຈັດບູລິມະສິດໃນລະດັບຈຸລະພາກ, ຕົວຢ່າງ: ການສົນທະນາ ແລະ ພົບປະກັນຢູ່ຂັ້ນບ້ານ ແລະ ຂັ້ນເມືອງ, ແລະການປຶກສາຫາລືກັນຂອງພະນັກງານອົງການປະຕິບັດງານດ້ວຍກັນ.

8.13 ທຸກໆອົງການປະຕິບັດງານມີລະບົບ ແລະ ບັນທັດຖານຂອງຕົນເອງໃນການຈັດບູລິມະສິດໜ້າວຽກຢູ່ຂັ້ນຈຸລະພາກ ສໍາລັບໜ້າວຽກການກວດກູ້ຮັບໃຊ້ສ່ວນບຸກຄົນ. ການຈັດບູລິມະສິດໜ້າວຽກບາງຄັ້ງຍັງປະຕິບັດໄປຕາມຄໍາສັ່ງ ເຊິ່ງບ້ານຈະຖືກສະເໜີໃຫ້ແກ່ອົງການກວດກູ້ ລບຕ. ບັນທັດຖານໄດ້ກອມເອົາ: ປະເພດດິນ, ປະເພດການນໍາໃຊ້ດິນ, ບັນທັດຖານທາງສັງຄົມແມ່ນກ່ຽວກັບອຸປະຕິເຫດ, ຖານະທາງເສດຖະກິດຂອງເຈົ້າຂອງດິນ ແລະ ຈໍານວນຜູ້ໄດ້ຮັບຜົນປະໂຫຍດ. ບາງອົງການປະຕິບັດງານກໍໃຫ້ນໍ້າໜັກ (ໃຫ້ຄະແນນຫຼາຍກວ່າ) ສໍາລັບບັນຫາຂອງດິນ ໃນຂະນະທີ່ບາງອົງການປະຕິບັດງານແມ່ນໃຫ້ນໍ້າໜັກສົມດູນກັນລະຫວ່າງບັນຫາຂອງດິນ ແລະ ບັນຫາທາງສັງຄົມ.

8.14 ການມີສ່ວນຮ່ວມໜ້ອຍສຸດຂອງລະດັບບ້ານ ຫຼື ລະດັບຄອບຄົວ, ໄດ້ສັງເກດເຫັນຢູ່ໃນຂະບວນການຈັດບູລິມະສິດໃນລະດັບຈຸລະພາກ. ຄະນະບ້ານ ແລະ ເຈົ້າຂອງດິນລາຍງານວ່າ ການກວດກູ້ໄດ້ຮັບການປະຕິບັດຢູ່ບ້ານຂອງພວກເຂົາ ກໍເພາະວ່າ "ມັນຢູ່ໃນແຜນ, ແລະ ກວດກູ້ໃນສະໜາມສະເພາະຢູ່ໃນບ້ານຂອງພວກເຂົາກໍເພາະວ່າ ເຈົ້າຂອງດິນຄືຜູ້ທໍາອິດທີ່ໄດ້ລາຍງານກ່ຽວກັບການຕົກຄ້າງຂອງ ລບຕ ຫຼື ສະເໜີຂໍກວດກູ້. ບໍ່ມີຂະບວນການຈັດບູລິມະສິດແບບມີສ່ວນຮ່ວມຂອງຂັ້ນບ້ານປາກົດໃຫ້ເຫັນ. ສິ່ງນີ້ແມ່ນເກີດສະໝໍ່າສະເໝີທົ່ວທຸກບ້ານຂອງ ຄກລ ແລະ ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ.

8.15 ການຈັດບູລິມະສິດໃນລະດັບຈຸລະພາກ ອາດຈະຖືກກະທົບຈາກການມີຂໍ້ມູນທີ່ບໍ່ແຂງແຮງ ແລະ ພາກປະຕິບັດຕົວຈິງໃນການຈັດການຖານຂໍ້ມູນຖືກສັງເກດເຫັນຢູ່ໃນຫຼາຍອົງການ. ສິ່ງນີ້ ລວມທັງການຕອບສະໜອງຕໍ່ການຂໍຂໍ້ມູນ, ການກວດສອບ ແລະ ການວິເຄາະຂໍ້ມູນທີ່ໄດ້ຮັບ, ແລະ ການກວດສອບກ່ຽວກັບການແລກປ່ຽນຂໍ້ມູນໂດຍບັນດາຜູ້ຈັດການ. ເຊື່ອມໂຍງກັບຈຸດນີ້, ກະຊວງກ່ຽວຂ້ອງຂອງລັດຖະບານບາງກະຊວງ ສາມາດກວດສອບໄດ້ກ່ຽວກັບການສົນທະນາການຈັດບູລິມະສິດຂອງພວກເຂົາເຈົ້າ ກັບຕົວຈິງດ້ານນະໂຍບາຍ, ລະບຽບການ ແລະ ການປະຕິບັດ.

## 9. ພາກແນະນໍາ

9.1 ຫ້ອງການ ຄຊກລ, ໂດຍປຶກສາຫາລືກັບຜູ້ຕັດສິນໃຈທາງການເມືອງ, ກະຊວງທີ່ກ່ຽວຂ້ອງ ແລະ ຄູ່ຮ່ວມງານສາກົນ ຄວນ: ພັດທະນານະໂຍບາຍການຈັດບູລິມະສິດກວດກູ້ ລບຕ, ລວມທັງນິຍາມທີ່ຈະແຈ້ງ ກ່ຽວກັບບູລິມະສິດຂອງຂະແໜງແກ້ໄຂບັນຫາ ລບຕ; ສ້າງເອກະສານຕິດຕາມບັນທັດຖານ ເພື່ອກໍານົດ (ແລະ ອະທິບາຍ) ບູລິມະສິດເຫຼົ່ານັ້ນ; ແລະ ກໍານົດບັນດາຕົວຊີ້ວັດ ເພື່ອວັດແທກຜົນສໍາເລັດເພື່ອກ້າວໄປເຖິງບັນທັດຖານນັ້ນ.

9.2 ນະໂຍບາຍການຈັດບູລິມະສິດກ່ຽວກັບ ລບຕ ຄວນຈະສັງລວມເອົາກົນປະຕິບັດທີ່ສາມາດປ່ຽນແປງບັນດາບູລິມະສິດການພັດທະນາຂອງລັດຖະບານ (ຫຼື ບັນດາບູລິມະສິດທາງການອື່ນໆ) ຈາກແຜນ ແລະ ຍຸດທະສາດ (ຕົວຢ່າງ: ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ) ເຂົ້າໃນແຜນວຽກຂອງທຸກອົງການປະຕິບັດງານກວດກູ້ ລບຕ.

9.3 ຄຊກລ ຄວນຮ່າງ ແລະ ເຜີຍແຜ່ ແນວທາງການສະໜັບສະໜູນສົ່ງໃຫ້ກະຊວງທີ່ກ່ຽວຂ້ອງ ກ່ຽວກັບ ເຮັດແນວໃດໃຫ້ບັນດາກະຊວງຕ່າງໆສະເໜີໂຄງການ ຫຼື ສະໜາມບູລິມະສິດຂອງຕົນເພື່ອສຳຫຼວດ ຫຼື ກວດກູ້ ລບຕ.

9.4 ລັດຖະບານລາວ ຄວນປະເມີນຄືນແຕ່ລະໄລຍະໃນລະດັບມະຫາພາກ ກ່ຽວກັບການຈັດສັນພື້ນທີ່ (ແຂວງ) ທີ່ມີຄວາມຕ້ອງການກວດກູ້ ລບຕ, ການຈັດສັນອົງການປະຕິບັດງານກວດກູ້ຮັບຜິດຊອບພື້ນທີ່ເຫຼົ່ານັ້ນ, ແລະ ຈັດຫາແຫຼ່ງທຶນຈາກພາຍໃນ ແລະ ສາກົນເພື່ອການກວດກູ້ ລບຕ.

9.5 ຄຊກລ ຄວນພະຍາຍາມເຮັດແນວໃດເພື່ອໃຫ້ໄດ້ຮັບສຳເນົາເອກະສານແຜນການລົງທຶນຂອງລັດ (PIP), ແລະ ກະຕຸກຊຸກຍູ້ພະນັກງານຫ້ອງການ ຄຊກລ ແຂວງ ແລະ ອົງການປະຕິບັດງານກວດກູ້ ລບຕ ຢູ່ແຂວງ ໃຫ້ໄດ້ຮັບແຜນການລົງທຶນຂອງລັດຂັ້ນແຂວງ ແລະ ເມືອງ, ເພື່ອແຈ້ງການຕັດສິນໃຈກ່ຽວກັບການຈັດບູລິມະສິດ ແລະ ການວາງແຜນວຽກ.

9.6 ຄຊກລ ຄວນສົ່ງເສີມຄວາມເຂົ້າໃຈຂອງບັນດາຫ້ອງການກ່ຽວຂ້ອງຂອງລັດຖະບານ, ແລະ ກະຊວງແຜນການ ແລະ ການລົງທຶນໂດຍສະເພາະ ກ່ຽວກັບການຊຸກຍູ້ການບໍລິການຂອງຂະແໜງແກ້ໄຂບັນຫາ ລບຕ ເພື່ອເຮັດໃຫ້ວຽກງານແກ້ໄຂບັນຫາ ລບຕ ສາມາດສະໜັບສະໜູນວຽກງານພັດທະນາຂອງລັດຖະບານ. ຂໍ້ມູນ ແມ່ນຄວນ ລວມເຖິງການແນະນຳຢ່າງເປັນຮູບປະທຳກ່ຽວກັບວ່າ ເຮັດແນວໃດກະຊວງຕ່າງໆຈຶ່ງຈະສາມາດນຳສະເໜີໂຄງການ ຫຼື ໜ້າວຽກທີ່ອາດເປັນໄປໄດ້ສຳລັບການກວດກູ້ ລບຕ ແລະ ມີສ່ວນຮ່ວມໃນການຕັດສິນໃຈກ່ຽວກັບການຈັດບູລິມະສິດ.

9.7 ຄຊກລ ແລະ ອົງການປະຕິບັດງານກວດກູ້ ລບຕ ຄວນພັດທະນາລະບຽບການໃນການປຶກສາຫາລື ເພື່ອຮັບປະກັນວ່າຄວາມຕ້ອງການ ແລະ ຄວາມຄິດຄວາມເຫັນຂອງເຈົ້າຂອງດິນແຕ່ລະຄົນ, ແລະ ຂອງຊຸມຊົນພາຍໃນບ້ານ ໄດ້ຖືກລວມເຂົ້າໃນຂະບວນການຕັດສິນໃຈກ່ຽວກັບການຈັດບູລິມະສິດຢູ່ລະດັບຈຸລະພາກ. ການແນະນຳນີ້ ສະທ້ອນເຖິງຂໍ້ກຳນົດຢູ່ໃນມາດຕະຖານແຫ່ງຊາດກ່ຽວກັບ"ການສົ່ງເສີມການມີສ່ວນຮ່ວມຂອງຊຸມຊົນທ້ອງຖິ່ນໃນການກຳນົດຄວາມຈຳເປັນ ແລະ ບູລິມະສິດໃນການກວດກູ້ ລບຕ ແລະ ສົ່ງຂໍ້ມູນເຫຼົ່ານີ້ໃຫ້ຫ້ອງການ ຄຊກລ ແຂວງ ແລະ ເມືອງ.

9.8 ຄຊກລ ແລະ ຄກລ ຄວນພະຍາຍາມຢ່າງສະໝ່ຳສະເໝີ ແລະ ສຳຄັນເພື່ອປັບປຸງການຈັດການຖານຂໍ້ມູນໃນທຸກຂັ້ນຕອນ ນັບແຕ່: ການເກັບກຳ, ການປ້ອນ ແລະ ການລາຍງານ, ແຕ່ຍັງຈະຕ້ອງນຳໃຊ້ຂໍ້ມູນຢ່າງຕັ້ງໜ້າເພື່ອເປັນຫຼັກຖານສຳລັບຜູ້ບໍລິຫານຂະແໜງແກ້ໄຂບັນຫາ ລບຕ. ໃນຂະນະທີ່ໜ່ວຍງານຄຸ້ມຄອງຖານຂໍ້ມູນຂອງ ຄຊກລ ແມ່ນຮັບຜິດຊອບໃນການເກັບຮັກສາ ແລະ ແກ້ໄຂຂໍ້ມູນທີ່ມີຢ່າງຫຼວງຫຼາຍ ສຳລັບພະນັກງານຄຸ້ມຄອງຖານຂໍ້ມູນເພື່ອເພີ່ມທະວີການປະຕິບັດຕົວຈິງໃນການວິເຄາະຂໍ້ມູນຂອງພວກເຂົາເຈົ້າ.

9.9 ຄຊກລ ຄວນແນະນຳລະບົບນຳໃຊ້ຖານຂໍ້ມູນ IMSMA ໃຫ້ເປັນປະໂຫຍດໃນການວາງແຜນ, ການກວດກາ ແລະ ການລາຍງານຄວາມຄືບໜ້າຂອງການກວດກູ້ ໂດຍສອດຄ່ອງກັບບັນດາບູລິມະສິດຕ່າງໆຕາມນະໂຍບາຍຂອງລັດຖະບານ.

ເອກະສານຊ້ອນທ້າຍ: 1

# ໂຄງຮ່າງການຈັດຕັ້ງຂອງຂະແໜງແກ້ໄຂບັນຫາ ລບຕ



## ເອກະສານຊ້ອນທ້າຍ 2: ຕາລະລາງບຸກຄະລາກອນ ແລະ ອົງການຕ່າງໆທີ່ໄດ້ປຶກສາຫາລື

| ຊື່ | ຕໍາແໜ່ງ | ເບີໂທ |
|---|---|---|
| **ນະຄອນຫຼວງວຽງຈັນ** | | |
| ທ່ານ ພູຂຽວ ຈັນທະສົມບູນ | ຫົວໜ້າຫ້ອງການ ຄຊກລ | +856-20-95445244 |
| ທ່ານ ບຸນພະມິດ ໂສມວິຈິດ | ຮອງຫົວໜ້າຫ້ອງການ ຄຊກລ, ຊີ້ນໍາວຽກປະຕິບັດງານ. | +856-20-99991124 |
| ທ່ານ ຄໍາມຸງຄຸນ | ຫົວໜ້າໜ່ວຍງານຄຸ້ມຄອງຖານຂໍ້ມູນ ລບຕ, ຫ້ອງການ ຄຊກລ | +856-20-55420542 |
| ທ່ານ ນາງ ພອນວັນ ອູດທະວົງ | ຮອງຫົວໜ້າກົມແຜນການ, ກະຊວງແຜນການ ແລະ ການລົງທຶນ | +856-20-95959336 |
| ທ່ານ ຄໍາພູ | ພະແນກພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ, ກົມແຜນການ, ກະຊວງແຜນການ ແລະ ການລົງທຶນ | +856-20-55224455 |
| ທ່ານ ຈິດທະວີໃສ | ຫົວໜ້າກົມແຜນການ ແລະ ການຮ່ວມມືສາກົນ, ຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ | +856-20-56898800 |
| ທ່ານ ຈັນມີ ພົມມະລາດ | ຫົວໜ້າພະແນກ ສະຖິຕິ ແລະ ແຜນການ, ຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ | +856-20-55044469 |
| ທ່ານ ທິບພະສອນ ສຸຂະທໍາມະວົງ | ອໍານວຍການ ໂຄງການເກັບກູ້ລະເບີດແຫ່ງຊາດ (ຄກລ) | +856-20-22575123 |
| ທ່ານ ເສົາມະນ ີ | ຫົວໜ້າໜ່ວຍງານໂຄງການ, ຄກລ | +856-20-22222030 |
| ທ່ານ ກິ ບຸດສະດາ | ຫົວໜ້າໜ່ວຍງານປະຕິບັດງານ, ຄກລ | |
| ທ່ານ ກອງແກ້ວ ແສງອຸດົມໄຊ | ຮອງຫົວໜ້າໜ່ວຍງານປະຕິບັດງານ, ຄກລ | +856-20-23632323 |
| ທ່ານ ອາແລັນ ໂພສະເຕີນ | ຫົວໜ້າທີ່ປຶກສາ ດ້ານລະເບີດບໍ່ທັນແຕກ ຂອງ UNDP | +856-20-55505615 |
| ທ່ານ ໂອລີເວ ໂບດູອິນ | ຫົວໜ້າບໍລິຫານໂຄງການ, ກຸ່ມບໍລິສັດສະເຕີລິງສາກົນ | +856-20-55213173 |
| ທ່ານ ໄນໂຈ ອໍຣ໌ | ທີ່ປຶກສາດ້ານວິຊາການ, ກຸ່ມບໍລິສັດສະເຕີລິງສາກົນ. | +856-20-22461840 |
| ທ່ານ ຣາຢາຊິ | ທີ່ປຶກສາດ້ານວິຊາການ ອົງການໄຈກາ ປະຈໍາ ຄກລ | +856-20-55210821 |
| ທ່ານ ນາງ ສຸຊານນາ ສະມາລ໌ | ຫົວໜ້າອົງການ ເຮໂລ ທຣາສ໌ທ໌ | +856-20-96129542 |
| ທ່ານ ໂຈນາສ໌  ແຊັກຣິເຊີນ | ຫົວໜ້າອົງການຊ່ວຍເຫຼືອຂອງປະຊາຊົນ ນ໊ອກແວຣ໌. | +856-20-22232312 |
| ທ່ານ ຊຣັບ ອາບູເຊຄາ | ທີ່ປຶກສາດ້ານຖານຂໍ້ມູນ, ອົງການຊ່ວຍເຫຼືອຂອງປະຊາຊົນ ນ໊ອກແວຣ໌ | +856-20-22212843 |
| ທ່ານ ໄຊມອນ ເຣຍ | ຫົວໜ້າອົງການເກັບກູ້ລະເບີດ ແມັກ | +856-20-59222420 |
| ທ່ານ ນາງ ຄີມ ວໍເຣນ | ຫົວໜ້າໂຄງການເກັບກູ້ລະເບີດ, ອົງການສາກົນ ເພື່ອຄົນພິການ | +856-20-91918092 |
| **ຊຽງຂວາງ** | | |
| ທ່ານ ຈັນທີ | ຫົວໜ້າຫ້ອງການ ຄຊກລ ແຂວງຊຽງຂວາງ. | |
| ທ່ານ ຂັນທິດາວ | ພະນັກງານຫ້ອງການ ຄຊກລ ແຂວງຊຽງຂວາງ | +856-20-54633336 |
| ທ່ານ ອາຢູເຕຍ | ຫົວໜ້າຫ້ອງການພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ແຂວງຊຽງຂວາງ | |
| ທ່ານ ວັນໄຊ | ຫົວໜ ້າພະແນກ ແຜນການ ແລະ ການລົງທຶນ ແຂວງຊຽງຂວາງ | +856-20-22340257 |
| ທ່ານ ກົງເພັດ ພົມມະວົງ | ຜູ້ປະສານງານ ຄກລ ແຂວງຊຽງຂວາງ | +856-20-22533667<br>+856-20-55128881 |
| ທ່ານ ວັນໄຊ | ຮອງຜູ້ປະສານງານ ຄກລ ແຂວງຊຽງຂວາງ. | |
| ທ່ານ ຄໍາຫຼ້າ ສີມມະວົງ | ຫົວໜ້າໜ່ວຍງານສໍາຫຼວດບໍ່ແມ່ນວິຊາການ, ຄກລ ແຂວງຊຽງຂວາງ | +856-20-22522069 |
| ທ່ານ ນິນລ໌ ອາໂນດທ໌ | ຫົວໜ້າປະຕິບັດງານດ້ານວິຊາການ, ອົງການເກັບກູ້ລະເບີດ ແມັກ | +856-20-55529124 |
| ທ່ານ ນະຄອນສີ | ຫົວໜ້າພົວພັນຊຸມຊົນ, ອົງການເກັບກູ້ລະເບີດ ແມັກ | +856-20-55531898 |
| ທ່ານ ຈາຫາ | ພະນັກງານພົວພັນຊຸມຊົນ, ອົງການເກັບກູ້ລະເບີດ ແມັກ | |
| ທ່ນ ຄອນຄໍາ | ຄະນະບ້ານ ບ້ານນາຍອງ, ເມືອງຄໍາ, ແຂວງຊຽງຂວາງ | |
| ທ່ານ ຄໍາເລືອນ | ຮອງນາຍບ້ານ ບ້ານລ້ອງປິວ, ເມືອງຄໍາ | +856-20-56726948 |
| ນາງ ໃໝ່ | ເຈົ້າຂອງດິນ, ບ້ານບອມລອງ (ລ້ອງປິວ) | |
| ນາງ ທຸມ | ຄະນະບ້ານ ບ້ານຈ້າງ, ເມືອງຄູນ | |
| ທ່ານ ຊຽງໝອນ | ເຈົ້າຂອງດິນ, ບ້ານຈ້າງ, ເມືອງຄູນ | |

| ສະຫວັນນະເຂດ | | |
|---|---|---|
| ທ່ານ ພູເຂົາ ແກ້ວມີໄຊ | ຫົວໜ້າຫ້ອງການ ຄຊກລ ແຂວງສະຫວັນນະເຂດ | |
| ທ່ານ ຊຽນ | ພະນັກງານຫ້ອງການ ຄຊກລ, ແຂວງສະຫວັນນະເຂດ. | |
| ທ່ານ ຄຳຫຼ້າ | ຮອງເຈົ້າເມືອງ, ເມືອງເຊໂປນ. | |
| ທ່ານ ເກດສະຫວັນ | ຫົວໜ້າຫ້ອງການພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ເມືອງເຊໂປນ | |
| ທ່ານ ສົມບັດ | ຫົວໜ້າຫ້ອງການແຜນການ ແລະ ການລົງທຶນ, ເມືອງເຊໂປນ | |
| ທ່ານ ສຸບິນ | ຜູ້ປະສານງານ ຄກລ ແຂວງສະຫວັນນະເຂດ | |
| ທ່ານ ສາລີ | ຮອງຜູ້ປະສານງານ ຄກລ ແຂວງສະຫວັນນະເຂດ | |
| ທ່ານ ພັນທາ | ຜູ້ຊີ້ນຳວຽກປະຕິບັດງານ, ອົງການ ເຮໂລ ທຣາສ໌ທ໌, ເຊໂປນ. | |
| ທ່ານ ລະຄອນຄຳ | ພະນັກງານສຶກສາຄວາມສ່ຽງຈາກ ລບຕ, ອົງການ ເຮໂລ ທຣາສ໌, ເຊໂປນ. | |
| ທ່ານ ອ້ອຍ | ນາຍບ້ານ ບ້ານລາດຫໍ້, ເມືອງເຊໂປນ. | +856-20-97749266 |
| ທ່ານ ໂກເນ | ຄະນະບ້ານ ບ້ານນາຫຼວງ, ເມືອງເຊໂປນ | |
| ທ່ານ ວັນ | ເຈົ້າຂອງດິນ, ບ້ານນາຫຼວງ, ເມືອງເຊໂປນ | |

## ເອກະສານຊ້ອນທ້າຍ 3: ເອກະສານນະໂຍບາຍທີ່ກ່າວເຖິງການຈັດບູລິມະສິດວຽກງານ ລບຕ

| | ວັນທີ | ຫົວຂໍ້ເອກະສານ | ເລກທີອ້າງອີງ | ເນື້ອໃນ |
|---|---|---|---|---|
| **ເອກະສານກ່ຽວກັບ ລບຕ ໂດຍສະເພາະ** | | | | |
| 1 | 2003 | ແຜນຍຸດທະສາດແຫ່ງຊາດຂອງຂະແໜງແກ້ໄຂບັນຫາ ລບຕ ຢູ່ ສປປ ລາວ 2003-2013, ເສັ້ນທາງກ້າວສູ່ຄວາມປອດໄພ I (SPF1) | | ເສັ້ນທາງກ້າວສູ່ຄວາມປອດໄພ 1 ໄດ້ລະບຸ 3 ລະດັບຂອງບູລິມະສິດ ຄື (ສູງ, ກາງ, ຕ່ຳ), ແລະ 11 ປະເພດດິນ ທີ່ຮຽກຮ້ອງການກວດກູ້. ຍັງຄົງເປັນດິນກະສິກຳ ທີ່ຖືກຈັດເປັນປະເພດດິນບູລິມະສິດສູງ ແລະ ສ່ວນໜຶ່ງຂອງດິນອື່ນໆຖືກຈັດເປັນບູລິມະສິດກາງ ທີ່ຈະຖືກກວດກູ້ ລບຕ ເຖິງວ່າບໍ່ໄດ້ໃຫ້ຂອບເຂດເວລາກໍຕາມ. ເສັ້ນທາງກ້າວສູ່ຄວາມປອດໄພ 1 ຍັງໃຫ້ການເກດວ່າ "**ຈຳເປັນຕ້ອງກຳນົດ ແລະ ຈັດບູລິມະສິດພື້ນທີ່ ທີ່ມີ ລບຕ ຕົກຄ້າງ ເພີ່ມຕື່ມ.** |
| 2 | 2009 | ສົນທິສັນຍາວ່າດ້ວຍການເກືອດຫ້າມລະເບີດລູກຫວ່ານ (CCM) | ສົນທິສັນຍາວ່າດ້ວຍການເກືອດຫ້າມລະເບີດລູກຫວ່ານ, ມາດຕາ 4.2.ກ), ໜ້າ.12 (ພາສາລາວ) ແລະ ໜ້າ 40 (ພາສາອັງກິດ). | ຮຽກຮ້ອງລັດພາຄີ "**ປະເມີນ ແລະ ຈັດບູລິມະສິດ ຄວາມຈຳເປັນສຳລັບການກວດກູ້.** |
| 3 | 2011 | ເປົ້າໝາຍພັດທະນາສະຫັດສະວັດ ອັນດັບທີ 9 (MDG9) | ລັດຖະບານແຫ່ງ ສປປ ລາວ/ອົງການ ສປຊ ເພື່ອການພັດທະນາ, ເປົ້າໝາຍສະຫັດສະວັດອັນດັບທີ 9: ຫຼຸດຜ່ອນຜົນກະທົບຂອງ ລບຕ, ຕົວຊີ້ວັດ 9ກ, 2011. | (ເປົ້າໝາຍສະຫັດສະວັດອັນດັບທີ 9) ຕົວຊີ້ວັດ 9ກ ໄດ້ວາງເປົ້າໝາຍ ຄືໃຫ້ສຳເລັດການກວດກູ້ ລບຕ ອອກຈາກດິນບູລິມະສິດ/**ດິນກະສິກຳທີ່ມີມູນຄ່າສູງ**" ໃນປີ 2020. |
| 4 | 2012 | ແຜນຍຸດທະສາດແຫ່ງຊາດຂອງຂະແໜງແກ້ໄຂບັນຫາ ລບຕ 2011-2020, ຮັບຮູ້ກັນໃນນາມ ເສັ້ນທາງກ້າວສູ່ຄວາມປອດໄພ II (SPF2). | ຄຊກລ, ເສັ້ນທາງກ້າວສູ່ຄວາມປອດໄພ II (2011-2020), ໜ້າ.7. | ການກຳນົດ ແລະ ການປົດປ່ອຍດິນ [ຜ່ານການສຳຫຼວດ ແລະ ກວດກູ້] "**ດິນບູລິມະສິດ ອີງໃສ່ບັນທັດຖານການທີ່ຈະແຈ້ງ** ... ພິຈາລະນາຕາມ" ແຜນພັດທະນາແຫ່ງຊາດ, ແຂວງ, ເມືອງ ແລະ ຂັ້ນບ້ານ" ເປັນມາດຕະການ ທີ່ສຳຄັນ. |
| 5 | 2012 | ມາດຕະຖານແຫ່ງຊາດຂອງ ຂະແໜງແກ້ໄຂບັນຫາ ລບຕ ຂອງ ສປປ ລາວ. | ຄຊກລ, ມາດຕະຖານແຫ່ງຊາດ ຂອງຂະແໜງການແກ້ໄຂບັນຫາ ລບຕ, ບົດທີ 7: ການກວດກູ້ ລບຕ, ຍໍ້ໜ້າ 7.1, ຄວາມຕ້ອງການໂດຍທົ່ວໄປ, ໜ້າ 7-7, ວັນທີ 15 ຕຸລາ 2012. | "ຍົກເວັ້ນສຳລັບການເກັບກູ້ ລບຕ ເພື່ອທຸລະກິດ, ອົງການປະຕິບັດງານກວດກູ້ ລບຕ ທັງໝົດຈະຕ້ອງຂຶ້ນແຜນ ແລະ ປະຕິບັດໃຫ້ສຳເລັດຕາມບູລິມະສິດໃນປັດຈຸບັນຂອງລັດຖະບານ. **ຂໍ້ສັງເກດ**: ເນື້ອທີ່ດິນທັງໝົດທີ່ໄດ້ກຳນົດເພື່ອການກວດກູ້ຄວນເປັນດິນບູລິມະສິດ/ມີຄຸນຄ່າສູງ ໂດຍສອດຄ່ອງກັບເປົ້າໝາຍພັດທະນາສະຫັດສະວັດອັນດັບ 9 ຂອງ ສປປ ລາວ; ບູລິມະສິດທີ່ສອດຄ່ອງກັບແຜນຍຸດທະສາດຂອງຂະແໜງແກ້ໄຂບັນຫາ ລບຕ ໃນປັດຈຸບັນ [ຕົວຢ່າງ: ເສັ້ນທາງກ້າວສູ່ຄວາມປອດ |

| | | | | |
|---|---|---|---|---|
| | | | | ໄພ 2]; ຫຼື ບູລິມະສິດອື່ນໆຕາມທີ່ໄດ້ກຳນົດໄວ້ ໂດຍ ຄຊກລ. |
| 6 | 2012 | ຕາມລາຍລະອຽດຢູ່ຂ້າງເທິງ | ຄຊກລ, ມາດຕະຖານແຫ່ງຊາດ ຂອງຂະແໜງແກ້ໄຂບັນຫາ ລບຕ ຂອງ ສປປ ລາວ, ບົດທີ 7: ການເກັບກູ້ ລບຕ, ວັນທີ 15 ຕຸລາ 2012, ໜ້າ. 6-7. | ອົງການເກັບກູ້ ລບຕ ມີຄວາມຮັບຜິດຊອບ ໃນການ: "ກະຕຸກຊຸກຍູ້ໃຫ້ຊຸມຊົນທ້ອງຖິ່ນມີສ່ວນຮ່ວມໃນການກຳນົດຄວາມຈຳເປັນ ແລະ ບູລິມະສິດສຳລັບການກວດກູ້ ແລະ ລາຍງານຂໍ້ມູນເຫຼົ່ານີ້ໃຫ້ຫ້ອງການ ຄຊກລ ແຂວງ, ເມືອງ. |
| 7 | 2012 | ຕາມລາຍລະອຽດຢູ່ຂ້າງເທິງ | ຄຊກລ, ມາດຕະຖານແຫ່ງຊາດຂອງ ຂະແໜງການແກ້ໄຂບັນຫາ ລບຕ ຂອງ ສປປ ລາວ, ບົດທີ 6: ການສຳຫຼວດ, ວັນທີ 15 ຕຸລາ 2012, ໜ້າ.6-8. | "ການສຳຫຼວດ ແລະ ການປົດປ່ອຍເນື້ອທີ່ດິນ ... ຈະຖືກຄັດເລືອກໂດຍອີງໃສ່ບູລິມະສິດໃນປັດຈຸບັນຂອງລັດຖະບານແຫ່ງ ສປປ ລາວ. **ຂໍ້ສັງເກດ**: ເນື້ອທີ່ດິນທັງໝົດທີ່ໄດ້ກຳນົດເພື່ອການກວດກູ້ຄວນຈະເປັນດິນທີ່ ມີມູນຄ່າສູງ ແລະ ບູລິມະສິດສູງ ໂດຍສອດຄ່ອງກັບເປົ້າໝາຍພັດທະນາສະຫັດສະວັດອັນດັບທີ 9 ຂອງລັດຖະບານ ສປປ ລາວ; ບູລິມະສິດ ທີ່ສອດຄ່ອງກັບແຜນຍຸດທະສາດຂອງຂະແໜງການແກ້ໄຂບັນຫາ ລບຕ ໃນປັດຈຸຫຼື ບູລິມະສິດອື່ນໆຈຳນວນໜຶ່ງທີ່ໄດ້ກຳນົດໂດຍ ຄຊກລ. |
| 8 | 2015 | ລະບຽບການສຳຫຼວດ ລບຕ ຂອງ ສປປ ລາວ | ຄຊກລ, ລະບຽບການສຳຫຼວດ ລບຕ ຂອງ ສປປ ລາວ, ລົງວັນທີ 15 ມັງກອນ 2015, ຍໍ້ໜ້າ 13. ການກວດກູ້ເນື້ອທີ່, ໜ້າ. 19. | "ໂດຍທົ່ວໄປແລ້ວ, ການກວດກູ້ເນື້ອທີ່ ແມ່ນຖືກປະຕິບັດຢູ່ໃນພື້ນທີ່ຍືນຢັນວ່າມີ ລບຕ ຫຼື ກຳນົດໂດຍສອດຄ່ອງກັບລະບຽບການສະບັບນີ້ເທົ່ານັ້ນ; ເຖິງຢ່າງໃດກໍ່ຕາມ, ສາມາດອະນຸຍາດໃຫ້ດຳເນີນການກວດກູ້ໂດຍກົງໄດ້ໃນພື້ນທີ່ ທີ່ມີຫຼັກຖານລະເບີດລູກຫວ່ານສະເພາະທີ່ກຳນົດໂດຍການສຳຫຼວດດ້ານວິຊາການ:<br>**ກ. ດິນທີ່ຢູ່ໃນຖານະເປັນດິນບູລິມະສິດເພື່ອຮັບປະກັນແກ່ການກວດກູ້ໃນເວລານັ້ນ** |
| 9 | 2016 | ແຜນວຽກຫຼາຍປີ ຂອງ ສປປ ລາວ ປີ 2016-2020 (ແຜນວຽກຫຼາຍປີ) | ຄຊກລ, ແຜນ, ເລກທີ.110/ຄຊກລ, ວັນທີ 01 ມີນາ 2016, ໜ້າ 12 ແລະ ໜ້າ 18. | ການສຳຫຼວດ ແລະ ກວດກູ້ ລບຕ ຈະຖືກປະຕິບັດຢູ່ "**ຈຸດສຸມພັດທະນາຂອງລັດຖະບານ" ຢູ່ຂະໜານໂຄງການພັດທະນາຂອງລັດ ແລະ ເນື້ອທີ່ດິນກະສິກຳ ທີ່ນຳໃຊ້ໂດຍປະຊາຊົນລາວບັນດາເຜົ່າ.** |
| 10 | 2016 | ເປົ້າໝາຍພັດທະນາແບບຍືນຍົງອັນດັບທີ 18 (SDG 18): ເກັບກູ້ລະເບີດບໍ່ທັນແຕກ ທີ່ເປັນອຸປະສັກຕໍ່ການພັດທະນາແຫ່ງຊາດ. | ອົງການ ສປຊ ເພື່ອການພັດທະນາ/ລັດຖະບານລາວ, ເປົ້າໝາຍພັດທະນາແບບຍືນຍົງ ອັນດັບທີ 18, ເປົ້າໝາຍ 18.2 | ກວດກູ້ ລບຕ ທີ່ຕົກຄ້າງທັງໝົດທີ່ຮູ້ຈັກ **ຢູ່ໃນດິນບູລິມະສິດສູງ ແລະ ບ້ານ "ທີ່ທຸກຍາກ"** ໃຫ້ສຳເລັດໃນປີ 2030. |
| **ເອກະສານນະໂຍບາຍທີ່ກ່ຽວຂ້ອງ** | | | | |
| | 2011 | ແຜນພັດທະນາ ເສດຖະກິດ-ສັງຄົມ 5 ປີ ຄັ້ງທີ 7 (ແຜນ 7) ປີ 2011-2015 | | ບໍ່ໄດ້ກ່າວເຖິງການກວດກູ້ ລບຕ |

| | | | | |
|---|---|---|---|---|
| | 2016 | ແຜນພັດທະນາ ເສດຖະກິດ-ສັງຄົມ 5 ປີ ຄັ້ງທີ 8 (ແຜນ 8) ປີ 2016-2020 | | ບໍ່ໄດ້ກ່າວເຖີງການກວດກູ້ ລບຕ |
| | 2011 | ໂຄງການລົງທຶນຂອງລັດຖະບານ (PIP) | | ບໍ່ສາມາດເຫັນລາຍລະອຽດ |
| | 2016 | ໂຄງການລົງທຶນຂອງລັດຖະບານ (PIP) | | ບໍ່ສາມາດເຫັນລາຍລະອຽດ |
| | 2011 | ແຜນພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ<br>(2011-15) | | ບໍ່ໄດ້ກ່າວເຖີງການກວດກູ້ ລບຕ |
| | 2016 | ແຜນພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ (2016-2020) | | ຂະແໜງການແກ້ໄຂບັນຫາ ລບຕ ຖືກເຖີງວ່າເປັນໜຶ່ງໃນສາມຄວາມຮັບຜິດຊອບຂອງຄະນະກຳມະການແຫ່ງຊາດ ເພື່ອການພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ຄຽງຄູ່ກັບການສ້າງຄວາມເຂັ້ມແຂງທາງການເມືອງຢູ່ຂັ້ນຮາກຖານ ແລະ ການພັດທະນາຊົນນະບົດ. |

ເອກະສານຊ້ອນທ້າຍ 4: ຕາຕະລາງກ່ຽວກັບບັນທັດຖານການປະເມີນບູລິມະສິດການກວດກູ້ ລບຕ (ອົງການກວດກູ້ ລບຕ ທັງໝົດ)

| | ບັນທັດຖານ | ບັນດາອົງການປະຕິບັດງານກວດກູ້ ລບຕ ທີ່ໃຊ້ບັນທັດຖານນີ້ |
|---|---|---|
| 1 | ການມີ ລບຕ | ຄກລ; ຮໍໂລ |
| 2 | ກ່ຽວກັບແຜນພັດທະນາ (ອົງການຈັດຕັ້ງທີ່ບໍ່ສັງກັດລັດ, ເມືອງ, ບ້ານ) | ຮໍໂລ; ແມັກ; ແອັນ ພີ ເອ |
| 3 | ປະຫວັດການເກີດອຸປະຕິເຫດ | ແມັກ; ແອັນ ພີ ເອ |
| 4 | ພື້ນທີ່ໃກ້ຄຽງກັບທີ່ຢູ່ອາໄສ | ແມັກ |
| 5 | ລະດັບຂອງຄວາມຢ້ານກົວ | ແມັກ; ແອັນ ພີ ເອ |
| 6 | ຜູ້ໄດ້ຮັບຜົນປະໂຫຍດ ຖານະ [ທາງເສດຖະກິດ] | ຮໍໂລ; ແມັກ; ແອັນ ພີ ເອ |
| 7 | ກິດຈະກຳຫຼັກໃນການສ້າງລາຍຮັບຂອງບ້ານ | ແອັນ ພີ ເອ |
| 8 | ຈຳນວນຜູ້ໄດ້ຮັບຜົນປະໂຫຍດ | ຮໍໂລ; ແອັນ ພີ ເອ |
| 9 | ສະຖານະພາບການຖືກຳມະສິດທີ່ດິນ; ຂໍ້ຜິດພາດ | ແອັນ ພີ ເອ |
| 10 | ລະດັບການຕົກຄ້າງຂອງ ລບຕ | ແອັນ ພີ ເອ |
| 11 | ຂະໜາດຂອງພື້ນທີ່ ທີ່ຢືນຢັນວ່າມີ ລບຕ | ແອັນ ພີ ເອ |
| 12 | ແນວໂນ້ມການປ່ຽນແປງໃນການນຳໃຊ້ດິນ | ແອັນ ພີ ເອ |
| 13 | ການນຳໃຊ້ດິນ ພາຍຫຼັງການກວດກູ້ | ຮໍໂລ; ແມັກ |

**ຂໍ້ສັງເກດ**: ບໍ່ມີຂໍ້ມູນສະເພາະທີ່ໄດ້ຮັບຈາກອົງການສາກົນ ເພື່ອຄົ້ນພິການ. ຄກລ ບໍ່ມີເຄື່ອງມືທີ່ປັບປຸງຫຼ້າສຸດ ເພື່ອປະເມີນບູລິມະສິດໜ້າວຽກກວດກູ້ ລບຕ.

ເອກະສານຊ້ອນທ້າຍ 5: ພາລະບົດບາດຂອງທີມງານການຄົ້ນຄວ້າ

# ການສຶກສາຄົ້ນຄວ້າກ່ຽວກັບການຈັດບູລິມະສິດຢູ່ ສປປ ລາວ

## ຄໍານໍາ

ໃນຖານະທີ່ເປັນສ່ວນໜຶ່ງຂອງໂຄງການສ້າງຄວາມອາດສາມາດ ສູນກາງເກັບກູ້ລະເບີດເພື່ອມະນຸດສະທໍາສາກົນ ເຈນີວາ ໄດ້ໃຫ້ການສະໜັບສະໜູນ, ຊ່ວຍເຫຼືອລັດຖະບານ ສປປ ລາວ ດ້ວຍການພັດທະນາລະບຽບການແຫ່ງຊາດ ທີ່ປະສົມປະສານວຽກງານສໍາຫຼວດ ແລະ ກວດກູ້ ລບຕ ເຂົ້າກັບໂຄງການ ແລະ ບູລິມະສິດໃນການພັດທະນາຂອງລັດຖະບານ. ເນື່ອງຈາກລັກສະນະ ແລະ ຄວາມສັບຊ້ອນຂອງການປະຕິບັດງານຢູ່ໃນປະເທດ, ການສ້າງແຜນທີ ແລະ ການບັນທຶກລະບຽບການໃນປັດຈຸບັນ, ໂດຍເປັນຄູ່ຮ່ວມງານກັບຄະນະກໍາມະການຄຸ້ມຄອງແຫ່ງຊາດ (ຄຊກລ) ປະກອບກັບການແນະນໍາທາງການຕ່າງໆ ຈຶ່ງຄິດວ່າການສຶກສາຄົ້ນຄວ້າໃນຄັ້ງນີ້ ຈະເປັນວິທີການໜຶ່ງ ທີ່ມີປະສິດທິຜົນທີ່ສຸດໃນການໃຫ້ການສະໜັບສະໜູນໃນຊ່ວງເວລານີ້. ຄວາມຄາດຫວັງຂອງການສຶກສາຄົ້ນຄ້ວາໃນຄັ້ງນີ້ ກໍເພື່ອຊ່ວຍເຮັດໃຫ້ການປະຕິບັດງານຂອງຂະແໜງແກ້ໄຂບັນຫາ ລບຕ ມີປະສິດທິພາບ ແລະ ມີຄວາມກ້າວໜ້າ ໃນການຈັດບູລິມະສິດ, ການວາງແຜນ, ການລະດົມທຶນ ກໍຄືການສ້າງມາດຕະການຕ່າງໆໃນອະນາຄົດ.

## ທີມງານ

ການຄົ້ນຄ້ວາໃນຄັ້ງນີ້ໄດ້ຖືກມອບໝາຍໃຫ້ດໍາເນີນການໂດຍໜຶ່ງທີມງານທີ່ມີສອງຄົນ ປະກອບດ້ວຍນັກຄົ້ນຄວ້າຝ່າຍລາວໜຶ່ງທ່ານຈາກຫ້ອງການ ຄຊກລ ແລະ ຊ່ຽວຊານດ້ານການພັດທະນາສາກົນ (ທີ່ເວົ້າພາສາລາວໄດ້) ໜຶ່ງທ່ານ. ໂຄງສ້າງຂອງທີມງານແມ່ນໄດ້ຮັບອະນຸມັດຈາກ ຄຊກລ ກ່ອນທີ່ກິດຈະກໍາຈະຖືກຈັດຕັ້ງປະຕິບັດ. ບົດລາຍງານຈະເປັນພາສາລາວ ແລະ ພາສາອັງກິດ.

## ຈຸດປະສົງ

ຈຸດປະສົງຫຼັກກໍຄື ເພື່ອສືບຕໍ່ສ້າງຄວາມຄືບໜ້າໃນການພັດທະນາລະບຽບການ ໂດຍປະສົມປະສານກິດຈະກໍາການແກ້ໄຂບັນຫາ ລບຕ (ການສໍາຫຼວດ ແລະ ການກວດກູ້) ເພື່ອສ້າງແຜນການສໍາຫຼວດ ແລະ ກວດກູ້. ຈຸດປະສົງສະເພາະກໍຄື ເພື່ອຄົ້ນ
ຄ້ວາ ແລະ ສັງລວມບັນດາແນວທາງຕ່າງໆທີ່ມີຢູ່ໃນປັດຈຸບັນຢ່າງມີປະສິດທິຜົນ.

## ຜົນໄດ້ຮັບ

ຜົນໄດ້ຮັບຫຼັກຂອງການຄົ້ນຄວ້າໃນຄັ້ງນີ້ ແມ່ນບົດລາຍງານທີ່ສັງລວມແນວທາງໃນປັດຈຸບັນຢ່າງມີປະສິດທິຜົນ. ບັນດາລະບຽບການ ແລະ ແນວທາງທີ່ສໍາຄັນທີ່ຈະຖືກນໍາມາຄົ້ນຄ້ວາໃນຄັ້ງນີ້ ມີ (ແຕ່ວ່າຈະບໍ່ຈໍາກັດພຽງແຕ່ເທົ່ານີ້):

- ລະບຽບການແຫ່ງຊາດທີ່ເປັນທາງການກ່ຽວຂ້ອງກັບການຈັດໜ້າວຽກ ແລະ ການຈັດບູລິມະສິດ ທີ່ໄດ້ສັງລວມໄວ້ຢູ່ໃນແຜນຍຸດທະສາດແຫ່ງຊາດທີ່ກ່ຽວຂ້ອງ;
- ບັນດາບູລິມະສິດແຫ່ງຊາດທີ່ສະໜອງໃຫ້ຢ່າງເປັນທາງການ ໂດຍຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ.
- ລະບຽບການກ່ຽວກັບການຈັດສັນໜ້າວຽກທີ່ໄດ້ຮັບຮອງຢ່າງເປັນທາງການ ໂດຍຄະນະກໍາມະການຄຸ້ມຄອງແຫ່ງຊາດ ເພື່ອການແກ້ໄຂບັນຫາລະເບີດບໍ່ທັນແຕກ (ຄຊກລ);
- ລະບຽບການ ແລະ ການປະຕິບັດຕົວຈິງກ່ຽວກັບການຈັດໜ້າວຽກທີ່ໄດ້ຮັບຮອງຢ່າງເປັນທາງການ ໂດຍອົງການປະຕິບັດງານແຫ່ງຊາດ ແລະ ອົງການປະຕິບັດງານສາກົນ;
- ອີງໃສ່ກໍລະນີສຶກສາ ຢູ່ໃນໜຶ່ງ ຫຼື ຫຼາຍກວ່າໜຶ່ງແຂວງ;

- o ບັນດາລະບຽບການປັດຈຸບັນທີ່ໄດ້ຮັບຮອງໂດຍອຳນາດການປົກຄອງຂັ້ນບ້ານ, ເມືອງ ແລະ ແຂວງ ຫຼື ຂັ້ນຂະແໜງການ ເຊັ່ນ: ຫ້ອງການ ຄຊກລ ແຂວງ, ຄະນະກຳມະການພັດທະນາຂັ້ນແຂວງ ແລະ ຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ;
- o ລະບຽບການ ແລະ ການປະຕິບັດຕົວຈິງທີ່ນຳໃຊ້ໂດຍອົງການປະຕິບັດງານແຫ່ງຊາດໃນທຸກລະດັບ, (ອາດລວມທັງການປະເມີນຜົນທາງດ້ານວິຊາການກ່ຽວກັບລະບຽບການທີ່ບໍ່ເປັນທາງການ ທີ່ອາດຈະປະກົດຂຶ້ນໃນລະດັບຕ່າງໆຢູ່ບັນດາແຂວງ);
- o ລະບຽບການ ແລະ ການປະຕິບັດຕົວຈິງທີ່ໄດ້ນຳໃຊ້ຢູ່ໃນບັນດາອົງການປະຕິບັດງານຂອງສາກົນໃນທຸກລະດັບ;
- o ຜູ້ໄດ້ຮັບຜົນປະໂຫຍດ ແລະ ຜູ້ນຳໃຊ້ດິນເຂົ້າໃຈວ່າ ບັນຫາ ລບຕ ໄດ້ຖືກແກ້ໄຂວິທີໃດ ແລະ ໃຜເປັນຜູ້ຮັບຜິດຊອບໃນການແກ້ໄຂ.

ເມື່ອສຳເລັດການຄົ້ນຄວ້າ, ບັນດາຂໍ້ສະຫຼຸບ ແລະ ຂໍ້ແນະນຳຕ່າງໆກ່ຽວກັບວິທີປັບປຸງ ຫຼື ພັດທະນາ ຫຼື ການປະສົມປະສານກິດຈະກຳການສຳຫຼວດ ແລະ ກວດກູ້ ລບຕ ເຂົ້າກັບບູລິມະສິດຂອງການພັດທະນາ ຈະຖືກຕອບສະໜອງດ້ວຍວິທີໃດ. ກິດຈະກຳສະເພາະທີ່ຈະໄດ້ປະຕິບັດເພື່ອໃຫ້ບັນລຸຜົນ (ແຕ່ຈະບໍ່ຈຳກັດພຽງເທົ່ານີ້);

- ປະຊຸມລິເລີ່ມກັບ ຄຊກລ ເພື່ອສັງລວມໂຄງການ ແລະ ເຈລະຈາ/ປຶກສາຫາລື ກ່ຽວກັບລະດັບການມີສ່ວນຮ່ວມຂອງ ຄຊກລ ໃນການຄົ້ນຄວ້າ ແລະ ເກັບກຳຂໍ້ມູນ.
- ການເຫັນດີຂອງ ຄຊກລ ກ່ຽວກັບພາລະບົດບາດຂອງທີມງານຄົ້ນຄວ້າ.
- ທົບທວນແຜນຍຸດທະສາດ [ເສັ້ນທາງກ້າວສູ່ຄວາມປອດໄພ II; ແຜນວຽກຫຼາຍປີຂອງຂະແໜງການແກ້ໄຂບັນຫາ ລບຕ] ລວມທັງແຜນທີ່ຂອງຈຸດສຸມພັດທະນາ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 2016-2020. ທົບທວນບັນດາທິດທາງນະໂຍບາຍທາງການ ທີ່ອອກໂດຍກົມກອງຕ່າງໆຂອງລັດຖະບານໃນລະດັບຊາດ.
- ທົບທວນຍຸດທະສາດຂອງສາກົນທີ່ກ່ຽວຂ້ອງ ແລະ ບັນດາສິ່ງພິມຕ່າງໆທີ່ອ້າງອີງເຖິງບັນຫາ ລບຕ.
- ທົບທວນຜົນກະທົບຕາມມາຂອງ 'ການໃຫ້ທຶນແບບກຳນົດເງື່ອນໄຂ ແລະ/ຫຼື ທີ່ຕັ້ງຂອງ 'ການກຳນົດເງື່ອນໄຂ' ຂອງການປະຕິບັດງານ, ຄູ່ຮ່ວມງານ, ນິຕິບຸກຄົນດ້ານການພັດທະນາ.
- ກວດກາຈຸດສຸມພັດທະນາກັບໂຄງການລົງທຶນຂອງລັດທີ່ຄຸ້ມຄອງໂດຍກະຊວງແຜນການ ແລະ ການລົງທຶນ.
- ກວດກາຈຸດສຸມພັດທະນາ ປີ 2011 ກັບຖານຂໍ້ມູນອິມສະມາ/ໂຄງການລົງທຶນ ເພື່ອກຳນົດ ຫຼື ອາດຈະທັບຊ້ອນກັນ (ແຜນທີ່ປະເທດ).
- ສຳພາດເຈົ້າໜ້າທີ່ຫ້ອງການຄະນະກຳມະການຄຸ້ມຄອງແຫ່ງຊາດ (ຄຊກລ), ທົບທວນເອກະສານທີ່ກ່ຽວຂ້ອງກັບການຈັດບູລິມະສິດຂອງ ຄຊກລ.
- ພົວພັນ/ສຳພາດຕາງໜ້າຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ , ຂໍບັນຊີຈຸດສຸມພັດທະນາສະບັບປັບປຸງຫຼ້າສຸດ, ແລະນະໂຍບາຍພັດທະນຊົນນະບົດໃໝ່, ບັນດາບູລິມາສິດ, ແລະແຜນການ.
- ພົວພັນ/ສຳພາດຕາງໜ້າຈາກຄະນະກຳມະການພັດທະນາຂອງແຂວງ.
- ພົວພັນ/ສຳພາດຕາງໜ້າຫ້ອງການພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ (ຂັ້ນແຂວງ ແລະ ຂັ້ນເມືອງ).
- ສຳພາດຄະນະບ້ານ ທີ່ຢູ່ໃນ ແລະ ນອກຈຸດສຸມພັດທະນາ.
- ສຳພາດຄູ່ຮ່ວມປະຕິບັດງານແຫ່ງຊາດທີ່ສຳຄັນ (ຄກລ).
- ສຳພາດບໍ່ເປັນທາງການ ຄູ່ຮ່ວມງານ ແລະ ຜູ້ມີສ່ວນຮ່ວມກ່ຽວກັບຄວາມເຂົ້າໃຈທີ່ຖືກຕ້ອງກ່ຽວກັບການປະຕິບັດຮ່ວມກັນລະຫວ່າງຊຸມຊົນທ້ອງຖິ່ນ ແລະ ການຈັດບູລິມະສິດຂອງ ຄກລ ຢູ່ຂັ້ນເມືອງ, ຂັ້ນແຂວງ.
- ຈັດກອງປະຊຸມຕິດຕາມຮ່ວມກັບຜູ້ມີສ່ວນຮ່ວມ ສາກົນ ແລະ ຄູ່ຮ່ວມປະຕິບັດງານ (ກະຊວງແຜນການ ແລະ ການລົງທຶນ, ທະນາຄານໂລກ, ທະນາຄານພັດທະນາອາຊີ, ອົງການຊ່ວຍເຫຼືອ

ຂອງປະຊາຊົນ ນໍອກແວຣ໌, ອົງການ ແມັກ, ອົງການ ເຣໂລ ທຣາສ໌ທ໌ ກຸ່ມບໍລິສັດສະເຕີລິງສາກົນ, ອົງການ ສປຊ ເພື່ອການພັດທະນາ)

- ລວບລວມໂຄງຮ່າງການຈັດຕັ້ງຂອງຂະແໜງແກ້ໄຂບັນຫາ ລບຕ ຂອງ ສປປ ລາວ ທີ່ຊີ້ໃຫ້ເຫັນຕໍາແໜ່ງຂອງຜູ້ມີສ່ວນຮ່ວມ ແລະ ການປະຕິບັດງານຮ່ວມກັນ.
- ສັງລວມສິ່ງທີ່ພົບເຫັນກ່ຽວກັບການປະຕິບັດຮ່ວມກັນຂອງຜູ້ມີສ່ວນຮ່ວມ (ລວມທັງອົງການຕ່າງໆຖ້າຈໍາເປັນ);
- ຂຽນບົດລາຍງານ. ບົດລາຍງານທີ່ກະທັດລັດ (ແຕ່ກວມເນື້ອໃນສົມບູນ) ຊຶ່ງຈະລວມເອົາຂະບວນການສໍາຄັນຕ່າງໆລະດັບຊາດ.

Geneva International Centre for Humanitarian Demining
Maison de la paix, Tower 3
Chemin Eugène-Rigot 2C
PO Box 1300
1211 Geneva 1, Switzerland
info@gichd.org

Follow us on:
Gichd.org
Facebook
Twitter
Linkedin
youtube